ບໍລິສັດ ລາວອາໂກຣເທັກ ມະຫາຊົນ
Lao Agro Tech Public Company
ບ້ານ ໜອງຄັນຄູ, ເມືອງ ນາຊາຍທອງ, ນະຄອນຫຼວງວຽງຈັນ. ໂທລະສັບ: 030 9882809, ແຟັກ:(856-21)
BAN NONGKUNKU, NAXAYTHONG DISTRICT, VIENTIANE CAPITAL. TEL: 030 9882809, FAX: (856-21)

ເລກທີ 045 /ລອທ

ນະຄອນຫຼວງວຽງຈັນ,ວັນທີ: 09 APR 2026

ໜັງສືແຈ້ງເຊີນ

ຮຽນ: ທ່ານ ຜູ້ຖືຮຸ້ນ ຂອງ ບໍລິສັດ ລາວອາໂກຣເທັກ ມະຫາຊົນ, ທີ່ນັບຖື

ເລື່ອງ: ເຊີນເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2025

- ອີງຕາມການຕົກລົງເຫັນດີຂອງກອງປະຊຸມສະມາຊິກສະພາບໍລິຫານ ສະໄໝສາມັນຄັ້ງທີ 01 ປະຈຳປີ 2026, ລົງວັນທີ 20 ກຸມພາ 2026.

ບໍລິສັດ ລາວອາໂກຣເທັກ ມະຫາຊົນ ("ບໍລິສັດ") ຂໍຖືເປັນກຽດຮຽນເຊີນ ທ່ານ ຜູ້ຖືຮຸ້ນຂອງບໍລິສັດເຂົ້າຮ່ວມ **ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2025 ໃນວັນທີ 27 ເມສາ 2026 ເວລາ 15:00 ໂມງ (ເລີ່ມລົງທະບຽນ ເວລາ 14:30 ໂມງ) ຢູ່ທີ່ຕະຫຼາດຫຼັກຊັບລາວ, ຫ້ອງປະຊຸມຊັ້ນ 08, ບ້ານໂພນທັນເໜືອ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ.** ກອງປະຊຸມຈະໄດ້ພິຈາລະນາ ແລະ ຮັບຮອງເອົາບັນຫາຕ່າງໆ ຕາມວາລະກອງປະຊຸມທີ່ໄດ້ຄັດຕິດມາພ້ອມນີ້ ແລະ ບໍລິສັດໄດ້ແຈ້ງວັນ, ເວລາ, ສະຖານທີ່ ແລະ ວາລະກອງປະຊຸມຜູ້ຖືຮຸ້ນປະຈຳປີ 2025 ຜ່ານລະບົບຂໍ້ມູນຂ່າວສານຂອງຕະຫຼາດຫຼັກຊັບລາວ (www.lsx.com.la).

ຫວັງຢ່າງຍິ່ງວ່າ ທ່ານຄົງສະຫຼະເວລາອັນມີຄ່າເຂົ້າຮ່ວມກອງປະຊຸມຄັ້ງນີ້ດ້ວຍ.

ດ້ວຍຄວາມນັບຖືຢ່າງສູງ

ຜູ້ອຳນວຍການໃຫຍ່

ບໍລິສັດ ລາວ ອາໂກຣເທັກ ມະຫາຊົນ Lao Agro Tech Public Company

ປອ. ເລດ ພັດທະນະມາດ

ເອກະສານຄັດຕິດ

1. ວາລະກອງປະຊຸມຜູ້ຖືຮຸ້ນປະຈຳປີ 2025
2. ໃບມອບສັນທະ
3. ຄຳແນະນຳກ່ຽວກັບເອກະສານ, ການລົງຄະແນນສຽງ ແລະ ຫຼັກຖານທີ່ຕ້ອງນຳມາສະເໜີໂຕເພື່ອເຂົ້າຮ່ວມກອງປະຊຸມ, ການມອບໝາຍ ແລະ ຄຳແນະນຳກ່ຽວກັບການລົງຄະແນນສຽງ
4. ຊີວະປະຫວັດຫຍໍ້ຂອງສະມາຊິກສະພາບໍລິຫານ
5. ເອກະສານປະກອບວາລະທີ 1: ບົດບັນທຶກກອງປະຊຸມຜູ້ຖືຮຸ້ນປະຈຳປີ 2024
6. ເອກະສານປະກອບວາລະທີ 2: ບົດລາຍງານການເງິນຂອງບໍລິສັດ ປະຈຳປີ 2025
7. ເອກະສານປະກອບວາລະທີ 3: ແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2026.
8. ແຜນທີ່ສະຖານທີ່ຈັດກອງປະຊຸມ

ໝາຍເຫດ:

1. ຜູ້ຖືຮຸ້ນທຸກທ່ານ ສາມາດດາວໂຫຼດເອົາໜັງສືເຊີນປະຊຸມພ້ອມເອກະສານຄັດຕິດຕ່າງໆໃນເວັບໄຊທ໌ ຂອງຕະຫຼາດຫຼັກຊັບລາວ ຫຼື ສາມາດໄປຮັບເອົາເອງຮັບເອົາດ້ວຍຕົວທ່ານເອງໄດ້ທີ່ ອາຄານຕະຫຼາດຫຼັກຊັບລາວ ຊັ້ນ 4 ພະແນກຊຳລະສະສາງ ແລະ ຮັບຝາກຫຼັກຊັບ, ບ້ານ ໂພນທັນເໜືອ, ຖະໜົນ ກຳແພງເມືອງ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ໂທລະສັບ: (856-21) 454361-4;
2. ສຳລັບທ່ານຜູ້ຖືຮຸ້ນທີ່ຈະເຂົ້າຮ່ວມປະຊຸມດ້ວຍຕົນເອງກະລຸນານຳບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຜູ້ຖືຮຸ້ນຄົນຕ່າງປະເທດ) ມາໃນວັນປະຊຸມເພື່ອສະເໜີໂຕໃນການເຂົ້າຮ່ວມກອງປະຊຸມ;
3. ສຳລັບທ່ານຜູ້ຖືຮຸ້ນທີ່ຈະໃຫ້ຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງແທນ ກະລຸນາປະກອບຂໍ້ມູນ ແລະ ລົງລາຍເຊັນໃນ **ໃບມອບສັນທະ** ທີ່ຄັດຕິດມາພ້ອມນີ້ໃຫ້ຖືກຕ້ອງຄົບຖ້ວນ, ໃນກໍລະນີທີ່ຜູ້ຖືຮຸ້ນຈະມອບໝາຍໃຫ້ສະມາຊິກສະພາບໍລິຫານອິດສະຫຼະຂອງບໍລິສັດເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງແທນ, ກະລຸນາປະກອບຂໍ້ມູນ ແລະ ລົງລາຍເຊັນໃນໃບມອບສັນທະ ແລະ ເລືອກເອົາສະມາຊິກສະພາບໍລິຫານອິດສະຫຼະຂອງບໍລິສັດທ່ານໃດທ່ານໜຶ່ງເປັນຜູ້ຕາງໜ້າ ແລະ ສົ່ງໃບສັນທະດັ່ງກ່າວພ້ອມເອກະສານຕິດຂັດ ສົ່ງເຖິງ ບໍລິສັດ ລາວອາໂກຣເທັກ ມະຫາຊົນ, ສຳນັກງານຕັ້ງຢູ່ບ້ານໜອງຄັນຄູ, ເມືອງນາຊາຍທອງ, ນະຄອນຫຼວງວຽງຈັນ ກ່ອນວັນທີ 20 ເມສາ 2026, ກະລຸນາເບິ່ງເອກະສານຕິດຂັດ ເລື່ອງເອກະສານ ແລະ ຫຼັກຖານທີ່ຜູ້ເຂົ້າຮ່ວມກອງປະຊຸມຕ້ອງໃຊ້ເພື່ອການສະເໜີໂຕ ໃນການເຂົ້າຮ່ວມກອງປະຊຸມ, ການມອບໝາຍ ແລະ ການລົງຄະແນນສຽງໃນກອງປະຊຸມຜູ້ຖືຮຸ້ນເພີ່ມຕື່ມ ໃນໜັງສືແຈ້ງເຊີນສະບັບນີ້;
4. ຖ້າທ່ານໃດມີຂໍ້ສົງໄສ ແລະ ຄຳຖາມກ່ຽວກັບໃບມອບສິດ ລວມທັງລາຍລະອຽດໃນໜັງສືເຊີນປະຊຸມ ທ່ານ ສາມາດສອບຖາມ ທ່ານ ວັນສະເຫຼີມ ສີສຸຄຳມັ່ງ ໂທ: (856-20) 5533 5311 ໃນໂມງລັດຖະການ.

<u>ວາລະທີ 1</u> ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2024.

<u>ລາຍລະອຽດ</u>: ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2024 ໄດ້ຈັດຂຶ້ນໃນວັນທີ 28 ເມສາ 2025, ເຊິ່ງບໍລິສັດໄດ້ບັນທຶກກອງປະຊຸມດັ່ງກ່າວໂດຍມີລາຍລະອຽດຕາມ ເອກະສານປະກອບວາລະທີ 1.

<u>ຄຳເຫັນຂອງສະພາບໍລິຫານ</u>: ບົດບັນທຶກກອງປະຊຸມມີຄວາມຖືກຕ້ອງ ແລະ ຄົບຖ້ວນແລ້ວເຫັນວ່າກອງປະຊຸມສາມັນຜູ້ຖືຮຸ້ນຄວນພິຈາລະນາ ແລະ ຮັບຮອງເອົາບົດບັນທຶກກອງປະຊຸມຜູ້ຖືຮຸ້ນປະຈຳປີ 2024.

<u>ຄະແນນສຽງທີ່ຕ້ອງໃຊ້</u>: ກົດໝາຍວິສາຫະກິດກຳນົດໄວ້ວ່າວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

<u>ວາລະທີ 2</u> ພິຈາລະນາ ແລະ ຮັບຮອງ ຜົນການດຳເນີນທຸລະກິດປະຈຳປີ 2025 ແລະ ເອກະສານລາຍງານການເງິນຂອງບໍລິສັດ ປະຈຳປີ 2025.

ກົດໝາຍວ່າດ້ວຍວິສາຫະກິດ (ສະບັບປັບປຸງ) ເລກທີ 33/ສພຊ, ລົງວັນທີ 29 ທັນວາ 2022 ມາດຕາທີ 152 ກຳນົດໃຫ້ "ກອງປະຊຸມຜູ້ຖືຮຸ້ນມີສິດ ແລະ ຫນ້າທີ່ໃນການຮັບຮອງຜົນການດຳເນີນທຸລະກິດ ແລະ ເອກະສານລາຍງານການເງິນຂອງບໍລິສັດ" ໂດຍຜົນການດຳເນີນທຸລະກິດປະຈຳປີ 2025 ແລະ ເອກະສານລາຍງານການເງິນຂອງບໍລິສັດ ປະຈຳປີ 2025 ແມ່ນມີລາຍລະອຽດຕາມ ເອກະສານປະກອບວາລະທີ 2.

<u>ຄຳເຫັນຂອງສະພາບໍລິຫານ</u>: ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາ ແລະ ຮັບຮອງເອົາຜົນການດຳເນີນທຸລະກິດປະຈຳປີ 2025 ແລະ ເອກະສານລາຍງານການເງິນຂອງບໍລິສັດ ປະຈຳປີ 2025.

<u>ຄະແນນສຽງທີ່ຕ້ອງໃຊ້</u>: ກົດໝາຍວິສາຫະກິດກຳນົດໄວ້ວ່າວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

<u>ວາລະທີ 3</u> ພິຈາລະນາ ແລະ ຮັບຮອງ ແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2026.

ກົດໝາຍວ່າດ້ວຍວິສາຫະກິດ (ສະບັບປັບປຸງ) ເລກທີ 33/ສພຊ, ລົງວັນທີ 29 ທັນວາ 2022 ມາດຕາທີ 152 ກຳນົດໃຫ້ "ກອງປະຊຸມຜູ້ຖືຮຸ້ນມີສິດ ແລະ ຫນ້າທີ່ໃນການຮັບຮອງແຜນການດຳເນີນທຸລະກິດປະຈຳປີຂອງບໍລິສັດ" ໂດຍແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2026 ແມ່ນມີລາຍລະອຽດຕາມເອກະສານປະກອບວາລະທີ 3.

<u>ຄຳເຫັນຂອງສະພາບໍລິຫານ</u>: ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາ ແລະ ຮັບຮອງເອົາແຜນການດຳເນີນທຸລະກິດປະຈຳປີ 2026.

ຄະແນນສຽງທີ່ຕ້ອງໃຊ້: ກົດໝາຍວິສາຫະກິດກຳນົດໄວ້ວ່າວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກວ່າ ເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 4 ພິຈາລະນາ ແລະ ຮັບຮອງການບໍ່ຈ່າຍເງິນປັນຜົນຈາກການດຳເນີນທຸລະກິດ ປະຈຳປີ 2025;

ຄຳເຫັນຂອງສະພາບໍລິຫານ: ມີຄວາມເຫັນວ່າບໍລິສັດຂາດທຶນຈາກການດຳເນີນທຸລະກິດ ໃນປີ 2025 ຈຳນວນ (5,257.17) ລ້ານກີບ ແລະ ອີງຕາມກົດໝາຍວ່າດ້ວຍວິສາຫະກິດ (ສະບັບປັບປຸງ) ເລກທີ 33/ສພຊ, ລົງວັນທີ 29 ທັນວາ 2022 ມາດຕາ 153 "ການແບ່ງເງິນປັນຜົນ" ຫ້າມບໍ່ໃຫ້ບໍລິສັດຈ່າຍເງິນປັນຜົນເມື່ອບໍລິສັດຍັງຂາດທຶນໃນຊຸມປີຜ່ານມາ, ດັ່ງນັ້ນ ສະພາບໍລິຫານເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາ ແລະ ຮັບຮອງໃຫ້ບໍ່ມີການຈ່າຍເງິນປັນຜົນ ຈາກການດຳເນີນທຸລະກິດ ປະຈຳປີ 2025.

ຄະແນນສຽງທີ່ຕ້ອງໃຊ້: ກົດໝາຍວິສາຫະກິດກຳນົດໄວ້ວ່າວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 5 ພິຈາລະນາ ແລະ ອະນຸມັດການແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ການກຳນົດຄ່າຈ້າງຂອງຜູ້ກວດສອບບັນຊີພາຍນອກ ປີ 2026.

ລາຍລະອຽດ: ກົດໝາຍວ່າດ້ວຍວິສາຫະກິດ (ສະບັບປັບປຸງ) ເລກທີ 33/ສພຊ, ລົງວັນທີ 29 ທັນວາ 2022 ມາດຕາທີ 152 ກຳນົດໃຫ້ "ກອງປະຊຸມຜູ້ຖືຮຸ້ນມີສິດ ແລະ ໜ້າທີ່ກຳນົດເອົາຜູ້ກວດສອບບັນຊີພາຍນອກ ແລະ ກຳນົດຄ່າຕອບແທນສຳຫຼັບການກວດສອບບັນຊີປະຈຳປີ".

ຄຳເຫັນຂອງສະພາບໍລິຫານ: ເຫັນວ່າກອງປະຊຸມຜູ້ຖືຮຸ້ນຄວນແຕ່ງຕັ້ງ ບໍລິສັດ ພຣາຍສວໍເຕີເຮົ້າສກຸບເປີສ (ລາວ) ຈຳກັດຜູ້ດຽວ (PriceWaterHouseCoopers (Lao) Sole Co.,Ltd.) ເປັນຜູ້ກວດສອບບັນຊີພາຍນອກຂອງບໍລິສັດ ປະຈຳປີ 2026 ໂດຍມີຄ່າບໍລິການເປັນຈຳນວນບໍ່ກາຍ 18,000ໂດລາສະຫະລັດ. ເນື່ອງຈາກ ບໍລິສັດ ພຣາຍສວໍເຈີເຮົ້າສກຸບເປີສ(ລາວ)ຈຳກັດຜູ້ດຽວ ແມ່ນຜູ້ກວດສອບບັນຊີໃຫ້ແກ່ບໍລິສັດມາແຕ່ການຈຳໜ່າຍຮຸ້ນໃຫ້ແກ່ມວນຊົນຄັ້ງທຳອິດ, ມີປະສົບການ, ມີຄວາມລະອຽດຮອບຄອບ, ມີຄວາມຊື່ສັດສຸດຈະລິດໃນໜ້າທີ່ ແລະ ເປັນບໍລິສັດກວດສອບບັນຊີທີ່ໄດ້ມາດຕະຖານ ລວມທັງໄດ້ຮັບຄວາມໄວ້ວາງໃຈໃນລະດັບສາກົນ.

ຊຶ່ງມີລາຍລະອຽດຄ່າຈ້າງແຕ່ລະປີດັ່ງລຸ່ມນີ້:

ປີ	ມູນຄ່າການກວດສອບ
2018	43,000
2019	41,000
2020	38,000
2021	36,000
2022	26,000
2023	26,000
2024	24,000
2025	18,000

ຄະແນນສຽງທີ່ຕ້ອງໃຊ້: ກົດໝາຍວິສາຫະກິດການິດໄວ້ວ່າວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 6 ພິຈາລະນາແຕ່ງຕັ້ງສະມາຊິກສະພາບໍລິຫານແທນສະມາຊິກສະພາບໍລິຫານທີ່ຄົບວາລະ.

ອີງໃສ່ຂໍ້ຕົກລົງວ່າດ້ວຍສະພາບໍລິຫານ ເລກທີ 10/ຄຄຊ, ລົງວັນທີ 26 ເມສາ 2019, (ມາດຕາທີ 13 ສະບັບປັບປຸງ) ກຳນົດໃຫ້ສະມາຊິກສະພາບໍລິຫານ ຂອງບໍລິສັດມີອາຍຸການສອງປີ ແລະ ສາມາດເລືອກຕັ້ງຄືນໃຫມ່ໄດ້" ເຊິ່ງໃນກອງປະຊຸມໃນເທື່ອນີ້ມີສະມາຊິກສະພາບໍລິຫານທັງໝົດ 6 ທ່ານ, ຊຶ່ງໃນນີ້ມີ 3 ທ່ານໄດ້ດຳລົງຕຳແໜ່ງຄົບກຳນົດແລ້ວ. ໂດຍມີລາຍຊື່ດັ່ງນີ້:

1. ທ່ານ ອະພິສິດ ຮຸຈິກຽດກຳຈອນ ປະທານສະພາບໍລິຫານ ແລະ ສະມາຊິກອິດສະຫຼະ
2. ທ່ານ ພິງຖານ ພິດຈຳນົງ ສະມາຊິກສະພາບໍລິຫານ
3. ທ່ານ ທະນະເສດ ມາລະວັນໂນ ສະມາຊິກສະພາບໍລິຫານ

ທ່ານ ທະນະເສດ ມາລະວັນໂນ ໄດ້ໝົດວາລະຈາກການເປັນສະມາຊິກສະພາບໍລິຫານ ແລະ ໄດ້ດຳລົງຕຳແໜ່ງຄົບວາລະໃນສະພາບໍລິຫານ ລອຫ, ສ່ວນກຳມະການທ່ານອື່ນ ຍັງຄົງບໍ່ປ່ຽນແປງ. ສະນັ້ນ ລອຫ ຈຶ່ງສະເໜີກອງປະຊຸມຜູ້ຖືຮຸ້ນພິຈາລະນາຮັບຮອງການແຕ່ງຕັ້ງດັ່ງກ່າວ ເພື່ອໃຫ້ສອດຄ່ອງກັບນິຕິກຳທີ່ກ່ຽວຂ້ອງ.

6.1 ພິຈາລະນາແຕ່ງຕັ້ງ ທ່ານ ອະພິສິດ ຮຸຈິກຽດກຳຈອນ ເປັນປະທານສະພາບໍລິຫານ ແລະ ສະມາຊິກ ອິດສະຫຼະຂອງບໍລິສັດ.

ຄຳເຫັນຂອງສະພາບໍລິຫານ: ເຫັນດີໃຫ້ແຕ່ງຕັ້ງທ່ານ ອະພິສິດ ຮຸຈິກຽດກຳຈອນ ປະທານສະພາບໍລິຫານຊຸດໃຫມ່ຂອງບໍລິສັດໂດຍມີອາຍຸການສອງປີ. ລາຍລະອຽດປະຫວັດໂດຍຫຍໍ້ຕາມເອກະສານປະກອບວາລະທີ 7.

ຄະແນນສຽງທີ່ຕ້ອງໃຊ້: ກົດໝາຍວິສາຫະກິດກຳນົດໄວ້ວ່າວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

6.2 ພິຈາລະນາການແຕ່ງຕັ້ງ ທ່ານ ພິງຖານ ພິດຈານິງ ເປັນສະມາຊິກສະພາບໍລິຫານຂອງບໍລິສັດ.

ຄຳເຫັນຂອງສະພາບໍລິຫານ: ເຫັນດີໃຫ້ແຕ່ງຕັ້ງ ທ່ານ ພິງຖານ ພິດຈຳນິງ ເປັນສະມາຊິກສະພາບໍລິຫານຊຸດໃຫມ່ຂອງບໍລິສັດໂດຍມີອາຍຸການສອງປີ. ລາຍລະອຽດປະຫວັດໂດຍຫຍໍ້ຕາມເອກະສານປະກອບວາລະທີ 7.

ຄະແນນສຽງທີ່ຕ້ອງໃຊ້: ກົດໝາຍວິສາຫະກິດກຳນົດໄວ້ວ່າວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 7 ເລື່ອງອື່ນໆ (ຖ້າມີ).

ວາລະກອງປະຊຸມ ແລະ ຄຳເຫັນຂອງສະພາບໍລິຫານດັ່ງກ່າວມາຂ້າງຕົ້ນນັ້ນ ສະມາຊິກອິດສະຫຼະບໍ່ມີຄຳເຫັນເປັນຢ່າງອື່ນ ສຳຫຼັບການປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2025 ທາງບໍລິສັດຈະເຊີນສຳນັກງານຄະນະການກວດກາ ຄຸ້ມຄອງຫຼັກຊັບ, ຕະຫຼາດຫຼັກຊັບລາວ, ຜູ້ກວດສອບບັນຊີພາຍນອກ ແລະ ແຕ່ງຕັ້ງຄະນະກຳມະການກວດກາ ການດຳເນີນກອງປະຊຸມ ແລະ ລົງຄະແນນສຽງ ແລະ ຄະນະຕິດຕາມ ແລະ ປະເມີນການດຳເນີນກອງປະຊຸມຜູ້ຖືຮຸ້ນ, ເພື່ອເປັນສັກຂີພະຍານ ແລະ ຊ່ວຍດູແລກວດສອບໃຫ້ກອງປະຊຸມເປັນໄປຢ່າງຖືກຕ້ອງ, ໂປ່ງໃສຕາມກົດລະບຽບຂອງບໍລິສັດ ແລະ ກົດໝາຍທີ່ກ່ຽວຂ້ອງໃນ ສປປ ລາວ.

ບໍລິສັດ ລາວອາໂກຣເທັກ ມະຫາຊົນ
Lao Agro Tech Public Company
ບ້ານ ໜອງຄັນຄູ, ເມືອງ ນາຊາຍທອງ, ນະຄອນຫຼວງວຽງຈັນ. ໂທລະສັບ: 030 9882809, ແຟັກ:(856-21)
BAN NONGKUNKU, NAXAYTHONG DISTRICT, VIENTIANE CAPITAL. TEL: 030 9882809, FAX: (856-21)

ໃບມອບສັນທະ

Proxy

1. ຂ້າພະເຈົ້າ/(I/we).....ສັນຊາດ/**Nationality**:.....

   ວັນທີ ເດືອນ ແລະ ປີເກີດ/**Date, month and year of birth**:.....

   ບັດປະຈຳຕົວເລກທີ/**ID card number**:.....ຫຼື ໜັງສືຜ່ານແດນເລກທີ/**or ID Passport**:.....

   ຢູ່ເຮືອນເລກທີ/**Reside at**:..... ບ້ານ/**Village**:.....ຖະໜົນ/**Road**:.....

   ເມືອງ/**District**:..... ແຂວງ/**Province**:..... ປະເທດ/**Nation**:.....

   ເບີໂທລະສັບ/**Telephone No**:.....ອີເມວ/**Email**:.....

   ເປັນຜູ້ຖືຮຸ້ນບໍລິສັດ ລາວ ອາໂກຣເທັກ ມະຫາຊົນ (ລອທ)

   Being a shareholder of Lao Agrotech Public Company (LAT)

   ມີຮຸ້ນທີ່ຖືຈຳນວນ.....ຮຸ້ນ ເຊິ່ງເທົ່າກັບຈຳນວນສຽງທີ່ຈະລົງຄະແນນສຽງໄດ້.

   Holding a total number of …… **shares, which are equivalent to the same number of votes.**

2. ຂໍມອບໝາຍ/**Hereby appoint**

   - ☐ ທ່ານ/ ທ່ານນາງ / **Mr./Ms.** ….....…….....……..……ອາຍຸ/**age**…….....ບັດປະຈຳຕົວເລກທີ/**ID card number**:..... ຫຼື ໜັງສືຜ່ານແດນເລກທີ/**or ID Passport**:.....ຢູ່ເຮືອນເລກທີ/**Reside at**:..... ບ້ານ/**Village**:..... ຖະໜົນ/**Road**:.....ເມືອງ/**District**:..... ແຂວງ/**Province**:..... ປະເທດ/**Nation**:..... ເບີໂທລະສັບ/**Telephone No**:.....
   - ☐ ທ່ານ ປອ. ນາງ ຄຳແພງ ພັດທະດາວົງ / **Ms. Khampheng Phathadavong Ph.D,** ບັດປະຈຳຕົວເລກທີ/**ID card number**: **01-0087532,** ບ້ານ/**Village**: ໂພນເຄັ້ງ/**Phonkheng**, ເມືອງ/**District**: ໄຊທານີ/**Xaithany**, ແຂວງ/**Province**: ນະຄອນຫຼວງວຽງຈັນ/**Vientiane Capital**, ປະເທດ/**Nation**: ລາວ/**Laos**, ເບີໂທລະສັບ/**Telephone No: (+856) 2055939897**.
   - ☐ ທ່ານ ນາງ ດວງສະໄຫມ ເລົ່າຝຸ/ **Ms. Douangsamay Laofoung,** ບັດປະຈຳຕົວເລກທີ/**ID card number**: **A1-0007079**, ບ້ານ/**Village**: ທາດຂາວ/**Thadkhao**, ເມືອງ/**District**: ສີສັດຕະນາກ/ **Sisattanak**, ແຂວງ/**Province**: ນະຄອນຫຼວງວຽງຈັນ/**Vientiane Capital**, ປະເທດ/**Nation**: ລາວ/**Laos**, ເບີໂທລະສັບ/**Telephone No: (+856) 2055454254.**

ໃຫ້ເປັນຜູ້ຕາງໜ້າຂອງຂ້າພະເຈົ້າເພື່ອເຂົ້າຮ່ວມ ແລະ ລົງຄະແນນສຽງແທນຂ້າພະເຈົ້າຢູ່ໃນກອງປະຊຸມຜູ້ຖືຮຸ້ນ ປະຈຳປີ 2025 ໃນວັນທີ 27 ເມສາ 2026 ເວລາ 15:00ໂມງ ຢູ່ທີ່ຕະຫຼາດຫຼັກຊັບລາວ ຈຳກັດ, ຊັ້ນ 08, ຫ້ອງປະຊຸມ, ບ້ານໂພນທັນເໜືອ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ. **He/she is my/our proxy to attend and vote on my/our behalf in the Annual General meeting for year 2025 to be on 27 April 2026, at 15:00 at Lao Securities Exchange Co.,LTD (LSX), 08 Floor, Meeting Room, Phonthan neua Village, Saysettha District, Vientiane Capital, Lao PDR.**

3. ຂ້າພະເຈົ້າຂໍມອບໝາຍໃຫ້ຜູ້ຕາງໜ້າລົງຄະແນນສຽງແທນຂ້າພະເຈົ້າ ຢູ່ໃນກອງປະຊຸມດັ່ງນີ້ (ໝາຍເຫດ: ຜູ້ມອບສິດ ແມ່ນ ມີສິດເລືອກໄດ້ 1 ຮູບແບບເທົ່ານັ້ນ).
I/We authorize the proxy to vote on my/our behalf in the meeting as follows (Remark: shareholder is able to select only one form)

☐ 1. ໃຫ້ຜູ້ຕາງໜ້າມີສິດພິຈາລະນາ ແລະ ລົງຄະແນນສຽງໃນທຸກໆບັນຫາແທນຂ້າພະເຈົ້າ ຕາມທີ່ຜູ້ກ່ຽວເຫັນສົມຄວນ;
To grant the proxy to consider and vote on my/our behalf as he/she may deem appropriate in all respects;

☐ 2. ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການຂອງຂ້າພະເຈົ້າ ແລະ ມີສິດພິຈາລະນາ ແລະ ລົງມະຕິແທນຂ້າພະເຈົ້າໃນບາງວາລະ.
To grant the proxy to vote as per my/our intention and consider and vote on my/our behalf in some agendas as he/she may deem appropriate in all respects;

☐ 3. ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການຂອງຂ້າພະເຈົ້າດັ່ງນີ້ (ຖ້າເລືອກຂໍ້ນີ້ ກະລຸນາເລືອກລົງຄະແນນເຫັນດີ ຫຼື ບໍ່ເຫັນດີເທົ່ານັ້ນ):
To grant the proxy to vote as per my/our intention indicated in the followings (If you select this option, please choose to vote either approve or disapprove in every agenda):

<u>ວາລະທີ 1</u>: ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມຜູ້ຖືຮຸ້ນປະຈຳປີ 2024.
<u>Agenda 1</u>: To consider and adopt the Minutes of the Annual General Shareholders' meeting for the year 2024;

☐ເຫັນດີ	☐ ບໍ່ເຫັນດີ	☐ ອະນຸມັດໃຫ້ຜູ້ຕ່າງຫນ້າລົງຄະແນນ
Approve	**Disapprover**	**Approve the right of the voter to vote appropriately**

ວາລະທີ 2: ພິຈາລະນາ ແລະ ຮັບຮອງຜົນການດຳເນີນທຸລະກິດປະຈຳປີ 2025 ແລະ ເອກະສານລາຍງານການເງິນ ຂອງບໍລິສັດ ປະຈຳປີ 2025;

Agenda 2: To consider and adopt the business result report for the year 2025 and the financial statements report of the company for the year 2025;

□ເຫັນດີ □ ບໍ່ເຫັນດີ □ ອະນຸມັດໃຫ້ຜູ້ຕ່າງໜ້າລົງຄະແນນ

Approve **Disapprover** **Approve the right of the voter to vote appropriately**

ວາລະທີ 3: ພິຈາລະນາ ແລະ ຮັບຮອງແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2026;

Agenda 3: To consider and adopt the business plan of the company for the year 2026;

□ເຫັນດີ □ ບໍ່ເຫັນດີ □ ອະນຸມັດໃຫ້ຜູ້ຕ່າງໜ້າລົງຄະແນນ

Approve **Disapprover** **Approve the right of the voter to vote appropriately**

ວາລະທີ 4: ພິຈາລະນາ ແລະ ຮັບຮອງການບໍ່ຈ່າຍເງິນປັນຜົນຈາກການດຳເນີນທຸລະກິດ ປະຈຳປີ 2025;

Agenda 4: To consider and adopt no dividend payments from the business operating result for the year 2025;

□ເຫັນດີ □ ບໍ່ເຫັນດີ □ ອະນຸມັດໃຫ້ຜູ້ຕ່າງໜ້າລົງຄະແນນ

Approve **Disapprover** **Approve the right of the voter to vote appropriately**

ວາລະທີ 5: ພິຈາລະນາ ແລະ ອະນຸມັດການແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ການກຳນົດຄ່າຈ້າງຂອງຜູ້ ກວດສອບບັນຊີພາຍນອກ ປີ 2026;

Agenda 5: To consider and approve the appointment the external auditor and determine a remuneration of external auditor for the year 2026.

□ເຫັນດີ □ ບໍ່ເຫັນດີ □ ອະນຸມັດໃຫ້ຜູ້ຕ່າງໜ້າລົງຄະແນນ

Approve **Disapprover** **Approve the right of the voter to vote appropriately**

ວາລະທີ 6: ພິຈາລະນາແຕ່ງຕັ້ງສະມາຊິກສະພາບໍລິຫານແທນສະມາຊິກສະພາບໍລິຫານທີ່ຄົບວາລະ.

Agenda 6: To consider the appointment of members of the board of directors to replace those whose tenure is terminated;

6.1 ພິຈາລະນາແຕ່ງຕັ້ງ ທ່ານ ອະພິສິດ ຮຸຈິກຽດກຳຈອນ ເປັນປະທານສະພາບໍລິຫານ ແລະ ສະມາ ຊິກອິດສະຫຼະຂອງບໍລິສັດ.

6.1 To Consider and appoint Mr. Apisit Rujikeatkamjorn as the Chairman of the board of directors.

□ເຫັນດີ □ ບໍ່ເຫັນດີ □ ອະນຸມັດໃຫ້ຜູ້ຕ່າງໜ້າລົງຄະແນນ

Approve **Disapprover** **Approve the right of the voter to vote appropriately**

6.2 ພິຈາລະນາແຕ່ງຕັ້ງ ທ່ານ ພົງຖານ ພິດຈຳນົງ ເປັນສະມາຊິກສະພາບໍລິຫານຂອງບໍລິສັດ.

6.2 To Consider and appoint Mr. Phongtarn Pichjumnong as the member of the board of directors.

□ເຫັນດີ **Approve** □ ບໍ່ເຫັນດີ **Disapprover** □ ອະນຸມັດໃຫ້ຜູ້ຕ່າງໜ້າລົງຄະແນນ **Approve the right of the voter to vote appropriately**

4. ການລົງຄະແນນສຽງຂອງຜູ້ຕາງໜ້າໃນວາລະກອງປະຊຸມໃດທີ່ບໍ່ເປັນໄປຕາມທີ່ລະບຸໄວ້ໃບມອບສັນທະສະບັບນີ້ ໃຫ້ຖືວ່າການລົງຄະແນນສຽງນັ້ນບໍ່ຖືກຕ້ອງ ແລະ ບໍ່ແມ່ນການລົງຄະແນນສຽງຂອງຂ້າພະເຈົ້າ ໃນຖານະຜູ້ຖືຮຸ້ນ.

Voting of the proxy in any agenda that is not as specified in the Proxy shall be considered as invalid and shall not be my/our voting as the shareholder.

5. ໃນກໍລະນີທີ່ຂ້າພະເຈົ້າ ບໍ່ໄດ້ລະບຸຄວາມຕ້ອງການຂອງຕົນໃນການລົງຄະແນນສຽງໃນວາລະໃດໜຶ່ງ ຫຼື ລະບຸໄວ້ບໍ່ຈະແຈ້ງໃຫ້ຖືວ່າຂ້າພະເຈົ້າລົງຄະແນນສຽງເຫັນດີ.

In case I/We have failed to specify my/our voting intention in any agenda or not clearly specified, my/our vote in such agenda shall be deemed approved;

6. ທຸກການກະທຳໃດຂອງຜູ້ຕາງໜ້າໃນກອງປະຊຸມທີ່ເປັນໄປຕາມໃບມອບສິດນີ້ ໃຫ້ຖືວ່າຂ້າພະເຈົ້າໄດ້ກະທຳເອງທຸກປະການ.

Any action made by the proxy in the meeting in accordance with this Proxy, shall be deemed as having been performed by myself/ ourselves in all respects.

ທີ່/ **Wrote at**..... ວັນທີ/**Date**.....

ເຊັນຜູ້ຖືຮຸ້ນທີ່ມອບໝາຍ /**Signed by the shareholder** ເຊັນຜູ້ຕາງໜ້າ / **Signed by the proxy**

_____ _____

(.....) (.....)

ໝາຍເຫດ/ Remark

1. ຜູ້ຖືຮຸ້ນ ຈະຕ້ອງແຕ່ງຕັ້ງຜູ້ຕາງໜ້າພຽງຜູ້ດຽວເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງແທນຕົນເອງ.

   The shareholder is required to assign only one proxy to attend and vote in the meeting on the shareholder's behalf.

2. ໃບມອບສິດສະບັບນີ້ຈະຕ້ອງນຳໄປຈົດທະບຽນສານ ນຳສຳນັກງານທະບຽນສານທີ່ຢູ່ສະດວກສຳລັບທ່ານ ເພື່ອໃຫ້ຮັບປະກັນຜົນສັກສິດທາງກົດໝາຍ, ລອທ ມີສິດປະຕິເສດໃບມອບສິດໃດໆທີ່ບໍ່ໄດ້ຈົດທະບຽນສານ.

   This Proxy must be certified by your most convenient Court Notary Office to ensure its legal validity. LAT may reject any Proxies or proxy authorizations without endorsement of the Court Notary Office.

3. ຕາງໜ້າຕ້ອງສະແດງເອກະສານຂອງຕົນເອງຕໍ່ພະນັກງານປະຈຳໂຕະລົງທະບຽນຄື: ບັດປະຈຳຕົວ ຫຼື ປຶ້ມສຳມະໂນຄົວ ຫຼື ໜັງສືຜ່ານແດນ (ສຳລັບນັກລົງທຶນຕ່າງປະເທດ) ພ້ອມກັບສຳເນົາເອກະສານປະເພດດຽວກັນນີ້ຂອງຜູ້ຖືຮຸ້ນ, ໃບມອບສິດສະບັບນີ້ ແລະ ໜັງສືເຊີນປະຊຸມ.

   The proxy must present to the officers at registration desk his/her valid ID Card, or Family book or Passport (in case of foreign investor) together with the copies of the same documents of the shareholder, this Proxy, and the invitation to the Meeting.

ບໍລິສັດ ລາວອາໂກຣເທັກ ມະຫາຊົນ
Lao Agro Tech Public Company
ບ້ານ ໜອງຄັນຄູ, ເມືອງ ນາຊາຍທອງ, ນະຄອນຫຼວງວຽງຈັນ. ໂທລະສັບ: 030 9882809, ແຟັກ:(856-21)
BAN NONGKUNKU, NAXAYTHONG DISTRICT, VIENTIANE CAPITAL. TEL: 030 9882809, FAX: (856-21)

ຄຳແນະນຳກ່ຽວກັບເອກະສານ ແລະ ຫຼັກຖານທີ່ຕ້ອງນຳມາສະເໜີໂຕເພື່ອເຂົ້າຮ່ວມກອງປະຊຸມ

Instruction about the documents and evidence to be presented prior to attending the meeting

ເພື່ອຄວາມສະດວກໃນການລົງທະບຽນຜູ້ເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນສາມັນປະຈຳປີ 2025 ຂອງບໍລິສັດ ລາວ ອາໂກຣເທັກ ມະຫາຊົນ, ຜູ້ຖືຮຸ້ນ ແລະ ຜູ້ຕ່າງໜ້າ ທີ່ຈະເຂົ້າຮ່ວມກອງປະຊຸມ ກະລຸນານຳເອົາໜັງສືເຊີນປະຊຸມ, ໃບ ແຈ້ງສິດ ແລະ ໃບມອບສັນທະມາພ້ອມ. ບໍລິສັດ ຂໍສະຫງວນສິດໃນການອະນຸຍາດໃຫ້ສະເພາະຜູ້ທີ່ມີເອກະສານ ຖືກຕ້ອງ ແລະ ຄົບຖ້ວນເທົ່ານັ້ນຈຶ່ງສາມາດເຂົ້າຮ່ວມກອງປະຊຸມໄດ້.

For your convenience for the registration process to attend the Annual General Shareholders' Meeting for the Year 2025 of Lao Agrotech Public Company, the shareholders or the proxies who will attend the Meeting shall bring the invitation to the Meeting, registration form and proxy form for the registration. The Company reserves the right to allow only the shareholders or the proxies who have proper and complete documents to attend the Meeting.

1. <u>ຜູ້ເຂົ້າຮ່ວມທີ່ເປັນບຸກຄົນ</u> **/Individual attendee**

   ໃຫ້ນຳເອົາເອກະສານໃດໜຶ່ງຂອງຕົນດັ່ງຕໍ່ໄປນີ້ ມາສະແດງເວລາລົງທະບຽນ

   Shall present one of the following documents of their won at the time of registration

   1.1 ບັດປະຈຳຕົວ/ **Identification card**

   1.2 ສຳມະໂນຄົວ/**Family book**

   1.3 ໜັງສືຜ່ານແດນ (ສຳລັບນັກລົງທຶນຕ່າງປະເທດ)/**Passport (for foreign investors)**

2. <u>ຜູ້ເຂົ້າຮ່ວມທີ່ເປັນນິຕິບຸກຄົນ</u>/ **Entity attendees**

   ໃຫ້ນຳເອົາເອກະສານໃດໜຶ່ງທີ່ກຳນົດໄວ້ໃນຂໍ້ 1 ເທິ່ງນີ້ ພ້ອມກັບເອກະສານໃດໜຶ່ງດັ່ງຕໍ່ໄປນີ້ ມາສະແດງ ເວລາ ລົງທະບຽນ:

   Shall present one of the documents as given in the 1 above plus one of the following documents at the time of registration:

   2.1 ໃບອະນຸຍາດລົງທຶນ/**Investment license**

   2.2 ໃບທະບຽນວິສະຫະກິດ/ **Certificate of Enterprise Registration**

   2.3 ໃບທະບຽນອາກອນສະບັບຫຼ້າສຸດ/**Recent Tax Certificate**

ສຳລັບຜູ້ເຂົ້າຮ່ວມທີ່ບໍ່ແມ່ນຜູ້ອຳນວຍການ ຕ້ອງໄດ້ນຳເອົາໃບມອບສິດຈາກຜູ້ອຳນວຍການທີ່ມີສິດອຳນາດມາພ້ອມຕື່ມອີກ.

For attendee who is not the authorized director shall have the Proxy as attached hereto signed by the authorized director.

ເອກະສານ ແລະ ຫຼັກຖານທີ່ຕ້ອງນຳມາສະເໜີໂຕ ເພື່ອເຂົ້າຮ່ວມກອງປະຊຸມຊຶ່ງເປັນພາສາຕ່າງປະເທດ ຕ້ອງແປເປັນພາສາລາວ ໂດຍມີການເຊັນຢັ້ງຢືນຄວາມຖືກຕ້ອງໃນການແປຈາກບໍລິສັດແປພາສາທີ່ໜ້າເຊື່ອຖືໄດ້. ສຳລັບພາສາຕ່າງປະເທດແມ່ນອະນຸຍາດໃຫ້ສຳລັບພາສາອັງກິດ ແລະ ພາສາໄທເທົ່ານັ້ນ. ລອທ ມີສິດປະຕິເສດເອກະສານອ້າງອີງໃດໆ ທີ່ບໍ່ເປັນໄປຕາມການກຳນົດນີ້.

All documents and evidence in a foreign language which are required to present prior to attending the Meeting must be translated into Lao language and the translation shall be certified by an acceptable translation company. The foreign language is permitted only for English and Thai. LAT has the right to reject any documents contradicting this provision.

ການມອບໝາຍ

Proxy

ຜູ້ຖືຮຸ້ນທີ່ບໍ່ສາມາດເຂົ້າຮ່ວມກອງປະຊຸມໄດ້ດ້ວຍຕົນເອງ ສາມາດມອບໝາຍໃຫ້ຜູ້ຕາງໜ້າຕາມຄວາມຕ້ອງການ ຂອງຜູ້ຖືຮຸ້ນ ຫຼື ເລືອກມອບສິດໃຫ້ສະມາຊິກອິດສະຫຼະ ຂອງສະພາບໍລິຫານຂອງບໍລິສັດທ່ານໃດທ່ານໜຶ່ງ.

Shareholders who are unable to attend the meeting themselves may appoint any person or one of the directors of the company.

ໃນກໍລະນີທີ່ຜູ້ຖືຮຸ້ນ ຈະມອບໝາຍໃຫ້ສະມາຊິກສະພາບໍລິຫານອິດສະຫຼະຂອງບໍລິສັດເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງແທນ, ກະລຸນາປະກອບຂໍ້ມູນ ແລະ ລົງລາຍເຊັນໃນໃບມອບສັນທະດັ່ງກ່າວ ແລະ ໝາຍ (√) ເພື່ອເລືອກເອົາສະມາຊິກສະພາບໍລິຫານອິດສະຫຼະຂອງບໍລິສັດທ່ານໃດທ່ານໜຶ່ງເປັນຜູ້ຕາງໜ້າ ແລະ ສົ່ງໃບສັນທະດັ່ງກ່າວພ້ອມເອກະສານຕິດຂັດ ສົ່ງເຖິງ ບໍລິສັດ ລາວອາໂກຣເທັກ ມະຫາຊົນ, ສຳນັກງານຕັ້ງຢູ່ ບ້ານ ໜອງຄັນຄູ, ເມືອງ ນາຊາຍທອງ, ນະຄອນຫຼວງວຽງຈັນ ກ່ອນວັນທີ 20 ເມສາ 2026 ຫຼື ກ່ອນເວລາເປີດກອງປະຊຸມຢ່າງໜ້ອຍໜຶ່ງ ຊົ່ວໂມງ ເພື່ອໃຫ້ເຈົ້າໜ້າທີ່ຂອງບໍລິສັດໄດ້ມີເວລາກວດກາເອກະສານ ເພື່ອໃຫ້ທັນເວລາເປີດກອງປະຊຸມ.

If any shareholders wishes to appoint an independent director of the company to attend and cast votes on your behalf, please complete the information and sign the Proxy form and put a mark (√) in front the name of an independent director as provided in the Proxy form to be proxy, and please submit the Proxy form, including supporting document to Lao Agrotech public company, Nongkunku village, Naxaythong District, Vientiane, and please deliver to the company before 20 April 2026 or at least an hour before the meeting starts for verification of document.

ຄຳແນະນຳກ່ຽວກັບການລົງຄະແນນສຽງ

Instruction for vote

1. ຜູ້ເຂົ້າຮ່ວມປະຊຸມ ຈະໄດ້ຮັບບັດລົງຄະແນນສຽງໃນທຸກໆວາລະ ທີ່ຕ້ອງການໃຫ້ມີການລົງຄະແນນສຽງ ໃນເວລາລົງທະບຽນເຂົ້າຮ່ວມກອງປະຊຸມ, ການລົງຄະແນນສຽງໂດຍຜູ້ຕາງໜ້າ ຊຶ່ງຜູ້ຖືຮຸ້ນທີ່ຜູ້ມອບໝາຍສິດໄດ້ລະບຸຢ່າງຈະແຈ້ງແລ້ວກ່ຽວກັບການລົງຄະແນນສຽງໃນແຕ່ລະວາລະ ລອທ ຈະບັນທຶກການລົງຄະແນນສຽງໃນເວລາລົງທະບຽນໂດຍທີ່ຜູ້ຕາງໜ້າຈະບໍ່ຕ້ອງລົງຄະແນນສຽງອີກ.

   The attendees will be given a ballot for voting in each agenda requiring a vote at the time of registration. For the case of proxy in which the voting in each agenda has been clearly specified by the shareholder in the Proxy, LAT will record such voted at the time of the registration and the proxy will not be required to vote.

2. ກອງປະຊຸມ ຈະເຊີນພຽງແຕ່ຜູ້ຖືຮຸ້ນທ່ານໃດທີ່ ບໍ່ເຫັນດີ ຕໍ່ບັນຫາທີ່ກອງປະຊຸມໄດ້ນຳສະເໜີເທົ່ານັ້ນ ລົງຄະແນນສຽງ (ໝາຍຄວາມວ່າ ຜູ້ຖືຮຸ້ນທ່ານໃດທີ່ ເຫັນດີຕໍ່ການແຕ່ງຕັ້ງດັ່ງກ່າວ ກໍ່ບໍ່ຈຳເປັນຕ້ອງລົງຄະແນນສຽງໃດໆ).

   Only the shareholders who DO NOT AGREE with the matters proposed by the meeting are invited to vote (meaning that for those who agree with such appointment are not necessary to make any vote.

3. ໃນການລົງຄະແນນສຽງ ຂໍໃຫ້ທ່ານປະກອບຂໍ້ມູນໃສ່ບັດລົງຄະແນນສຽງທີ່ໄດ້ແຈກຢາຍໃຫ້. ໃນນັ້ນ, ຕ້ອງໄດ້ລະບຸຢ່າງຈະແຈ້ງກ່ຽວກັບຊື່ ແລະ ນາມສະກຸນຂອງທ່ານ, ຈຳນວນຮຸ້ນ ລອທ ທີ່ທ່ານຖືຢູ່ ແລະ ໃຫ້ໝາຍຕີນກາໃສ່ຫ້ອງ ບໍ່ເຫັນດີ.

   To vote, kindly fill in the distributed ballot in which you must specify clearly about your name and surname, and the total number of LAT shares you are holding and mark a cross in the Disapprove box.

4. ຫຼັງຈາກທ່ານລົງຄະແນນສຽງຮຽບຮ້ອຍແລ້ວ ຂໍໃຫ້ທ່ານຍົກບັດດັ່ງກ່າວຂຶ້ນ ເພື່ອໃຫ້ຄະນະຮັບຜິດຊອບເກັບເອົາ ແລະ ຮວບຮວມຄະແນນສຽງ.

   After you have clearly casted your vote, kingly raise your hand with the ballot, so the organizers can take the ballot and count the votes.

5. ທ່ານຈະໄດ້ຮັບແຈ້ງກ່ຽວກັບການນັບຄະແນນໃນທີ່ປະຊຸມເລີຍ ໂດຍການນັບຄະແນນສຽງຈະຖືເອົາໜຶ່ງຮຸ້ນເທົ່າກັບໜຶ່ງຄະແນນສຽງ.

   You will be informed about the voting result right in the meeting with one share equals one vote.

6. ການລົງຄະແນນສຽງທີ່ບໍ່ເຫັນດີຈະມີຜົນສັກສິດ ກໍຕໍ່ເມື່ອມີຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນຮຸ້ນ ລອທ ທັງໝົດໃນທີ່ປະຊຸມ.

   The Disapproval votes will become effective only if such votes account for more than half of the total number of LAT attending the meeting.

ໝາຍເຫດ/**Remark:**

1. ຜູ້ເຂົ້າຮ່ວມທີ່ບໍ່ໄດ້ລົງທະບຽນເຂົ້າປະຊຸມ ຈະບໍ່ມີສິດໃນການລົງຄະແນນສຽງ.
   Any attendees who failed to make registration will not be eligible to votes.
2. ທຸກບັດລົງຄະແນນສຽງບໍ່ເຫັນດີຕໍ່ວາລະໃດໜຶ່ງທີ່ຖືກສົ່ງໃຫ້ທີ່ປະຊຸມ ຫຼັງຈາກທີ່ກອງປະຊຸມໄດ້ປະກາດຜົນການລົງຄະແນນຂອງວາລະນັ້ນແລ້ວ, ຈະຖືວ່າເປັນບັດລົງຄະແນນສຽງທີ່ໃຊ້ບໍ່ໄດ້.
   All disapprove votes in any Agenda which is submitted to the Meeting after the Meeting has announced the voting result of such Agenda shall be deemed invalid.

ເອກະສານປະກອບວາລະທີ 6 ແລະ 7 ຊີວະປະຫວັດຫຍໍ້ຂອງສະມາຊິກສະພາບໍລິຫານ

ຊີວະປະວັດຫຍໍ້ຂອງສະມາຊິກສະພາບໍລິຫານ
CV of Board of Directors



ຊື່ - ນາມສະກຸນ	: ທ່ານ ອະພິສິດ ຮຸຈິກຽດກຳຈອນ
Name – Surname	: Mr. Apisit Rujikeatkamjorn
ວັນ ເດືອນ ປີເກີດ	: 20 ກັນຍາ 1945
Date of birth	: 20 August 1945
ສັນຊາດ	: ໄທ
Nationality	: Thai
ພາສາ	: ໄທ/ອັງກິດ
Language	: Thai / English
ຕຳແໜ່ງ	: ປະທານສະພາບໍລິຫານ (ສະມາຊິກອິດສະຫຼະ)
Position	: Chairman (Independent Member)

ປະຫວັດການສຶກສາ/ Education :

ປີ 1969	: ປະລິນຍາຕຣີ, ສາຂາວິສະວະກຳໂຍທາ, ມະຫາວິທະຍາໄລຂອນແກ່ນ, ປະເທດໄທ
Year 1969	: Bachelor Degree in Civil Engineering, Khonkaen University
ປີ 1975	: ມະລິນຍາໂທ, ສາຂາວິສະວະກຳໂຍທາ, ມະຫາວິທະຍາໄລລາມາ, ປະເທດອາເມລິກາ
Year 1975	: Master Degree in Civil Engineering, Lamar University, Texas, USA

ປະຫວັດການເຮັດວຽກ / Experience :

ປີ 2008 - ປະຈຸບັນ	: ປະທານຜູ້ອຳນວຍການ ບໍລິສັດ ສະຫຍາມໂກລ ບ້ອນເຮ້ົ ຈາກັດ (ມະຫາຊົນ), ປະເທດໄທ
Year 2008-Now	: Chief of the board Siam Global House Public Company Limited
ປີ 2011 - ປະຈຸບັນ	: ປະທານຜູ້ອານວຍການ ບໍລິສັດ ຊີອອຍ ຈາກັດ (ມະຫາຊົນ) , ປະເທດໄທ
Year 2011-Now	: Chief of the board Sea Oil Public Company Limited
ປີ 2014 - ປະຈຸບັນ	: ປະທານຜູ້ອານວຍການ ບໍລິສັດ ເອເຊັຍໄບໂອແມດ ຈາກັດ, ປະເທດໄທ
Year 2014-Now	: Chief of the board Asia Biomass Public Company Limited
ປີ 2014 - ປະຈຸບັນ	: ປະທານຜູ້ອຳນວຍການ ບໍລິສັດ ເອເຊັຍກຣີນ ເອເນີຈີ ຈຳກັດ (ມະຫາຊົນ) , ປະເທດໄທ
Year 2014-Now	: Chief of the board Asia Green Energy Public Company Limited
ປີ 2008 - ປະຈຸບັນ	: ປະທານຜູ້ອານວຍການ ບໍລິສັດ ດີ ທີ ຊີ ເອັນເທີໄພຣສ໌, ປະເທດໄທ
Year 2018-Now	: Chief of the board DTC Enterprise Company Limited

ຊີວະປະວັດຫຍໍ້ຂອງສະມາຊິກສະພາບໍລິຫານ

CV of Board of Directors



ຊື່ - ນາມສະກຸນ	: ທ່ານ ນາງ ຄຳແພງ ພັດທະດາວົງ
Name – Surname	: Ms. Khampheng Phathavong
ວັນ ເດືອນ ປີເກີດ	: 27 ກັນຍາ 1979
Date of birth	: 27 September 1979
ສັນຊາດ	: ລາວ
Nationality	: Lao
ພາສາ	: ລາວ/ອັງກິດ
Language	: Lao / English
ຕຳແໜ່ງ	: ຮອງປະທານສະພາບໍລິຫານ (ສະມາຊິກອິດສະຫຼະ)
Position	: Deputy Chairman (Independent Member)

ປະຫວັດການສຶກສາ/ Education :

ປີ 2002	: ປະລິນຍາຕີ, ສາຂາບໍລິຫານທຸລະກິດ
Year 2002	: Bachelor Degree in Business Administration
ປີ 2010	: ປະລິນຍາໂທ, ສາຂາບໍລິຫານທຸລະກິດ, ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ
Year 2010	: Master of Business Administration, Financial institution National Guard
ປີ 2019	: ປະລິນຍາເອກ, ສາຂາພັດທະນາອົງກອນ ແລະ ສາມັດທະນະມະນຸດ, ວິທະຍາໄລບຸລະພາ, ປະເທດໄທ
Year 2019	: Doctoral Degree from Burapha University

ປະຫວັດການເຮັດວຽກ / Experience :

ປີ 1998 – 2001	: ເລຂານຸການ, ບໍລິສັດ ລາວໂຕໂຢຕ້າ
Year 1998-2001	: Secretary Lao Toyota Company Limited
ປີ 2001 – 2005	: ຕິວແທນຂອງ ສປປ ລາວ, ASEAN E-Learning network
Year 2001-2005	: Project Coordinator ASEAN E-Learning Network
ປີ 2007 – 2013	: ຜູ້ປະສານງານໂຄງການ, ສະຖາບັນການເມືອງ ແລະ ການປົກຄອງ
Year 2007-2013	: Consultants TMC-Lao Hydraulic Manufacturing
ປີ 2013 – 2016	: ເປັນທີ່ປຶກສາ, TMC- Lao Hydraulic Machinery Manufacturing
Year 2013-2016	: Consultants TMC-Lao Hydraulic Manufacturing
ປີ 2010 - ປະຈຸບັນ	: ຮອງປະທານ ກຸ່ມການສຶກສາ ແສງສະຫວັນ
Year 2010-Now	: Vice Chairman Committee Saengsavan Education Group
ປີ 2010 - ປະຈຸບັນ	: ຜູ້ປະເມີນອິດສະຫຼະ Education Qualify Insurance, ກະຊວງສຶກສທິການ ແລະ ກິລາ
Year 2010-Now	: Independent Appraisers Education Quality Insurance, Ministry of Education and Sports

ຊີວະປະວັດຫຍໍ້ຂອງສະມາຊິກສະພາບໍລິຫານ

CV of Board of Directors



ຊື່ - ນາມສະກຸນ	: ທ່ານ ເສດ ພັດທະນະມາດ
Name – Surname	: Mr. Zait Pattanamas
ວັນ ເດືອນ ປີເກີດ	: 16 ພຶດສະພາ 1973
Date of birth	: 16 May1973
ສັນຊາດ	: ໄທ
Nationality	: Thai
ພາສາ	: ໄທ/ລາວ
Language	: Thai / Lao
ຕຳແໜ່ງ	: ສະມາຊິກສະພາບໍລິຫານ / ຜູ້ອຳນວຍການໃຫຍ່
Position	: Member / Chief Executive Officer

ປະຫວັດການສຶກສາ/ Education :

ປີ 1991-1993 : ຊັ້ນສູງ, ສາຂາວິສາວະກຳໄຟຟ້າ, ສະຖາບັນ ຊ່າງປະທຸມວັນ, ປະເທດໄທ
Year 1991-1993 : Diploma in Electrical Engineering, Pathumthani Technical College.

ປີ 1993-1995 : ປະລິນຍາຕຣີ, ສາຂາໄຟຟ້າສື່ສານ, ສະຖາບັນຊ່າງປະທຸມວັນ, ປະເທດໄທ.
Year 1993-1995 : Bachelor Degree in Electrical Communication, Pathumthani Technical College.

ປີ 2011-2013 : ປະລິນຍາໂທ, ສາຂາບໍລິຫານທຸລະກິດສຳລັບຜູ້ບໍລິຫານ, ມະຫາວິທະຍາໄລບຸລະພາ,ປະເທດໄທ.
Year 2011-2013 : Master Degree in Business Administration, Burapha University.

ປີ 2017-2019 : ກຳລັງສຶກສາ ປະລິນຍາເອກ, OD&HR, ມະຫາວິທະຍາໄລບຸລະພາ, ປະເທດໄທ.
Year 2017-2019 : Studying in Doctoral Degree in OD & HR, Burapha University.

ປະຫວັດການເຮັດວຽກ / Experience :

ປີ 1995 – 2002 : ອາຈານສອນ, ມະຫາວິທະຍາໄລ ການຈະນະບຸລີ, ປະເທດໄທ
Year 1995 - 2002 : Teacher Kanchanaburi University.

ປີ 2003 – 2004 : ຄະນະກຳມະການ, ບໍລິສັດ ໂບຣແລນ ເທັກໂນໂລຢີ ຈຳກັດ, ປະເທດໄທ
Year 2003 – 2004 : Committee Borland Technology Company Limited

ປີ 2005 – 2006 : ຄະນະກຳມະການ, ບໍລິສັດ ຊີແມັດຄອບເພີເລຊັ້ນ, ຈຳກັດ ປະເທດໄທ
Year 2005 - 2006 : Committee Zemasch Corporation Company Limited

ປີ 2006 - ປະຈຸບັນ : ຄະນະກຳມະການ, ບໍລິສັດ ອອຍປາມກຸບ ຈຳກັດ, ປະເທດໄທ
Year 2006 - Now : Committee Oil Plam Group Company Limited

ປີ 2008 - ປະຈຸບັນ : ຄະນະກຳມະການ, ບໍລິສັດ ໂອພີຈີເທັກ ຈຳກັດ, ປະເທດໄທ
Year 2008 - Now : Committee OPG Tech Company Limited

ປີ 2022 - ປະຈຸບັນ : ຜູ້ອຳນວຍການ, ບໍລິສັດ ລາວອາໂກຣເທັກ ມະຫາຊົນ
Year 2022-Now : CEO, Lao Agrotech Public Company

ຊີວະປະວັດຫຍໍ້ຂອງສະມາຊິກສະພາບໍລິຫານ

CV of Board of Directors



ຊື່ - ນາມສະກຸນ	: ທ່ານ ນາງ ດວງສະໄໝ ເລົ່າຝຸງ
Name – Surname	: Ms. Douangsamay Laofoung
ວັນ ເດືອນ ປີເກີດ	: 14 ກໍລະກົດ 1960
Date of birth	: 14 July 1960
ສັນຊາດ	: ລາວ
Nationality	: Lao
ພາສາ	: ລາວ/ອັງກິດ/ຣັດເຊຍ
Language	: Lao / English/ Russia
ຕຳແໜ່ງ	: ສະມາຊິກສະພາບໍລິຫານ (ສະມາຊິກອິດສະຫຼະ)
Position	: Member (Independent Member)

ປະຫວັດການສຶກສາ/ Education :

ປີ 1983	: ປະລິນຍາຕີ, ສາຂາວາງແຜນເສດຖະກິດແຫ່ງຊາດ, ອະດີດສະຫະພາບໂຊວຽດ
Year 1983	: Bachelor Degree in National Economics Planning Britain and USSR
ປີ 1984	: ປະລິຍາໂທ, ສາຂາວາງແຜນເສດຖະກິດແຫ່ງຊາດ, ອະດີດສະຫະພາບໂຊວຽດ
Year 1983	: Master Degree in National Economics Planning Britain and USSR

ປະຫວັດການເຮັດວຽກ / Experience :

ປີ 1984 - 1992	: ພະນັກງານວິຊາການ, ກະຊວງເສດຖະກິດ ແລະ ການລົງທຶນ
Year 1984 – 1992	: Academic Staff Ministry of Economy and Investment
ປີ 1992 – 2009	: ພະນັກງານວິຊາການ, ທະນາຄານການຄ້າຕ່າງປະເທດລາວ
Year 1992 – 2009	: Academic Staff Lao Commercial Bank
ປີ 2009 – 2014	: ຮອງຜູ້ຈັດການສາຂາ, ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
Year 2009 – 2014	: Branch Deputy Manager Lao Commercial Bank
ປີ 2014 – 2015	: ຮອງຜູ້ຈັດການພະແນກບັນຊີ, ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
Year 2009 – 2014	: Deputy Manager Accounting Division Lao Commercial Bank

ຊີວະປະວັດຫຍໍ້ຂອງສະມາຊິກສະພາບໍລິຫານ

CV of Board of Directors



ຊື່ - ນາມສະກຸນ	: ທ່ານ ພົງຖານ ພິດຈຳນົງ
Name – Surname	: Mr. Phongtarn Picjumnong
ວັນ ເດືອນ ປີເກີດ	: 19 ມັງກອນ 1973
Date of birth	: 19 January 1973
ສັນຊາດ	: ໄທ
Nationality	: Thai
ພາສາ	: ໄທ/ລາວ
Language	: Thai / Lao
ຕຳແໜ່ງ	: ສະມາຊິກສະພາບໍລິຫານ
Position	: Member

ປະຫວັດການສຶກສາ/ Education :

ປີ 1993 : ຊັ້ນສູງ, ສາຂາວິສາວະກຳໄຟຟ້າ, ສະຖາບັນ ຊ່າງປະທຸມວັນ, ປະເທດໄທ
Year 1993 : Diploma in Electrical Engineering, Pathumthani Technical College.

ປີ 1995 : ປະລິນຍາຕຣີ, ສາຂາໄຟຟ້າສື່ສານ, ສະຖາບັນຊ່າງປະທຸມວັນ, ປະເທດໄທ
Year 1995 : Bachelor Degree in Electrical Communication, Pathumthani Technical College

ປີ 2011 : ບໍລິຫານທຸລະກິດສາລັບຜູ້ບໍລິຫານ, ສະຖາບັນນິດ້າ
Year 2011 : Business Administration, Nida Thailand.

ປະຫວັດການເຮັດວຽກ / Experience :

ປີ 1996 – 1998	: ວິສະວະກອນ, Telecom Asia PLC.
Year 1996 - 1998	: Engineer, Telecom Asia PLC.
ປີ 1998 – 2003	: ຜູ້ຈັດການ, Zemasch corp., Ltd.
Year1998 – 2003	: Manager of Zemasch corp., Ltd.
ປີ 2004 – 2013	: ຜູ້ຈັດການຝ່າຍບໍລິຫານ, Borland technology Ltd.
Year 2004 - 2013	: Manager Director, Borland technology Ltd.
ປີ 2014 - ປະຈຸບັນ	: ສະມາຊິກສະພາບໍລິຫານ, ບໍລິສັດ ໂອພີຈີເທັກ ຈຳກັດ, ປະເທດໄທ
Year 2005 - Now	: Member of Director, OPG Tech Company Limited

ບໍລິສັດ ລາວອາໂກຣເທັກ ມະຫາຊົນ
Lao Agro Tech Public Company
ບ້ານ ໜອງຄັນຄູ, ເມືອງ ນາຊາຍທອງ, ນະຄອນຫຼວງວຽງຈັນ. ໂທລະສັບ: 030 9882809, ແຟັກ:(856-21)
BAN NONGKUNKU, NAXAYTHONG DISTRICT, VIENTIANE CAPITAL. TEL: 030 9882809, FAX: (856-21)

ເອກະສານປະກອບວາລະທີ 1: ບົດບັນທຶກກອງປະຊຸມຜູ້ຖືຮຸ້ນປະຈຳປີ 2024

ເອກະສານປະກອບວາລະທີ 2: ບົດລາຍງານການເງິນຂອງບໍລິສັດ ປະຈຳປີ 2025

ເອກະສານປະກອບວາລະທີ 3: ແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2026

ແຜນທີສະຖານທີ່ຈັດກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2025

ນະຄອນຫຼວງວຽງຈັນ, ວັນທີ 28/04/2025

ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2024
ບໍລິສັດ ລາວອາໂກຣເທັກ ມະຫາຊົນ

ບໍລິສັດ ລາວອາໂກຣເທັກ ມະຫາຊົນ ("ບໍລິສັດ" ຫຼື "ລອທ") ໄດ້ຈັດກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2024 ("ກອງປະຊຸມ") ເມື່ອວັນທີ 28 ເມສາ 2025 ເວລາ 14:30 ໂມງ, ຢູ່ທີ່ຕະຫຼາດຫຼັກຊັບລາວ , ຫ້ອງປະຊຸມຊັ້ນ 08 ຫ້ອງ, ບ້ານ ໂພນທັນເໜືອ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ. ໂດຍການເປັນປະທານຂອງ ທ່ານ ອະພິສິດ ຣຸຈິກຽດ ກຳຈອນ ປະທານສະພາບໍລິຫານ ພ້ອມດ້ວຍສະມາຊິກສະພາບໍລິຫານ ລອທ, ມີຜູ້ຖືຮຸ້ນເຂົ້າຮ່ວມປະຊຸມທັງໝົດ 13 ທ່ານ, ແບ່ງເປັນຜູ້ຖືຮຸ້ນທີ່ເຂົ້າຮ່ວມປະຊຸມດ້ວຍຕົນເອງຈຳນວນ 05 ທ່ານ ແລະ ຜູ້ຖືຮຸ້ນທີ່ມອບສິດໃຫ້ຜູ້ຕາງໜ້າເຂົ້າຮ່ວມປະຊຸມ ແທນຈຳນວນ 08 ທ່ານ ຖືຮຸ້ນລວມ 92,322,395 ຮຸ້ນ ຄິດເປັນ 92.32 % ຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດຂອງບໍລິສັດ, ຖືວ່າຄົບອົງປະຊຸມຕາມກົດໝາຍ ແລະ ລະບຽບການຂອງບໍລິສັດ, ປະທານ ຈຶ່ງໄດ້ກ່າວເປີດກອງປະຊຸມ ແລະ ໄດ້ມອບໝາຍ ໃຫ້ພິທີກອນແນະນຳສະມາຊິກສະພາບໍລິຫານແຕ່ລະທ່ານ, ເຈົ້າໜ້າທີ່ກ່ຽວຂ້ອງເຂົ້າຮ່ວມປະຊຸມ, ລະບຽບກອງປະຊຸມ ແລະ ວິທີການລົງຄະແນນສຽງ.

ສະມາຊິກສະພາບໍລິຫານທີ່ເຂົ້າຮ່ວມປະຊຸມມີດັ່ງນີ້:

1.	ທ່ານ ອະພິສິດ ຣຸຈິກຽດກຳຈອນ	ປະທານກອງປະຊຸມ ປະທານສະພາບໍລິຫານ (ສະມາຊິກອິດສະຫຼະ)
2.	ທ່ານ ປອ. ນາງ ຄຳແພງ ພັດທະດາວົງ	ຮອງປະທານສະພາບໍລິຫານ (ສະມາຊິກອິດສະຫຼະ)
3.	ທ່ານ ເສດ ພັດທະນະມາດ	ສະມາຊິກສະພາບໍລິຫານ/ຜູ້ອຳນວຍການໃຫຍ່
4.	ທ່ານ ພົງຖານ ພົດຈຳນົງ	ສະມາຊິກສະພາບໍລິຫານ
5.	ທ່ານ ນາງ ດວງສະໄໝ ເລົ່າຝົງ	ສະມາຊິກສະພາບໍລິຫານ (ສະມາຊິກອິດສະຫຼະ)

ພ້ອມດ້ວຍເຈົ້າໜ້າທີ່ທ່ານຜູ້ຕາງໜ້າຈາກຄະນະກຳມະການຄຸ້ມຄອງຫຼັກຊັບ, ຜູ້ຕາງໜ້າຈາກຕະຫຼາດຫຼັກຊັບລາວ, ຜູ້ຕາງໜ້າຈາກຜູ້ກວດສອບບັນຊີພາຍນອກ, ຄະນະກຳມະການກວດກາການດຳເນີນກອງປະຊຸມ ແລະ ລົງຄະແນນສຽງ ແລະ ຄະນະຕິດຕາມ ແລະ ປະເມີນການດຳເນີນກອງປະຊຸມ ກໍໄດ້ເຂົ້າຮ່ວມກອງປະຊຸມໃນຄັ້ງນີ້

1.	ທ່ານ ນາງ ອັນນະພອນ ສຸນັນທາ	ວິຊາການ ພະແນກຄຸ້ມຄອງການອອກຈຳໜ່າຍຫຼັກຊັບ, ສຄຄຊ
2.	ທ່ານ ນາງ ວັງອຸໄທ ມຸລຣັຕນ	ພະແນກຄຸ້ມຄອງການອອກຈຳໜ່າຍຫຼັກຊັບ, ສຄຄຊ
3.	ທ່ານ ອັດສະວິນ ຂັນທະວົງ	ພະແນກຈົດທະບຽນ ແລະ ເປີດເຜີຍຂໍ້ມູນ, ຕລຊລ
4.	ທ່ານ ສັນຍາ ຣັດຕະນະວິບູນ	ຕ່າງໜ້າຈາກ ບໍລິສັດ ພຣາຍສວໍເຕີ້ເຮົ້າສກຼເປີ້ສ (ລາວ) ຈຳກັດຜູ້ດຽວ
5.	ທ່ານ ສອນໄຊ ດີລະພົນ	ຕ່າງໜ້າຈາກ ບໍລິສັດ ພຣາຍສວໍເຕີ້ເຮົ້າສກຼເປີ້ສ (ລາວ) ຈຳກັດຜູ້ດຽວ
6.	ທ່ານ ວັນສະເຫຼີມ ສີສຸຄຳມັ່ງ	ຕ່າງໜ້າຜູ້ຖືຮຸ້ນລາຍຍ່ອຍຂອງ ບໍລິສັດ ລາວອາໂກຣເທັກ ມະຫາຊົນ, ໃນນາມຄະນະຕິດຕາມ ແລະ ປະເມີນການດຳເນີນກອງປະຊຸມຜູ້ຖືຮຸ້ນ

ຫຼັງຈາກນັ້ນ ພິທີກອນໄດ້ລາຍງານແຕ່ລະວາລະຂອງການປະຊຸມໃນມື້ນີ້ ແລະ ອະທິບາຍກ່ຽວກັບວິທີການລົງຄະແນນສຽງໃຫ້ຜູ້ເຂົ້າຮ່ວມກອງປະຊຸມໄດ້ຮັບຊາບເຊິ່ງມີລາຍລະອຽດ ດັ່ງນີ້:

❖ **ວາລະກອງປະຊຸມ**

1. **ວາລະທີ 1** ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2023.
2. **ວາລະທີ 2** ພິຈາລະນາ ແລະ ຮັບຮອງຜົນການດຳເນີນທຸລະກິດປະຈຳປີ 2024 ແລະ ເອກະສານລາຍງານການເງິນຂອງບໍລິສັດ ປະຈຳປີ 2024.
3. **ວາລະທີ 3** ພິຈາລະນາ ແລະ ຮັບຮອງແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2025.
4. **ວາລະທີ 4** ພິຈາລະນາ ແລະ ຮັບຮອງການບໍ່ຈ່າຍເງິນປັນຜົນຈາກການດຳເນີນທຸລະກິດ ປະຈຳປີ 2024;
5. **ວາລະທີ 5** ພິຈາລະນາ ແລະ ອະນຸມັດການແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ການກຳນົດຄ່າຈ້າງຂອງຜູ້ກວດສອບບັນຊີພາຍນອກ ປີ 2025.
6. **ວາລະທີ 6** ພິຈາລະນາແຕ່ງຕັ້ງສະມາຊິກສະພາບໍລິຫານແທນສະມາຊິກສະພາບໍລິຫານທີ່ຄົບວາລະ
7. **ວາລະທີ 7** ເລື່ອງອື່ນໆ (ຖ້າມີ)

❖ **ການລົງຄະແນນສຽງ:**

- ທ່ານຜູ້ຖືຮຸ້ນໜຶ່ງທ່ານມີຄະແນນສຽງເທົ່າກັບຈຳນວນຮຸ້ນທັງໝົດທີ່ທ່ານຖືຢູ່ໂດຍໜຶ່ງຮຸ້ນເທົ່າກັບໜຶ່ງສຽງ.
- ໃນການລົງຄະແນນສຽງໃນແຕ່ລະວາລະກອງປະຊຸມ ປະທານຈະຖາມກອງປະຊຸມວ່າ ມີຜູ້ຖືຮຸ້ນ ແລະ ຜູ້ຕ່າງໜ້າທ່ານໃດບໍ່ເຫັນດີ ຫຼື ບໍ່ຮັບຮອງ.
- ຖ້າຫາກມີຜູ້ຖືຮຸ້ນທ່ານໃດບໍ່ເຫັນດີ ຫຼື ບໍ່ຮັບຮອງ ໃຫ້ທ່ານໝາຍເຄື່ອງໝາຍຄູນ (x) ແລະ ຂຽນຊື່, ນາມສະກຸນ ຈຳນວນຮຸ້ນ ລອຫ ທີ່ທ່ານຖືຢູ່ ລົງໃນບັດລົງຄະແນນໃນວາລະນັ້ນໆ, ເຊິ່ງເຈົ້າໜ້າທີ່ໄດ້ແຈກຢາຍໃຫ້ກ່ອນເຂົ້າປະຊຸມ ພ້ອມທັງຍົກບັດດັ່ງກ່າວຂຶ້ນສູງໆ ຈົນກວ່າຈະມີເຈົ້າໜ້າທີ່ມາເກັບບັດລົງຄະແນນ, ເພື່ອນຳໄປກວດນັບຄະແນນສຽງໃນວາລະນັ້ນໆ ແລະ ສຳລັບຜູ້ຖືຮຸ້ນທີ່ບໍ່ໄດ້ຍົກບັດ ຖືວ່າຜູ້ຖືຮຸ້ນທ່ານນັ້ນ ມີມະຕິເຫັນດີຕາມທີ່ສະເໜີໃນກອງປະຊຸມ.
- ຖ້າຫາກບໍ່ມີຜູ້ຖືຮຸ້ນທ່ານໃດຍົກບັດ ໃຫ້ຖືວ່າເຫັນດີ ຕາມເລື່ອງທີ່ໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ, ຍົກເວັ້ນກໍລະນີທີ່ຜູ້ຖືຮຸ້ນໄດ້ເຮັດເຄື່ອງໝາຍໃນໃບມອບສັນທະໄວ້ຢ່າງຈະແຈ້ງແລ້ວວ່າ ຈະລົງມະຕິບໍ່ເຫັນດີ, ເຊິ່ງບໍລິສັດໄດ້ບັນທຶກຄະແນນສຽງທີ່ບໍ່ເຫັນດີດັ່ງກ່າວນັ້ນໄວ້ແລ້ວ.
- ສຳລັບຜູ້ຖືຮຸ້ນທີ່ມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມປະຊຸມແທນ ແລະ ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການຂອງຜູ້ຖືຮຸ້ນ ຕາມທີ່ຜູ້ຖືຮຸ້ນໄດ້ລະບຸໄວ້ໃນໃບມອບສັນທະນັ້ນ, ບໍລິສັດໄດ້ນຳເອົາການລົງຄະແນນສຽງ ຕາມທີ່ຜູ້ຖືຮຸ້ນລະບຸໄວ້ໃນໃບມອບສັນທະດັ່ງກ່າວ ໄປບັນທຶກລວມຄະແນນໄວ້ລ່ວງໜ້າ ໃນເວລາທີ່ຜູ້ຕາງໜ້າລົງທະບຽນເຂົ້າທີ່ຮຽບຮ້ອຍແລ້ວ, ເພື່ອເປັນຄວາມສະດວກໃຫ້ແກ່ຜູ້ຕາງໜ້າ ໂດຍຜູ້ຕາງໜ້າບໍ່ຕ້ອງລົງຄະແນນສຽງ ໃນບັດລົງຄະແນນໃນກອງປະຊຸມຕື່ມອີກ.

- ການລົງຄະແນນສຽງທີ່ບໍ່ເຫັນດີຈະມີຜົນສັກສິດ ກໍຕໍ່ເມື່ອມີຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນຮຸ້ນ ລວມ ທັງໝົດໃນທີ່ປະຊຸມ.
- ກ່ອນການລົງຄະແນນສຽງແຕ່ລະວາລະ ແມ່ນຈະເປີດໂອກາດໃຫ້ຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ຜູ້ຖືຮຸ້ນທ່ານໃດ ມີ ຄຳຖາມສາມາດຖາມໄດ້.

❖ **ການນັບຜົນການລົງຄະແນນສຽງ:**

- ການນັບຜົນການລົງຄະແນນສຽງໃນແຕ່ລະວາລະ ຈະນັບຄະແນນສຽງທີ່ບໍ່ເຫັນດີຂອງຜູ້ຖືຮຸ້ນໃນກອງປະຊຸມ, ແລະ ຂອງຜູ້ຖືຮຸ້ນທີ່ມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມປະຊຸມແທນຕາມທີ່ບໍລິສັດໄດ້ບັນທຶກໄວ້ລ່ວງໜ້າ, ໃນເວລາທີ່ຜູ້ຕາງໜ້າ ລົງທະບຽນເຂົ້າຮ່ວມປະຊຸມ ໂດຍນຳມາຫັກອອກຈາກຈຳນວນຮຸ້ນທັງໝົດຂອງຜູ້ທີ່ມາເຂົ້າຮ່ວມປະຊຸມ ແລະ ລົງຄະແນນ ສຽງໃນແຕ່ລະວາລະ.
- ປະທານຈະປະກາດຜົນການລົງຄະແນນສຽງໃນແຕ່ລະວາລະ ໃຫ້ກອງປະຊຸມໄດ້ຮັບຊາບຫຼັງຈາກການລົງຄະແນນ ສຽງ ໃນແຕ່ລະວາລະສິ້ນສຸດລົງ ໂດຍຈະແຍກຄະແນນສຽງເຫັນດີ ແລະ ບໍ່ເຫັນດີວ່າມີຈັກສຽງ ແລະ ເປັນຈຳນວນຈັກ ສ່ວນ ຮ້ອຍ.
- ກໍລະນີມີຜູ້ຖືຮຸ້ນທີ່ສົ່ງບັດລົງຄະແນນບໍ່ເຫັນດີ ພາຍຫຼັງຈາທີ່ໄດ້ປະກາດ ໃຫ້ກອງປະຊຸມຮັບຊາບຜົນການລົງຄະແນນ ສຽງໃນແຕ່ລະວາລະສິ້ນສຸດລົງແລ້ວນັ້ນ, ບໍລິສັດຈະບໍ່ນຳເອົາຄະແນນສຽງດັ່ງກ່າວ ມານັບເປັນຄະແນນສຽງຕື່ມອີກ.

ເວລາຕໍ່ມາ ປະທານກໍ່ໄດ້ກ່າວເລີ່ມເຂົ້າສູ່ກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2024 ໂດຍລາຍງານເປັນແຕ່ລະວາລະ ຊຶ່ງມີລາຍ ລະອຽດດັ່ງລຸ່ມນີ້:

<u>ວາລະທີ 1</u> ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2023.

ປະທານໄດ້ລາຍງານຜົນການຈັດຕັ້ງປະຕິບັດກອງປະຊຸມຜູ້ຖືຮຸ້ນປະຈຳປີຜ່ານມາເພື່ອໃຫ້ຜູ້ຖືຮຸ້ນຮັບຊາບ ເພື່ອ ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມຜູ້ຖືຮຸ້ນປະຈຳປີ 2023, ຫຼັງຈາກນັ້ນປະທານກອງປະຊຸມໄດ້ເປີດໂອກາດເຊີນ ຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມ ສາມາດຖາມໄດ້ ແຕ່ກໍ່ບໍ່ມີທ່ານໃດສະແດງຄຳເຫັນໃນວາລະນີ້.

ຫຼັງຈາກລາຍງານໂດຍຫຍໍ້ກ່ຽວກັບວາລະທີ 1 ແລ້ວ, ປະທານກອງປະຊຸມໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດ ເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມ ສາມາດຖາມໄດ້ ເຊິ່ງມີຄຳເຫັນໃນວາລະນີ້ ດັ່ງນີ້:

- ຜູ້ຕ່າງໜ້າຜູ້ຖືຮຸ້ນຕ໊ອແທນຈາກ **Mr. Kraiwal Kadavanich** ເຫັນວ່າໃນກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2023 ວາລະທີ 1 ໃນບົດລາຍງານກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2023 ຫຼັງຈາກລາຍງານໂດຍຫຍໍ້ແລ້ວ ເຫັນວ່າ ບົດລາຍງານ ບໍ່ໄດ້ມີການລະບຸເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ໃຫ້ຜູ້ຖືຮຸ້ນໃດມີຄຳຖາມ ?
- **ທ່ານ ອະພິສິດ ຣຸຈິກຽດກຳຈອນ** ປະທານກອງປະຊຸມໄດ້ຮັບຊາບໃນການສະເໜີຄຳຄິດເຫັນພ້ອມທັງມອບໃຫ້ກອງ ເລຂາກອງປະຊຸມແກ້ໄຂໃຫ້ຖືກຕ້ອງ.

ຈາກນັ້ນປະທານກອງປະຊຸມຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມຜູ້ຖືຮຸ້ນ ປະຈຳປີ 2023, ວາລະນີ້ກອງປະຊຸມຈະຕ້ອງລົງມະຕິອະນຸມັດ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທັງຫມົດ ຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ.

ມະຕິ: ກອງປະຊຸມໄດ້ມີມະຕິເຫັນດີຮັບຮອງບົດບັນທຶກກອງປະຊຸມຜູ້ຖືຮຸ້ນປະຈຳປີ 2023.

- ເຫັນດີຈຳນວນ **92,322,395** ສຽງ ເທົ່າກັບ **100** ສ່ວນຮ້ອຍ ຂອງຈຳນວນສຽງທັງຫມົດທີ່ເຂົ້າຮ່ວມກອງປະຊຸມ.

<u>ວາລະທີ 2</u> ພິຈາລະນາ ແລະ ຮັບຮອງຜົນການດຳເນີນທຸລະກິດປະຈຳປີ 2024 ແລະ ເອກະສານລາຍງານການເງິນຂອງບໍລິສັດ ປະຈຳປີ 2024.

ທ່ານ ເສດ ພັດທະນະມາດ ສະມາຊິກສະພາບໍລິຫານ ແລະ ຜູ້ອຳນວຍການໃຫຍ່ບໍລິສັດ ໄດ້ລາຍງານຕໍ່ທີ່ປະຊຸມກ່ຽວກັບບົດລາຍງານການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2024 ໂດຍຫຍໍ້ດັ່ງນີ້:

ຜະລິດຕະພັນ	ແຜນປະຈຳປີ 2024		ຜະລິດຕະພັນ	ຍອດຂາຍປີ 2024	
	(ລ້ານກີບ)	(%)		(ລ້ານກີບ)	(%)
ນ້ຳມັນ CPO	60,000.00	85.06	ນ້ຳມັນ CPO	36,223.11	82.98
ຕົ້ນກ້າ	4,375.00	6.20	ຕົ້ນກ້າ	567.36	1.30
ກາກປາມ	2,800.00	3.97	ກາກປາມ	3,374.69	7.73
ປຸ່ຍ	3,360.00	4.77	ປຸ່ຍ	1,311.01	3.00
ລາຍຮັບອື່ນໆ	-	-	ລາຍຮັບອື່ນໆ	2,176.49	4.99
ລວມ	70,535.00	100.00	ລວມ	43,652.66	100.00

1) ລາຍຮັບ.

ບໍລິສັດມີລາຍຮັບໃນປີ 2024 ທັງໝົດ 43,652.66 ລ້ານກີບ, ເມື່ອທຽບໃສ່ແຜນແມ່ນປະຕິບັດໄດ້ 61.89 ສ່ວນຮ້ອຍ ໃນນັ້ນລາຍຮັບສ່ວນໃຫຍ່ແມ່ນມາຈາກການຈຳໜ່າຍ ນ້ຳມັນປາມດິບ (CPO) ກວມເອົາ 82.98% ຂອງ ລາຍຮັບທັງໝົດ ແລະ ເມື່ອທຽບໃສ່ ລາຍຮັບປີ 2023 ເພີ່ມຂຶ້ນໃນອັດເທົ່າກັບ 7.94 ສ່ວນຮ້ອຍ.

2) ກຳໄລ-ຂາດທຶນ.

ໃນປີ 2024 ບໍລິສັດຂາດທຶນຈາກການດຳເນີນທຸລະກິດ ຈຳນວນ 1,756.40 ລ້ານກີບ.

3) ຊັບສິນ.

ວັນທີ 31 ທັນວາ 2023 ບໍລິສັດມີຊັບສິນລວມເທົ່າກັບ 76,721.86 ລ້ານກີບ ເມື່ອທຽບໃສ່ປີ 2024 ເທົ່າກັບ 74,688.44 ລ້ານກີບ ເຊິ່ງຫຼຸດລົງຈາກປີ 2023 ໃນອັດຕາເທົ່າກັບ 2.65 ສ່ວນຮ້ອຍ.

4) ໜີ້ສິນ.

ບໍລິສັດມີໜີ້ສິນລວມ ໃນປີ 2023 ເທົ່າກັບ 32,107.25 ລ້ານກີບ ເມື່ອທຽບໃສ່ປີ 2024 ມີໜີ້ສິນເທົ່າກັບ 31,830.15 ລ້ານກີບ ແມ່ນຫຼຸດລົງ 0.86 ສ່ວນຮ້ອຍ.

ຫຼັງຈາກລາຍງານໂດຍຫຍໍ້ກ່ຽວກັບວາລະທີ 2 ແລ້ວ, ປະທານກອງປະຊຸມໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມ ສາມາດຖາມໄດ້ ແຕ່ກໍ່ບໍ່ມີທ່ານໃດສະແດງຄຳເຫັນໃນວາລະນີ້.

ປະທານກອງປະຊຸມຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງບົດລາຍງານການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2024 ແລະ ເອກະສານລາຍງານການເງິນຂອງບໍລິສັດ ປະຈຳປີ 2024, ວາລະນີ້ກອງປະຊຸມຈະຕ້ອງລົງມະຕິອະນຸມັດ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທັງຫມົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ.

ມະຕິ: ກອງປະຊຸມໄດ້ມີມະຕິເຫັນດີຮັບຮອງບົດລາຍງານການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2024 ແລະ ເອກະສານລາຍງານການເງິນຂອງບໍລິສັດ ປະຈຳປີ 2024.

- ເຫັນດີຈຳນວນ **92,322,395** ສຽງ ເທົ່າກັບ **100** ສ່ວນຮ້ອຍ ຂອງຈຳນວນສຽງທັງຫມົດທີ່ເຂົ້າຮ່ວມກອງປະຊຸມ.

<u>ວາລະທີ 3</u> ພິຈາລະນາ ແລະ ຮັບຮອງແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2025.

ປະທານສະພາບໍລິຫານໄດ້ສະເໜີແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2025 ຕໍ່ກອງປະຊຸມ ໂດຍລາຍລະອຽດຫຼັກແມ່ນເປັນໄປຕາມ ທ່ານ ເສດ ພັດທະນະມາດ ສະມາຊິກສະພາບໍລິຫານ ແລະ ຜູ້ອຳນວຍການໃຫຍ່ບໍລິສັດໄດ້ອະທິບາຍດັ່ງນີ້: ສະເໜີກອງປະຊຸມ ພິຈາລະນາ ແລະ ຮັບຮອງເອົາແຜນການ ປະຈຳປີ 2025.

ລາຍການ	2025 ງົບປະມານ	
	ລດກ	ລອຫ
ປະລິມານການຂາຍ		
ນ້ຳ ມັນປາມຄີ (ໂຕນ)	-	3,000
ກາກປາມ (ໂຕນ)	-	1,500
ປຸ໋ຍ (ໂຕນ)	-	240
ຕົ້ນກ້າປາມ (ຕົ້ນ)	-	50,000
ນ້ຳ ມັນກະຊວນຊິອະພາບ (ລິດ)	-	-
ລາຄາຂາຍ		
ນ້ຳ ມັນປາມຄີ (ກີບ/ກິໂລກຣາມ)	-	20,000
ກາກປາມ (ກີບ/ກິໂລກຣາມ)	-	4,000
ປຸ໋ຍ (ກີບ/ກິໂລກຣາມ)	-	15,000
ຕົ້ນກ້າປາມ (ກີບ/ຕົ້ນ)	-	35,000
ນ້ຳ ມັນກະຊວນຊິອະພາບ (ກີບ/ລິດ)		-
ລາຍຮັບ (ລ້ານກີບ)		
ນ້ຳ ມັນປາມຄີບ	-	60,000
ກາກປາມ	-	6,000
ປຸ໋ຍ	-	3,600
ຕົ້ນກ້າປາມ	-	1,750
ນ້ຳ ມັນກະຊວນຊິອະພາບ	-	
ອື່ນໆ	-	
ລວມ	-	71,350

ແຜນການຂາຍນ້ຳມັນປາມດິບ CPO: ບໍລິສັດຄາດຄະເນການຂາຍໂດຍອີງໃສ່ການຜະລິດຂອງບໍລິສັດ. ນອກຈັບ ຄວາມຕ້ອງການຂອງຜູ້ບໍລິໂພກ ບໍລິສັດ ມີນະໂຍບາຍຂະຫຍາຍຖານລູກຄ້າໃນປີ 2025.

ແຜນການຂາຍປາມ: ບໍລິສັດຄາດຄະເນການຂາຍໂດຍອີງໃສ່ຄວາມຕ້ອງການຊື້ຂອງຜູ້ບໍລິໂພກໃນປະຈຸບັນ. ບໍລິສັດ ມີ ນະໂຍບາຍຂະຫຍາຍຖານລູກຄ້າໃນປີ 2025.

ແຜນການຂາຍປຸ໋ຍ: ໃນປີ 2025 ບໍລິສັດໄດ້ສົ່ງເສີມຊາວກະສິກອນ (ລູກສອນບໍລິສັດ ແລະ ນອກສອນບໍລິສັດ) ເພື່ອ ໃສ່ປຸ໋ຍປາມຕື່ມ.

ແຜນການຂາຍເບ້ຍປາມ: ບໍລິສັດໄດ້ວາງແຜນການເພື່ອຂໍການຢັ້ງຢືນແນວພັນປາມລາວວຽງ. ເພື່ອສົ່ງອອກ ແລະ ຄາດ ຄະເນການຂາຍຕາມປະລິມານຂອງບໍລິສັດ ມັນຈະຖືກຜະລິດໃນປີ 2025.

ແຜນການຂາຍນ້ຳມັນເຊື້ອໄຟຂອງບໍລິສັດຈະເຮັດບົດວິພາກ ແລະ ນຳສະເໜີຕໍ່ກະຊວງອຸດສາຫະກຳ ແລະ ການຄ້າ. ເພື່ອຮ້ອງຂໍໂຄຕ້ານຳເຂົ້ານ້ຳມັນ

ຫຼັງຈາກລາຍງານໂດຍຫຍໍ້ກ່ຽວກັບວາລະທີ 3 ແລ້ວ, ປະທານກອງປະຊຸມໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດ ເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມ ສາມາດຖາມໄດ້ ແຕ່ກໍບໍ່ມີທ່ານໃດສະແດງຄຳເຫັນໃນວາລະນີ້.

ປະທານກອງປະຊຸມຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2025, ວາລະນີ້ກອງປະຊຸມຈະຕ້ອງລົງມະຕິອະນຸມັດ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທັງໝົດ ຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ.

ມະຕິ: ກອງປະຊຸມໄດ້ມີມະຕິເຫັນດີຮັບຮອງແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2025.

- ເຫັນດີຈຳນວນ **92,322,395** ສຽງ ເທົ່າກັບ **100** ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

<u>ວາລະທີ 4</u> ພິຈາລະນາ ແລະ ຮັບຮອງການບໍ່ຈ່າຍເງິນປັນຜົນຈາກການດຳເນີນທຸລະກິດ ປະຈຳປີ 2024

ປະທານໄດ້ລາຍງານຈາກຜົນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2024 ທີ່ຜ່ານມາເຫັນວ່າບໍລິສັດຂາດທຶນຈາກ ການດຳເນີນທຸລະກິດເທົ່າກັບ (1,756.40) ລ້ານກີບ ດັ່ງນັ້ນ ທາງສະພາບໍລິຫານຈຶ່ງລົງມະຕິບໍ່ໃຫ້ມີການຈ່າຍເງິນປັນຜົນປະຈຳ ປີ 2024.

ປະທານກອງປະຊຸມໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມສາມາດຖາມໄດ້ ແຕ່ກໍບໍ່ມີທ່ານໃດສະແດງຄຳເຫັນໃນວາລະນີ້.

ປະທານກອງປະຊຸມຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງໃຫ້ບໍ່ມີການຈ່າຍເງິນປັນຜົນຈາກການ ດຳເນີນທຸລະກິດ ປະຈຳປີ 2024, ວາລະນີ້ກອງປະຊຸມຈະຕ້ອງລົງມະຕິອະນຸມັດ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳ ນວນສຽງທັງໝົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ.

ມະຕິ: ກອງປະຊຸມໄດ້ມີມະຕິເຫັນດີຮັບຮອງໃຫ້ບໍ່ມີການຈ່າຍເງິນປັນຜົນ ຈາກການດຳເນີນທຸລະກິດປະຈຳປີ 2024

- ເຫັນດີຈຳນວນ **92,322,395** ສຽງ ເທົ່າກັບ **100** ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

<u>ວາລະທີ 5</u> ພິຈາລະນາ ແລະ ອະນຸມັດການແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ການກຳນົດຄ່າຈ້າງຂອງຜູ້ກວດສອບບັນຊີພາຍນອກ ປີ 2025

ປະທານໄດແຈ້ງໃຫ້ກອງປະຊຸມຮັບຊາບວ່າ ອີງຕາມກົດໝາຍວ່າດ້ວຍວິສາຫະກິດ ສະບັບປັບປຸງ ເລກທີ 33/ສພຊ, ລົງວັນທີ 29 ທັນວາ 2022 ແລະ ແຈ້ງການຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ກຳນົດໃຫ້ບໍລິສັດທີ່ຈົດທະບຽນໃນຕະຫຼາດຫຼັກຊັບ ຕ້ອງມີຜູ້ກວດສອບບັນຊີພາຍນອກ ໂດຍຕ້ອງເປັນຜູ້ກວດສອບທີ່ໄດ້ຮັບການຮັບຮອງຈາກສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເຊິ່ງຜ່ານການເຫັນດີຂອງກອງປະຊຸມສະພາບໍລິຫານ, ຈຶ່ງສະເໜີ ບໍລິສັດ ພຣາຍສວໍເຕີເຮົ້າສ ກຸບເປີສ(ລາວ) ຈຳກັດຜູ້ດຽວ (PriceWaterHouseCoopers (Lao) Sole Co., Ltd) ເປັນຜູ້ກວດສອບບັນຊີພາຍນອກ ຂອງບໍລິສັດສະເພາະປະຈຳປີ 2025 ໂດຍມີຄ່າບໍລິການເປັນເງິນຈຳນວນບໍ່ເກີນ 18,000 ໂດລາສະຫະລັດ. ເນື່ອງຈາກ, ບໍລິສັດ ພຣາຍສວໍເຕີເຮົ້າສກຸບເປີສ (ລາວ) ຈຳກັດຜູ້ດຽວ ແມ່ນເປັນຜູ້ກວດສອບບັນຊີໃຫ້ກັບບໍລິສັດມາແຕ່ການປະກາດຈຳໜ່າຍຮຸ້ນໃຫ້ແກ່ມວນຊົນຄັ້ງທຳອິດ, ມີປະສົບການ, ມີຄວາມລະອຽດຮອບຄອບ, ມີຄວາມຊື່ສັດສຸດຈະລິດໃນໜ້າທີ່ ແລະ ເປັນບໍລິສັດກວດສອບບັນຊີທີ່ໄດ້ມາດຕະຖານ ລວມທັງໄດ້ຮັບຄວາມໄວ້ວາງໃຈໃນລະດັບສາກົນ ໃນສ່ວນຂອງຄ່າບໍລິການນັ້ນກໍ່ເປັນຈຳນວນທີ່ເໝາະສົມກັບວຽກງານໃນການກວດກາບັນຊີຂອງບໍລິສັດ ເຊິ່ງມີຈຳນວນຫຼວງຫຼາຍ ແລະ ເພື່ອໃຫ້ມີຄວາມຖືກຕ້ອງ, ໂປ່ງໃສ, ກວດສອບໄດ້ ຈຶ່ງມີຄວາມຈຳເປັນຕ້ອງນຳໃຊ້ບຸກຄະລາກອນທີ່ມີຄວາມຊ່ຽວຊານ ໂດຍບາງທ່ານກໍເປັນບຸກຄະລາກອນຈາກຕ່າງປະເທດ.

ປະທານກອງປະຊຸມໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມ ສາມາດຖາມໄດ້ ແຕ່ກໍບໍ່ມີທ່ານໃດສະແດງຄຳເຫັນໃນວາລະນີ້.

ປະທານກອງປະຊຸມຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ການກຳນົດຄ່າບໍລິການການກວດສອບບັນຊີພາຍນອກ ປະຈຳປີ 2025, ວາລະນີ້ກອງປະຊຸມຈະຕ້ອງລົງມະຕິອະນຸມັດ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທັງຫມົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ.

ມະຕິ: ກອງປະຊຸມໄດ້ມີມະຕິເຫັນດີແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ການກຳນົດຄ່າບໍລິການການກວດສອບບັນຊີພາຍນອກ ປະຈຳປີ 2025

- ເຫັນດີຈຳນວນ **92,322,395** ສຽງ ເທົ່າກັບ **100** ສ່ວນຮ້ອຍ ຂອງຈຳນວນສຽງທັງຫມົດທີ່ເຂົ້າຮ່ວມກອງປະຊຸມ.

<u>ວາລະທີ 6</u> ພິຈາລະນາແຕ່ງຕັ້ງສະມາຊິກສະພາບໍລິຫານແທນສະມາຊິກສະພາບໍລິຫານທີ່ຄົບວາລະ.

ປະທານໄດ້ແຈ້ງໃຫ້ກອງປະຊຸມຮັບຊາບວ່າ ໃນປະຈຸບັນສະມາຊິກສະພາບໍລິຫານຈຳນວນ 3 ທ່ານໄດ້ປະຕິບັດໜ້າທີ່ຕ່າງໆຂອງບໍລິສັດຄົບວາລະຕາມກົດໝາຍວ່າດ້ວຍວິສາຫະກິດຄື 2 ປີ, ຈຳເປັນຕ້ອງໄດ້ມີການເລືອກຕັ້ງສະມາຊິກສະພາບໍລິຫານໃໝ່ ເພື່ອປະຕິບັດໜ້າທີ່ໃນນາມຂອງບໍລິສັດຕໍ່ໄປເຊິ່ງມີລາຍລະອຽດດັ່ງຕໍ່ໄປນີ້:

6.1 ພິຈາລະນາແຕ່ງຕັ້ງ ທ່ານ ປອ. ນາງ ຄຳແພງ ພັດທະດາວົງ ເປັນຮອງປະທານສະພາບໍລິຫານ ແລະ ສະມາຊິກອິດສະຫຼະ ຂອງບໍລິສັດ.

ເພື່ອໃຫ້ການລົງຄະແນນສຽງເປັນໄປໂດຍຍຸຕິທຳ ແລະ ໂປ່ງໃສ ຈຶ່ງໄດ້ຂໍໃຫ້ ທ່ານ ປອ. ນາງ ຄຳແພງ ພັດທະດາວົງ ອອກຈາກຫ້ອງປະຊຸມກ່ອນຊົ່ວຄາວ, ປະທານໄດ້ອ່ານປະຫວັດໂດຍຫຍໍ້ຂອງ ທ່ານ ປອ. ນາງ ຄຳແພງ ພັດທະດາວົງ ລາຍລະອຽດຕາມເອກະສານປະກອບການພິຈາລະນາວາລະທີ 6.

ຫຼັງຈາກອ່ານປະຫວັດໂດຍຫຍໍ້ຂອງ ທ່ານ ປອ. ນາງ ຄຳແພງ ພັດທະດາວົງ ແລ້ວໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມ ສາມາດຖາມໄດ້ ແຕ່ກໍບໍ່ມີທ່ານໃດສະແດງຄຳເຫັນໃນວາລະນີ້.

ປະທານຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແຕ່ງຕັ້ງ ທ່ານ ປອ. ນາງ ຄຳແພງ ພັດທະດາວົງ ເປັນຮອງປະທານສະພາບໍລິຫານ ແລະ ສະມາຊິກອິດສະຫຼະຂອງບໍລິສັດ, ວາລະນີ້ກອງປະຊຸມຈະຕ້ອງລົງມະຕິອະນຸມັດ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທັງໝົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ

ມະຕິ: ກອງປະຊຸມໄດ້ມີມະຕິເຫັນດີຮັບຮອງພິຈາລະນາ ແຕ່ງຕັ້ງ ທ່ານ ປອ. ນາງ ຄຳແພງ ພັດທະດາວົງ ເປັນຮອງປະທານສະພາບໍລິຫານ ແລະ ສະມາຊິກອິດສະຫຼະຂອງບໍລິສັດ.

- ເຫັນດີຈຳນວນ **92,322,395** ສຽງ ເທົ່າກັບ **100** ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ

6.2 ພິຈາລະນາແຕ່ງຕັ້ງ ທ່ານ ເສດ ພັດທະນະມາດ ເປັນສະມາຊິກສະພາບໍລິຫານ ແລະ ຜູ້ອຳນວຍການໃຫຍ່ຂອງບໍລິສັດ.

ເນື່ອງຈາ ທ່ານ ເສດ ພັດທະນະມາດ ເປັນຜູ້ຖືຮຸ້ນ ແລະ ເປັນຜູ້ມີສ່ວນໄດ້ສ່ວນເສຍໃນບັນຫາດັ່ງກ່າວນີ້ຕາມກົດໝາຍວ່າດ້ວຍວິສະຫາກິດ ສະບັບປັບປຸງ ເລກທີ 33/ສພຊ, ລົງວັນທີ 29 ທັນວາ 2022 ມາດຕາ 144 (3) ຈຶ່ງຖືກຈຳກັດສິດໃນການລົງຄະແນນສຽງ ແລະ ໄດ້ຂໍໃຫ້ ທ່ານ ເສດ ພັດທະນະມາດ ອອກຈາກຫ້ອງປະຊຸມກ່ອນຊົ່ວຄາວ, ປະທານໄດ້ອ່ານປະຫວັດໂດຍຫຍໍ້ຂອງ ທ່ານ ເສດ ພັດທະນະມາດ ລາຍລະອຽດຕາມເອກະສານປະກອບການພິຈາລະນາວາລະທີ 6.

ຫຼັງຈາກປະທານໄດ້ອ່ານປະຫວັດໂດຍຫຍໍ້ຂອງ ທ່ານ ເສດ ພັດທະນະມາດ ແລ້ວໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມ ສາມາດຖາມໄດ້ ແຕ່ກໍບໍ່ມີທ່ານໃດສະແດງຄຳເຫັນໃນວາລະນີ້.

ປະທານຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແຕ່ງຕັ້ງ ທ່ານ ເສດ ພັດທະນະມາດ ເປັນສະມາຊິກສະພາບໍລິຫານ ແລະ ຜູ້ອຳນວຍການໃຫຍ່ຂອງບໍລິສັດ, ວາລະນີ້ກອງປະຊຸມຈະຕ້ອງລົງມະຕິອະນຸມັດ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທັງໝົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ

ມະຕິ: ກອງປະຊຸມໄດ້ມີມະຕິເຫັນດີຮັບຮອງພິຈາລະນາ ແຕ່ງຕັ້ງ ທ່ານ ເສດ ພັດທະນະມາດ ເປັນສະມາຊິກສະພາບໍລິຫານ ແລະ ຜູ້ອຳນວຍການໃຫຍ່ຂອງບໍລິສັດ.

- ເຫັນດີຈຳນວນ **92,112,400** ສຽງ ເທົ່າກັບ **100** ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ

6.3 ພິຈາລະນາແຕ່ງຕັ້ງ ທ່ານ ນາງ ດວງສະໄໝ ເລົ່າຝຸ ເປັນສະມາຊິກສະພາບໍລິຫານ ແລະ ສະມາຊິກອິດສະຫຼະຂອງ ບໍລິສັດ.

ເພື່ອໃຫ້ການລົງຄະແນນສຽງເປັນໄປໂດຍຍຸຕິທຳ ແລະ ໂປ່ງໃສ ຈຶ່ງໄດ້ຂໍໃຫ້ ທ່ານ ນາງ ດວງສະໄໝ ເລົ່າຝຸ ອອກຈາກຫ້ອງປະຊຸມກ່ອນຊົ່ວຄາວ, ປະທານໄດ້ອ່ານປະຫວັດໂດຍຫຍໍ້ຂອງ ທ່ານ ນາງ ດວງສະໄໝ ເລົ່າຝຸ ລາຍລະອຽດຕາມເອກະສານປະກອບການພິຈາລະນາ ວາລະທີ 6.

ຫຼັງຈາກປະທານໄດ້ອ່ານປະຫວັດໂດຍຫຍໍ້ຂອງ ທ່ານ ນາງ ດວງສະໄໝ ເລົ່າຝຸ ແລ້ວໄດ້ເປີດໂອກາດເຊີນຜູ້ຖືຮຸ້ນ ປະກອບຄຳຄິດເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມ ສາມາດຖາມໄດ້ ແຕ່ກໍບໍ່ມີທ່ານໃດສະແດງຄຳເຫັນໃນວາລະນີ້.

ປະທານຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແຕ່ງຕັ້ງ ທ່ານ ນາງ ດວງສະໄໝ ເລົ່າຝຸ ເປັນສະມາຊິກສະພາບໍລິຫານ ຂອງບໍລິສັດ, ວາລະນີ້ກອງປະຊຸມຈະຕ້ອງລົງມະຕິອະນຸມັດ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທັງໝົດຂອງ ຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ

ມະຕິ: ກອງປະຊຸມໄດ້ມີມະຕິເຫັນດີຮັບຮອງພິຈາລະນາ ແຕ່ງຕັ້ງ ທ່ານ ນາງ ດວງສະໄໝ ເລົ່າຝຸ ເປັນສະມາຊິກສະພາບໍລິຫານ ແລະ ສະມາຊິກອິດສະຫຼະຂອງບໍລິສັດ.

- ເຫັນດີຈຳນວນ **92,322,395** ສຽງ ເທົ່າກັບ **100** ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ

ຖືວ່າໄດ້ພິຈາລະນາຄົບວາລະການປະຊຸມແລ້ວ, ແລະ ປະທານໄດ້ສະເໜີທີ່ປະຊຸມສຳຫຼັບຜູ້ທີ່ຢາກປະກອບຄຳຄິດຄຳເຫັນ ຕື່ມ ເຊິ່ງໄດ້ມີຄຳເຫັນເພີ່ມເຕີມໃນວາລະທີ 6 ດັ່ງນີ້:

- ຜູ້ຕ່າງໜ້າຜູ້ຖືຮຸ້ນຕີວແທນຈາກ **Mr. Kraiwal Kadavanich** ເຫັນວ່າໃນວາລະທີ 6 ສະບັບພາສາລາວໄດ້ລະບຸ ຄວາມໝາຍແບບໜຶ່ງ ແຕ່ສະບັບພາສາອັງກິດແມ່ນມີຄວາມໝາຍທີ່ແຕກຕ່າງອອກໄປ ແລະ ສະເໜີໃຫ້ເພີ່ມພາສາທີ 3 ເຊິ່ງແມ່ນພາສາໄທເຂົ້າມາໃນການເຮັດເອກະສານຕ່າງຂອງບໍລິສັດເພີ່ມເຕີມ
- **ທ່ານ ອະພິສິດ ຣຸຈິກຽດກຳຈອນ** ປະທານກອງປະຊຸມໄດ້ຮັບຊາບໃນການສະເໜີຄຳຄິດເຫັນພ້ອມທັງມອບໃຫ້ກອງ ເລຂາກອງປະຊຸມແກ້ໄຂໃຫ້ຖືກຕ້ອງ.

ປະທານໄດ້ກ່າວຄຳຂອບໃຈບັນດາທ່ານຜູ້ຖືຮຸ້ນ ແລະ ແຂກຜູ້ທີ່ມີກຽດທຸກໆທ່ານ ຂໍອວຍພອນໄຊໃຫ້ບັນດາທ່ານ ຈົ່ງມີ ສຸຂະພາບແຂງແຮງ ປະສົບຜົນສຳເລັດໃນໜ້າທີ່ການງານ ແລະ ຈົ່ງມີສຸຂະພາບແຂງແຮງ.

ດັ່ງນັ້ນ ປະທານກ່າວປິດກອງປະຊຸມເວລາ 15:30 ໂມງ, ຈຶ່ງຮຽນມາເພື່ອຊາບ.

ບໍລິສັດ ລາວ ອາໂກຣເທັກ ມະຫາຊົນ Lao Agro Tech Public Company

ທ່ານ ອະພິສິດ ຣຸຈິກຽດກາຈອນ
ປະທານກອງປະຊຸມ

ຜູ້ບັນທຶກກອງປະຊຸມ

ສຸກັນຍາ ຈຳປາແສງ
Sukanya JUMPASAENG

ບໍລິສັດ ລາວອາໂກຣເທັກ ມະຫາຊົນ ແລະ ບໍລິສັດໃນເຄືອ

ເອກະສານລາຍງານການເງິນສັງລວມກິດຈະການ

ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2025

ສາລະບານ	**ໜ້າ**
ບົດລາຍງານ ຂອງຜູ້ກວດສອບອິດສະຫຼະ	1 - 4
ໃບລາຍງານຖານະການເງິນສັງລວມກິດຈະການ	5
ໃບລາຍງານຜົນໄດ້ຮັບສັງລວມກິດຈະການ	6
ໃບລາຍງານສ່ວນປ່ຽນແປງທຶນສັງລວມກິດຈະການ	7
ໃບລາຍງານກະແສເງິນສົດສັງລວມກິດຈະການ	8 - 9
ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນສັງລວມກິດຈະການ	10 - 27

ບົດລາຍງານ ຂອງຜູ້ກວດສອບອິດສະຫຼະ

ເຖິງ: ຜູ້ຖືຮຸ້ນ ແລະ ສະພາຜູ້ບໍລິຫານຂອງ ບໍລິສັດ ລາວອາໂກຣເທັກ ມະຫາຊົນ

ຄວາມເຫັນ

ພວກເຮົາມີຄວາມເຫັນວ່າເອກະສານລາຍງານການເງິນສັງລວມກິດຈະການສິ້ນສຸດວັນທີ 31 ທັນວາ 2025 ຂອງ ບໍລິສັດ ລາວອາໂກຣເທັກ ມະຫາຊົນ (ບໍລິສັດ) ແລະ ບໍລິສັດໃນເຄືອ (ກຸ່ມບໍລິສັດ) ໄດ້ສະແດງສະຖານະທາງການເງິນສັງລວມກິດຈະການຂອງບໍລິສັດ ຢ່າງຖືກຕ້ອງ ແລະ ສອດຄ່ອງກັບນະໂຍບາຍການບັນຊີ ຊຶ່ງອະທິບາຍໃນ ບົດອະທິບາຍຊ້ອນທ້າຍ ຂໍ້ທີ 2 ຂອງເອກະສານລາຍງານສະບັບນີ້.

ການກວດສອບຂອງພວກເຮົາມີດັ່ງນີ້:

ເອກະສານລາຍງານການເງິນຂອງບໍລິສັດປະກອບດ້ວຍ:

- ໃບລາຍງານຖານະການເງິນສັງລວມກິດຈະການ ວັນທີ 31 ທັນວາ 2025
- ໃບລາຍງານຜົນໄດ້ຮັບສັງລວມກິດຈະການ ສຳລັບປີສິ້ນສຸດມື້ດຽວກັນ
- ໃບລາຍງານສ່ວນປ່ຽນແປງທຶນສັງລວມກິດຈະການ ສຳລັບປີສິ້ນສຸດມື້ດຽວກັນ
- ໃບລາຍງານກະແສເງິນສົດສັງລວມກິດຈະການ ສຳລັບປີສິ້ນສຸດມື້ດຽວກັນ ແລະ
- ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນສັງລວມກິດຈະການທີ່ສັງລວມຫຼັກການບັນຊີທີ່ສຳຄັນ ແລະ ຂໍ້ມູນອະທິບາຍອື່ນໆ.

ພື້ນຖານໃນການອອກຄວາມເຫັນ

ພວກເຮົາໄດ້ດຳເນີນການກວດສອບ ຕາມມາດຕະຖານການກວດສອບສາກົນ (ISAs). ຄວາມຮັບຜິດຊອບຂອງພວກເຮົາພາຍໃຕ້ມາດຕະຖານໄດ້ລະບຸໄວ້ໃນໜ້າທີ່ຮັບຜິດຊອບຂອງຜູ້ກວດສອບອິດສະຫຼະ ສຳລັບການກວດສອບ ເອກະສານລາຍງານການເງິນສັງລວມກິດຈະການ ໃນບົດລາຍງານພວກເຮົາ.

ພວກເຮົາເຊື່ອວ່າຫຼັກຖານການກວດສອບທີ່ພວກເຮົາໄດ້ຮັບພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານສຳລັບການອອກຄວາມເຫັນຂອງພວກເຮົາ.

ຄວາມເປັນອິດສະຫລະ

ພວກເຮົາມີຄວາມເປັນອິດສະຫຼະ ຈາກກຸ່ມບໍລິສັດ ຕາມຂໍ້ກຳນົດຈັນຍາບັນ ຂອງຜູ້ປະກອບວິຊາຊີບນັກບັນຊີ (ລວມເຖິງມາດຕະຖານຄວາມເປັນອິດສະຫຼະສາກົນ) ທີ່ກຳນົດໂດຍຄະນະກຳມະການຈັນຍາບັນສາກົນ ສຳລັບນັກບັນຊີ (IESBA Code) ທີ່ບັງຄັບໃຊ້ກັບການກວດສອບງົບການເງິນຂອງບໍລິສັດທີ່ຮັບໃຊ້ຜົນປະໂຫຍດຂອງສາທາລະນະ. ພວກເຮົາໄດ້ປະຕິບັດຕາມຄວາມຮັບຜິດຊອບຫຼັກຈັນຍາບັນອື່ນໆ, ທີ່ສອດຄ່ອງກັບ ຈັນຍາບັນວິຊາຊີບນັກບັນຊີ (IESBA Code).

ບໍລິສັດ ພຣາຍສວໍເຕີເຮົ້າສກຸບເປີສ (ລາວ) ຈຳກັດຜູ້ດຽວ
ອາຄານ AGL, ຊັ້ນ 4, ອາຄານເລກທີ 33ຖະໜົນລ້ານຊ້າງ,
ຕູ້ ປ.ນ 7003, ນະຄອນຫຼວງວຽງຈັນ, ສປປ ລາວ,
ໂທ: +856 21 222718-9

www.pwc.com

ເນັ້ນໜັກໃສ່ໃນເລື່ອງ - ພື້ນຖານ ການກະກຽມ

ພວກເຮົາໃຫ້ຂໍ້ສັງເກດຕໍ່ກັບບົດອະທິບາຍຊ້ອນທ້າຍທີ 2 ຂອງເອກະສານລາຍງານການເງິນສັງລວມກິດຈະການ, ເຊິ່ງໄດ້ອະທິບາຍເຖິງ ພື້ນຖານການກະກຽມ. ເອກະສານລາຍງານການເງິນສັງລວມກິດຈະການໄດ້ສະແດງບົນພື້ນຖານການບັນຊີທີ່ຖືກນຳໃຊ້ໃນການກະກຽມບົດ ລາຍງານການເງິນສະບັບນີ້ ອາດມີຄວາມແຕກຕ່າງກັບຈາກຫຼັກການບັນຊີຂອງ ມາດຕະຖານການລາຍງານການເງິນສາກົນ ("IFRS"). ດັ່ງນັ້ນ ,ຜູ້ທີ່ນຳໃຊ້ ຄວນມີຄວາມເຂົ້າໃຈວ່າ ເອກະສານລາຍງານການເງິນສັງລວມກິດຈະການນີ້ ບໍ່ໄດ້ມີຈຸດປະສົງເພື່ອສະແດງຖານະການເງິນ ແລະ ຜົນການດຳເນີນງານ ແລະ ກະແສເງິນສົດສັງລວມກິດຈະການຕາມ IFRS. ທັ້ງນີ້ຄວາມເຫັນ ຂອງພວກເຮົາບໍ່ໄດ້ມີການປ່ຽນແປງ ອັນເນື່ອງ ມາຈາກເລື່ອງທີ່ກ່າວມາຂ້າງເທິງນັ້ນ.

ເລື່ອງສຳຄັນໃນການກວດສອບ

ເລື່ອງສຳຄັນໃນການກວດສອບ ຄື ເລື່ອງຕ່າງໆ, ທີ່ມີຄວາມສຳຄັນທີ່ສຸດຕາມການປະເມີນໂດຍຄວາມຮູ້ຄວາມສາມາດຂອງພວກເຮົາໃນການ ກວດສອບເອກະສານລາຍງານການເງິນສຳລັບປີປັດຈຸບັນ. ພວກເຮົາກຳນົດບັນຫາໜຶ່ງທີ່ສຳຄັນໃນການກວດສອບເຊັ່ນ: ການຮັບຮູ້ລາຍຮັບ. ບັນຫາດັ່ງກ່າວນີ້ໄດ້ມາລວມໃນການກວດສອບເອກະສານລາຍງານການເງິນສັງລວມກິດຈະການເພື່ອສະແດງຄວາມເຫັນຂອງພວກເຮົາ ພ້ອມ ນີ້ພວກເຮົາບໍ່ໄດ້ສະແດງຄວາມເຫັນແຍກຕ່າງຫາກສຳລັບເລື່ອງເຫຼົ່ານີ້.

ເລື່ອງສຳຄັນໃນການກວດສອບ	**ວິທີການກວດສອບ**
ການຮັບຮູ້ລາຍຮັບ **ອີງຕາມບົດອະທິບາຍຊ້ອນທ້າຍເອກະສານລາຍງານ ການເງິນຂໍ້ 2.15 'ນະໂຍບາຍການບັນຊີທີ່ສຳຄັນ ການຮັບຮູ້ລາຍຮັບ' ແລະ ອີງຕາມບົດອະທິບາຍ ຊ້ອນທ້າຍເອກະສານລາຍງານການເງິນຂໍ້ 19 'ລາຍ ຮັບຈາກການຂາຍ'.** ລາຍຮັບຈາກການຂາຍສິນຄ້າ ແມ່ນຮັບຮູ້ ເມື່ອສິນຄ້າໄດ້ຖືກສົ່ງ ມອບໃຫ້ກັບຜູ້ຊື້. ເຖິງຢ່າງໃດກໍ່ຕາມ, ຍັງມີຄວາມກັງວົນວ່າ ລາຍຮັບອາດໄດ້ຮັບການຮັບຮູ້ກ່ອນກຳນົດຫາກອອກໃບຮຽກ ເກັບເງິນ ແລະ ໃບແຈ້ງສົ່ງສິນຄ້າຕອນທ້າຍປີ, ເຊິ່ງສິນຄ້າອາດ ຈະຍັງບໍ່ຖືກສົ່ງໄປໃຫ້ລູກຄ້າ. ອາດກໍ່ໃຫ້ເກີດຄວາມສ່ຽງເພີ່ມ ຂຶ້ນເມື່ອສິນຄ້າທີ່ສົ່ງໃຫ້ລູກຄ້າຢູ່ໄລຍະທາງທີ່ຫ່າງໄກ ຫຼື ເມື່ອ ລູກຄ້າຫາກຢຸດການເຮັດວຽກຊົ່ວຄາວເຊັ່ນ: ການພັກຊົ່ວຄາວ ຕອນທ້າຍປີ ຫຼື ອັນພັກທາງລັດຖະການ. ດັ່ງນັ້ນ ມີຄວາມເປັນໄປໄດ້ກ່ຽວກັບຄວາມສ່ຽງທີ່ເອກະສານ ລາຍງານການເງິນຈະຜິດພາດກ່ຽວກັບລາຍການທີ່ເກີດຂຶ້ນທ້າຍ ປີ.	ພວກເຮົາປະຕິບັດຕາມຂັ້ນຕອນດັ່ງຕໍ່ໄປນີ້: • ປະເມີນ ແລະ ທົດສອບ ປະສິດທິພາບໃນການອອກແບບ ແລະ ການດຳເນີນງານຂອງການຮັບຮູ້ລາຍຮັບ ໂດຍສຸມໃສ່ການຄວບຄຸມ ເລື່ອງເວລາ ແລະ ຄວາມຄົບຖ້ວນຂອງການຂາຍ • ທົດສອບການສົມທຽບຈາກການຄວບຄຸມໃນການເປີກສິນຄ້າອອກ ສາງ ກັບ ບັນຊີໃຫຍ່ແຍກປະເພດຂອງເລກບັນຊີລາຍຮັບລວມທັ້ງ ການກວດສອບລາຍການປັບປຸງທຽບໃສ່ກັບເອກະສານທີ່ກ່ຽວຂ້ອງ • ເລືອກລາຍການລາຍຮັບກ່ອນ ແລະ ຫຼັງປີການບັນຊີມາທົດສອບວ່າ ບັນທຶກເໝາະສົມກັບເງື່ອນໄຂທີ່ຢູ່ໃນໃບແຈ້ງໜີ້ ຫຼື ບໍ່ • ທົດສອບລາຍການເຄື່ອນໄຫວຂອງລາຍຮັບສຳລັບສິນຄ້າທີ່ຖືກຂາຍ ໃນລະຫວ່າງປີການບັນຊີໂດຍມີການສົມທຽບລາຍການເຄື່ອນໄຫວ ຂອງລາຍຮັບກັບໃບສົ່ງສິນຄ້າທີ່ມີລາຍເຊັນລູກຄ້າ. • ໄດ້ມີການສອບຖາມຜູ້ບໍລິຫານກ່ຽວກັບຄວາມຄົບຖ້ວນ ແລະ ບັນ ທຶກບັນຊີໃຫ້ຖືກຕ້ອງສຳລັບການຮັບຮູ້ລາຍຮັບ. ຈາກວິທີການກວດສອບ, ພວກເຮົາພົບວ່າການຮັບຮູ້ລາຍຮັບແມ່ນເປັນໄປ ຕາມນະໂຍບາຍການບັນຊີ ແລະ ຫຼັກຖານທີ່ກວດສອບ.

ບໍລິສັດ ພຣາຍສວໍເຕີເຮົ້າສກຸບເປີສ (ລາວ) ຈຳກັດຜູ້ດຽວ
ອາຄານ AGL, ຊັ້ນ 4, ອາຄານເລກທີ 33ຖະໜົນລ້ານຊ້າງ,
ຕູ້ ປ.ນ 7003, ນະຄອນຫຼວງວຽງຈັນ, ສປປ ລາວ,
ໂທ: +856 21 222718-9

ຂໍ້ມູນອື່ນ

ຜູ້ອຳນວຍການມີຄວາມຮັບຜິດຊອບຕໍ່ຂໍ້ມູນອື່ນເຊິ່ງປະກອບມີ ຂໍ້ມູນລວມຢູ່ໃນເອກະສານລາຍງານການເງິນສັງລວມກິດຈະການປະຈຳປີ (ແຕ່ບໍ່ໄດ້ລວມຂໍ້ມູນເຂົ້າໃນເອກະສານລາຍງານການເງິນ ແລະ ບົດລາຍງານຂອງຜູ້ກວດສອບທີ່ຢູ່ໃນເອກະສານລາຍງານນັ້ນ). ພວກເຮົາຄາດວ່າຈະໄດ້ຮັບເອກະສານ ລາຍງານການເງິນປະຈຳປີ ພາຍຫຼັງວັນທີຂອງບົດລາຍງານຂອງຜູ້ກວດສອບ.

ຄວາມເຫັນຂອງພວກເຮົາຕໍ່ເອກະສານລາຍງານການເງິນສັງລວມກິດຈະການບໍ່ຄອບຄຸມເຖິງຂໍ້ມູນອື່ນ ແລະ ພວກເຮົາບໍ່ໄດ້ໃຫ້ຄວາມເຊື່ອໝັ້ນຕໍ່ຂໍ້ມູນເຫຼົ່ານັ້ນ.

ຄວາມຮັບຜິດຊອບຂອງພວກເຮົາຕໍ່ການກວດສອບເອກະສານລາຍງານການເງິນສັງລວມກິດຈະການຄື ການອ່ານ ແລະ ພິຈາລະນາວ່າຂໍ້ມູນອື່ນທີ່ມີຄວາມຂັດແຍ່ງທີ່ເປັນສາລະສຳຄັນ ກັບເອກະສານລາຍງານການເງິນ ຫລື ກັບຄວາມຮູ້ທີ່ໄດ້ມາຈາກການກວດສອບຂອງພວກເຮົາ ຫຼື ເຫັນວ່າຂໍ້ມູນອື່ນມີການສະແດງຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງທີ່ເປັນສາລະສຳຄັນ ຫຼື ບໍ່.

ຫາກພວກເຮົາພົບວ່າມີການສະແດງຂໍ້ມູນທີ່ຜິດຕໍ່ຄວາມເປັນຈິງໃນບົດລາຍງານປະຈຳປີ. ພວກເຮົາຕ້ອງໄດ້ແຈ້ງໃຫ້ຄະນະກຳມະການກວດສອບຮັບຮູ້.

ຄວາມຮັບຜິດຊອບຂອງຜູ້ບໍລິຫານ ຕໍ່ເອກະສານລາຍງານການເງິນສັງລວມກິດຈະການ

ຜູ້ອຳນວຍການມີຄວາມຮັບຜິດຊອບສຳລັບການກະກຽມເອກະສານລາຍງານການເງິນສັງລວມກິດຈະການ ແລະ ນຳສະເໜີ ໂດຍສອດຄ່ອງກັບ ຫຼັກການບັນຊີ ດັ່ງທີ່ໄດ້ອະທິບາຍໄວ້ໃນ ບົດອະທິບາຍຊ້ອນທ້າຍຂໍ້ທີ 2 ຂອງເອກະສານລາຍງານການເງິນນີ້ ແລະ ການຄວບຄຸມພາຍໃນເຊິ່ງຜູ້ບໍລິຫານໄດ້ກຳນົດໄວ້ຢ່າງພຽງພໍ ເພື່ອສ້າງເອກະສານລາຍງານການເງິນສັງລວມກິດຈະການ ທີ່ປາສະຈາກການສະແດງຂໍ້ມູນຜິດພາດທີ່ເປັນສາລະສຳຄັນ ບໍ່ວ່າເນື່ອງມາຈາກການສໍ້ໂກງ ຫຼື ຂໍ້ຜິດພາດ.

ໃນການກະກຽມເອກະສານລາຍງານການເງິນສັງລວມກິດຈະການ, ຜູ້ບໍລິຫານມີຄວາມຮັບຜິດຊອບໃນການປະເມີນຄວາມສາມາດຂອງບໍລິສັດໃນການດຳເນີນງານຢ່າງຕໍ່ເນື່ອງ, ເປີດເຜີຍເລື່ອງທີ່ກ່ຽວຂ້ອງກ່ຽວກັບການດຳເນີນງານຕໍ່ເນື່ອງ ຕາມຄວາມເໝາະສົມ ແລະ ການໃຊ້ພື້ນຖານບັນຊີສຳລັບການດຳເນີນງານຢ່າງຕໍ່ເນື່ອງ. ຍົກເວັ້ນ ຜູ້ອຳນວຍການມີຄວາມຕັ້ງໃຈທີ່ຈະຍຸບບໍລິສັດ ຫຼື ບໍ່ສາມາດດຳເນີນງານຢ່າງຕໍ່ເນື່ອງໄດ້.

ຄະນະກຳມະການກວດສອບ ໄດ້ຊ່ວຍຜູ້ອຳນວຍການ ເບິ່ງແຍງຂັ້ນຕອນໃນການກະກຽມເອກະສານລາຍງານການເງິນສັງລວມກິດຈະການ.

ຄວາມຮັບຜິດຊອບຂອງຜູ້ກວດສອບ ຕໍ່ເອກະສານລາຍງານການເງິນສັງລວມກິດຈະການ

ວັດຖຸປະສົງຂອງພວກເຮົາ ແມ່ນເພື່ອໃຫ້ຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນວ່າເອກະສານລາຍງານການເງິນສັງລວມກິດຈະການໂດຍປາສະຈາກການສະແດງຂໍ້ມູນຜິດພາດທີ່ເປັນສາລະສຳຄັນ, ບໍ່ວ່າເນື່ອງຈາກການສໍ້ໂກງ ຫຼື ຂໍ້ຜິດພາດ ແລະ ສະເໜີຄວາມເຫັນຂອງພວກເຮົາຕໍ່ເອກະສານລາຍງານການເງິນສັງລວມກິດຈະການ ເຊິ່ງລວມຄວາມເຫັນຂອງຜູ້ກວດສອບ. ຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນ ຄືຄວາມເຊື່ອໝັ້ນໃນລະດັບສູງແຕ່ບໍ່ໄດ້ເປັນການຮັບປະກັນວ່າການດຳເນີນການກວດສອບຕາມມາດຕະຖານການກວດສອບບັນຊີສາກົນຈະສາມາດກວດພົບ ຫຼື ປ້ອງກັນການສະແດງຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງທີ່ເປັນສາລະສຳຄັນສະເໜີໄປ, ຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງອາດເກີດຈາກການສໍ້ໂກງ ຫຼື ຂໍ້ຜິດພາດ ແລະ ຖືວ່າເປັນສາລະສຳຄັນ ເມື່ອຄາດການຢ່າງສົມເຫດສົມຜົນໄດ້ວ່າລາຍການຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງແຕ່ລະລາຍການ ຫຼື ທຸກລາຍການລວມກັນມີຜົນຕໍ່ການຕັດສິນໃຈທາງເສດຖະກິດຕໍ່ຜູ້ໃຊ້ເອກະສານລາຍງານການເງິນເຫຼົ່ານີ້.

ໃນການກວດສອບຂອງພວກເຮົາອີງຕາມມາດຕະຖານການກວດສອບບັນຊີສາກົນ, ພວກເຮົາໄດ້ໃຊ້ການປະເມີນຕາມຫຼັກວິຊາຊີບທີ່ຄວນຈະມີຕະຫຼອດການກວດສອບ, ການດຳເນີນງານຂອງພວກເຮົາລວມມີ:

ບໍລິສັດ ພຣາຍສວໍເຕີເຮົ້າສກຸບເປີສ (ລາວ) ຈຳກັດຜູ້ດຽວ
ອາຄານ AGL, ຊັ້ນ 4, ອາຄານເລກທີ 33ຖະໜົນລ້ານຊ້າງ,
ຕູ້ ປ.ນ 7003, ນະຄອນຫຼວງວຽງຈັນ, ສປປ ລາວ,
ໂທ: +856 21 222718-9

- ການລະບຸ ແລະ ການປະເມີນຄວາມສ່ຽງຂອງການລາຍງານຜິດພາດທີ່ເປັນສາລະສຳຄັນຂອງເອກະສານລາຍງານການເງິນສັງລວມ ກິດຈະການ ເນື່ອງຈາກການສໍ້ໂກງ ຫຼື ຂໍ້ຜິດພາດ. ການວາງແຜນ ແລະ ການດຳເນີນງານຕາມວິທີການກວດສອບເພື່ອຕອບສະໜອງຕໍ່ຄວາມສ່ຽງເຫຼົ່ານັ້ນ ແລະ ຫຼັກຖານທີ່ໄດ້ຈາກການກວດສອບ ທີ່ພວກເຮົາໄດ້ຮັບ ແມ່ນພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານສຳລັບການສະແດງຄຳເຫັນຂອງພວກເຮົາ. ຄວາມສ່ຽງທີ່ຈະບໍ່ພົບຂໍ້ມູນທີ່ຜິດພາດ ແລະ ເປັນສາລະສຳຄັນ ເຊິ່ງເກີດຈາກການສໍ້ໂກງມີສູງກວ່າຄວາມສ່ຽງທີ່ເກີດຈາກຂໍ້ຜິດພາດ, ເນື່ອງຈາກການສໍ້ໂກງອາດເກີດຈາກການສົມຮູ້ຮ່ວມຄິດປອມແປງເອກະສານຫຼັກຖານ, ການຕັ້ງໃຈລະເວັ້ນທີ່ຈະສະແດງຂໍ້ມູນທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງ ຫຼື ການເຂົ້າແຊກແຊງການຄວບຄຸມພາຍໃນ.
- ທຳຄວາມເຂົ້າໃຈ ແລະ ປະເມີນປະສິດທິພາບຂອງລະບົບການຄວບຄຸມພາຍໃນທີ່ກ່ຽວຂ້ອງກັບການກວດສອບ ເພື່ອກຳນົດຂັ້ນຕອນໃນການກວດສອບທີ່ເໝາະສົມກັບສະພາບຕົວຈິງ, ແຕ່ບໍ່ມີຈຸດປະສົງເພື່ອສະແດງຄວາມເຫັນກ່ຽວກັບ ປະສິດທິຜົນຂອງການຄວບຄຸມພາຍໃນຂອງບໍລິສັດ.
- ປະເມີນຄວາມເໝາະສົມຂອງການນຳໃຊ້ນະໂຍບາຍການບັນຊີ ແລະ ຄວາມສົມເຫດສົມຜົນຂອງການຄາດຄະເນທາງບັນຊີ ລວມທັງການເປີດເຜີຍຂໍ້ມູນທີ່ກ່ຽວຂ້ອງທີ່ສ້າງຂຶ້ນໂດຍຜູ້ອຳນວຍການ.
- ສະຫລຸບກ່ຽວກັບຄວາມເໝາະສົມຂອງການໃຊ້ພື້ນຖານບັນຊີສຳລັບການດຳເນີນງານຢ່າງຕໍ່ເນື່ອງຂອງຜູ້ອຳນວຍການ ແລະ ຫຼັກຖານການກວດສອບທີ່ໄດ້ຮັບວ່າບໍ່ມີຄວາມແນ່ນອນທີ່ມີສາລະສຳຄັນ ທີ່ກ່ຽວກັບເຫດການ ຫຼື ສະພາບຕົວຈິງທີ່ອາດມີປັດໃຈໃຫ້ເກີດຂໍ້ສົງໄສຢ່າງທີ່ມີສາລະສຳຄັນຕໍ່ຄວາມສາມາດໃນການດຳເນີນງານຢ່າງຕໍ່ເນື່ອງຂອງບໍລິສັດ ຫຼື ບໍ່, ຖ້າພວກເຮົາສະຫຼຸບໄດ້ວ່າຄວາມບໍ່ແນ່ນອນທີ່ມີສາລະສຳຄັນ ພວກເຮົາຕ້ອງບັນທຶກໃນບົດລາຍງານຂອງຜູ້ກວດສອບຂອງພວກເຮົາທີ່ໄດ້ເປີດເຜີຍກ່ຽວກັບເອກະສານລາຍງານການເງິນສັງລວມກິດຈະການເຊິ່ງການເປີດເຜີຍດັ່ງກ່າວບໍ່ພຽງພໍທີ່ຈະເຮັດໃຫ້ ຄວາມເຫັນຂອງພວກເຮົາຈະປ່ຽນແປງໄປ. ຂໍ້ສະຫຼຸບຂອງພວກເຮົາຂຶ້ນຢູ່ກັບຫຼັກຖານການກວດສອບທີ່ໄດ້ຮັບຈົນເຖິງວັນທີ່ໃນບົດລາຍງານຂອງພວກເຮົາ. ເຖິງຢ່າງໃດກໍຕາມ, ເຫດການ ຫຼື ສະພາບຕົວຈິງໃນອະນາຄົດອາດເປັນສາເຫດໃຫ້ບໍລິສັດບໍ່ສາມາດດຳເນີນງານຢ່າງຕໍ່ເນື່ອງ.
- ການຫາຫຼັກຖານທີ່ເໝາະສົມ ແລະ ພຽງພໍສຳລັບການອອກຄວາມເຫັນຂອງພວກເຮົາຕໍ່ງົບການເງິນລວມກິດຈະການ ບົນພື້ນຖານຂໍ້ມູນການເງິນ ຫຼື ກິດຈະກຳຂອງກຸ່ມບໍລິສັດ. ນອກຈາກນີ້ພວກເຮົາຍັງຮັບຜິດຊອບໃນການຊີ້ນຳ ແລະ ດຳເນີນການກວດສອບໃນລະດັບຂອງກຸ່ມບໍລິສັດແຕ່ພວກເຮົາຍັງຈະເປັນຄົນຮັບຜິດຊອບຕໍ່ຄວາມເຫັນຂອງພວກເຮົາ.

ພວກເຮົາໄດ້ສື່ສານກັບຄະນະກຳມະການການກວດສອບກ່ຽວກັບຂອບເຂດ ແລະ ຊ່ວງເວລາຂອງການກວດສອບຕາມທີ່ໄດ້ວາງແຜນໄວ້. ເຊິ່ງລວມເຖິງບັນຫາທີ່ສຳຄັນທີ່ພົບເຫັນໃນການກວດສອບ ແລະ ຂໍ້ບົກພ່ອງຂອງການຄວບຄຸມພາຍໃນທີ່ເປັນສາລະສຳຄັນ ທີ່ພົບລະຫວ່າງການກວດສອບຂອງພວກເຮົາ.

ພວກເຮົາໄດ້ໃຫ້ຄຳຮັບຮອງແກ່ຄະນະກຳມະການກວດສອບວ່າ ພວກເຮົາໄດ້ປະຕິບັດຕາມຂໍ້ກຳນົດຫລັກຈັນຍາບັນກ່ຽວຂ້ອງກັບຄວາມເປັນອິດສະຫຼະ ແລະ ໄດ້ສື່ສານກັບຄະນະກຳມະການກວດສອບກ່ຽວກັບຄວາມສຳພັນທັງໝົດ ລວມເຖິງເລື່ອງອື່ນທີ່ພວກເຮົາເຊື່ອວ່າມີເຫດຜົນທີ່ອາດພິຈາລະນາເຖິງຜົນກະທົບຕໍ່ຄວາມເປັນອິດສະຫຼະ ຂອງພວກເຮົາ ແລະ ຫລັກການທີ່ພວກເຮົາໃຊ້ເພື່ອປ້ອງກັນການຂາດຄວາມເປັນອິດສະຫຼະ.

ຈາກເລື່ອງທີ່ສື່ສານກັບຄະນະກຳມະການກວດສອບ ພວກເຮົາໄດ້ພິຈາລະນາເລື່ອງຕ່າງໆທີ່ເປັນສາລະສຳຄັນ ທີ່ສຸດໃນການກວດສອບເອກະສານລາຍງານການເງິນຄັ້ງນີ້ ແລະ ກຳນົດເປັນເລື່ອງສຳຄັນໃນການກວດສອບ. ພວກເຮົາໄດ້ອະທິບາຍເລື່ອງເຫຼົ່ານີ້ໃນບົດລາຍງານຂອງຜູ້ກວດສອບ. ຍົກເວັ້ນກົດໝາຍ ຫຼື ຂໍ້ບັງຄັບບໍ່ໃຫ້ເປີດເຜີຍຕໍ່ສາທາລະນະກ່ຽວກັບເລື່ອງດັ່ງກ່າວ ຫຼື ໃນສະພາບການທີ່ຍາກຈະເກີດຂຶ້ນ ພວກເຮົາພິຈາລະນາວ່າບໍ່ຄວນສື່ສານເລື່ອງດັ່ງກ່າວໃນບົດລາຍງານຂອງພວກເຮົາ ເພາະການປະຕິບັດດັ່ງກ່າວສາມາດຄາດການໄດ້ຢ່າງສົມເຫດສົມຜົນວ່າຈະມີຜົນກະທົບໃນທາງລົບຫຼາຍກວ່າຜົນປະໂຫຍດ ຕໍ່ສ່ວນໄດ້ເສຍສາທາລະນະຈາກການສື່ສານດັ່ງກ່າວ.

ບໍລິສັດ ພຣາຍສວໍເຕີເຮົ້າສກຸບເປີສ (ລາວ) ຈຳກັດຜູ້ດຽວ

ໂດຍ: ພິງພັນ ດຳຣິງພັນອຸດົມ
ຮຸ້ນສ່ວນ
ນະຄອນຫຼວງວຽງຈັນ, ສປປ ລາວ
ວັນທີ: 7 ເມສາ 2026

ບໍລິສັດ ພຣາຍສວໍເຕີເຮົ້າສກຸບເປີສ (ລາວ) ຈຳກັດຜູ້ດຽວ
ອາຄານ AGL, ຊັ້ນ 4, ອາຄານເລກທີ 33ຖະໜົນລ້ານຊ້າງ,
ຕູ້ ປ.ນ 7003, ນະຄອນຫຼວງວຽງຈັນ, ສປປ ລາວ,
ໂທ: +856 21 222718-9

ໃບລາຍງານຖານະການເງິນສ້ຽງລວມກິດຈະການ
ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2025

	ບິດ ອະທິບາຍ	2025 ກີບ	2024 ກີບ
ຊັບສິນ			
ຊັບສິນໝຸນວຽນ			
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ	3	305,106,388	3,556,622,752
ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ, ສຸດທິ	4	6,535,192,685	7,745,187,515
ເຄື່ອງໃນສາງ, ສຸດທິ	5	747,790,383	210,538,164
ວັດສະດຸສະໜອງໂຮງງານ, ສຸດທິ	6	4,669,439,509	1,321,893,384
ຄ່າເຍື່ອນຊຳລະຕົ້ນທຶນການປູກເບ້ຍປາມເພື່ອຂາຍ	7	994,145,783	799,422,815
ຊັບສິນໝຸນວຽນອື່ນໆ		6,742,603,464	6,413,200,610
ລວມຊັບສິນໝຸນວຽນ		**19,994,278,212**	**20,046,865,240**
ຊັບສິນບໍ່ໝຸນວຽນ			
ຊັບສິນຍັດຄ້ຳທີ່ ມີຫົວຕົ້ນ, ສຸດທິ	8	19,495,483,733	19,820,758,071
ຄ່າເຍື່ອນລໍຖ້າຕັດຕົ້ນທຶນການປູກຕົ້ນປາມ, ສຸດທິ	9	22,267,821,509	22,802,068,802
ຄ່າເຍື່ອນລໍຖ້າຕັດຕົ້ນທຶນການປູກ ຕົ້ນຢີ້ນ້ຳ	10	24,623,473,784	9,158,137,050
ຄ່າເຍື່ອນລໍຖ້າຕັດຕົ້ນທຶນການປູກ ຕົ້ນກະຖິນນາລິງ	11	3,541,497,838	2,860,608,812
ລວມຊັບສິນບໍ່ໝຸນວຽນ		**69,928,276,864**	**54,641,572,735**
ລວມຊັບສິນ		**89,922,555,076**	**74,688,437,975**
ໜີ້ສິນ ແລະ ທຶນເຈົ້າຂອງ			
ໜີ້ສິນ			
ໜີ້ຕ້ອງສ້ຽງການຄ້າ ແລະ ໜີ້ຕ້ອງສ້ຽງອື່ນໆ	12	30,928,473,490	10,710,564,109
ໜີ້ສິນໝຸນວຽນອື່ນໆ	13	259,064,127	55,847,258
ເງິນກູ້ຢືມໄລຍະສັ້ນ	14	2,000,000,000	2,000,000,000
ໜີ້ຕ້ອງສ້ຽງຈາກການເຊົ່າຊື້ໝຸນວຽນ	15	910,475,125	840,316,500
ລວມໜີ້ສິນໝຸນວຽນ		**34,098,012,742**	**13,606,727,867**
ໜີ້ສິນບໍ່ໝຸນວຽນ			
ໜີ້ສິນບໍ່ໝຸນວຽນອື່ນໆ	16	18,223,424,449	18,223,424,449
ລວມໜີ້ສິນບໍ່ໝຸນວຽນ		**18,223,424,449**	**18,223,424,449**
ລວມໜີ້ສິນ		**52,321,437,191**	**31,830,152,316**
ທຶນເຈົ້າຂອງ			
ທຶນຈົດທະບຽນ	17	50,000,000,000	50,000,000,000
ສ່ວນເພີ່ມທຶນ	17	3,269,466,406	3,269,466,406
ກຳໄລ/(ຂາດທຶນ) ສະສົມ			
ຄ້າງສະສົມຕາມລະບຽບການ	18	932,158,245	932,158,245
ຂາດທຶນ ສະສົມລໍຖ້າແບ່ງປັນ		(16,600,506,766)	(11,343,338,992)
ລວມທຶນເຈົ້າຂອງ		**37,601,117,885**	**42,858,285,659**
ລວມໜີ້ສິນ ແລະ ທຶນເຈົ້າຂອງ		**89,922,555,076**	**74,688,437,975**

ທ່ານ ພິງຖານ ພິດຈຳນົງ
ຮອງຜູ້ອຳນວຍການ
ວັນທີ: 7 ເມສາ 2026

ທ່ານ ວັນສະເຫຼີມ ສີສຸຄຳມັ່ງ
ຫົວໜ້າບັນຊີ - ການເງິນ
ວັນທີ: 7 ເມສາ 2026

ບິດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 10 - 27 ແມ່ນເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນສ້ຽງລວມກິດຈະການ.

ໃບລາຍງານຜົນໄດ້ຮັບສັງລວມກິດຈະການ
ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2025

	ປີດ ອະທິບາຍ	2025 ກີບ	2024 ກີບ
ລາຍຮັບຈາກການຂາຍ	19	37,761,303,177	39,810,705,595
ຕົ້ນທຶນໃນການຂາຍ	20	(31,847,103,059)	(31,755,152,281)
ກຳໄລຂັ້ນຕົ້ນ		**5,914,200,118**	**8,055,553,314**
ລາຍຈ່າຍການຂາຍ ແລະ ບໍລິຫານ		(12,281,965,192)	(13,853,798,285)
ລາຍຮັບອື່ນໆ		3,092,732,446	3,947,894,712
(ຂາດທຶນ)/ກຳໄລຈາກອັດຕາແລກປ່ຽນ		(1,705,368,644)	311,249,455
ຂາດທຶນ ຈາກການດຳເນີນງານ		**(4,980,401,272)**	**(1,539,100,804)**
ລາຍຈ່າຍທາງການເງິນ		(276,766,502)	(217,300,153)
ຂາດທຶນຈາກການດຳເນີນງານກ່ອນອາກອນກຳໄລ		**(5,257,167,774)**	**(1,756,400,957)**
ອາກອນກຳໄລ	21	(-)	(-)
ຂາດທຶນ ສຸດທິສຳລັບປີ		**(5,257,167,774)**	**(1,756,400,957)**
ຂາດທຶນ ຕໍ່ຮຸ້ນ			
ຂາດທຶນ ພື້ນຖານຕໍ່ຮຸ້ນ	22	(52.57)	(17.56)

ທ່ານ ພິງຖານ ພິດຈຳນົງ
ຮອງຜູ້ອຳນວຍການ
ວັນທີ: 7 ເມສາ 2026

ທ່ານ ວັນສະເຫຼີມ ສີສຸຄຳມັ່ງ
ຫົວໜ້າບັນຊີ - ການເງິນ
ວັນທີ: 7 ເມສາ 2026

ບົດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 10 - 27 ແມ່ນເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນສັງລວມກິດຈະການ.

ໃບລາຍງານສ່ວນປ່ຽນແປງທຶນສັງລວມກິດຈະການ
ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2025

	ປີດ ອະທິບາຍ	ທຶນຈົດທະບຽນ ຖອກແລ້ວ ກີບ	ສ່ວນເພີ່ມທຶນ ກີບ	ກຳໄລ/(ຂາດທຶນ) ສະສົມ ຍັງສະສົມຕາມລະບຽບ ການ ກີບ	ກຳໄລສະສົມຈຳ ແນ່ງປັນ ກີບ	ລວມ ກີບ
ຍອດເຫຼືອຍົກມາໃນວັນທີ 1 ມັງກອນ 2024	17	**50,000,000,000**	**3,269,466,406**	**932,158,245**	**(9,586,938,035)**	**44,614,686,616**
ຂາດທຶນສຳລັບໃນປີ		(-)	(-)	(-)	(1,756,400,957)	(1,756,400,957)
ຍອດເຫຼືອທ້າຍປີ ວັນທີ 31 ທັນວາ 2024		**50,000,000,000**	**3,269,466,406**	**932,158,245**	**(11,343,338,992)**	**42,858,285,659**
ຍອດເຫຼືອຍົກມາໃນວັນທີ 1 ມັງກອນ 2025	17	50,000,000,000	3,269,466,406	932,158,245	(11,343,338,992)	42,858,285,659
ຂາດທຶນສຳລັບໃນປີ					(5,257,167,774)	(5,257,167,774)
ຍອດເຫຼືອທ້າຍປີ ວັນທີ 31 ທັນວາ 2025		**50,000,000,000**	**3,269,466,406**	**932,158,245**	**(16,600,506,766)**	**37,601,117,885**

ລາວ ອາໂກຣເທັກ ມະຫາຊົນ
Lao Agro Tech Public Company

ທ່ານ ພິງຖານ ພິດຈຳນົງ
ຮອງຜູ້ອຳນວຍການ
ວັນທີ: 7 ເມສາ 2026

ທ່ານ ວັນສະເຫຼີມ ສີສຸຄຳມັ່ງ
ຫົວໜ້າບັນຊີ - ການເງິນ
ວັນທີ: 7 ເມສາ 2026

ປີດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 10 - 27 ແມ່ນເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນສັງລວມກິດຈະການ.

ໃບລາຍງານກະແສເງິນສົດສັງລວມກິດຈະການ
ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2025

	ປີດ ອະທິບາຍ	2025 ກີບ	2024 ກີບ
ຂາດທຶນ ກ່ອນເສຍອາກອນ		**(5,257,167,774)**	**(1,756,400,957)**
ລາຍການປັບປຸງ:			
ຄ່າຫຼ້ຍຫ້ຽນ	8	2,177,254,049	2,120,109,270
ຄ່າຕັດຖອນ	9	970,062,538	942,879,795
ກຳໄລຈາກການສະສາງຊັບສິນຍັດຄົງທີ່ມີຕົວຕົນ		(60,000,000)	(-)
ການສະສາງຂອງເຄື່ອງໃນສາງ ແລະ ວັດສະດຸສະໜອງໂຮງງານ	6	(-)	77,184
ການສະສາງຂອງເຍື່ອນລໍ່ຖ້າຕັດຕົ້ນທຶນການປຸກຕົ້ນປາມ	7,10	549,073,997	236,706,224
ຂາດທຶນຈາກອັດຕາແລກປ່ຽນ		526,735,343	75,667,878
ລາຍຈ່າຍອັດຕາດອກເບ້ຍ		276,766,502	217,300,153
ໜີ້ສົງໄສຈະເສຍ	4	(-)	675,211,200
ເກັບຄືນສຳລັບໜີ້ສົງໄສຈະເສຍ	4	(509,401,651)	(467,270,746)
ການປ່ຽນແປງໃນ ທຶນຫມຸນວຽນ:			
ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ		1,719,396,482	936,023,054
ເຄື່ອງໃນສາງ, ສຸດທິ		(537,252,219)	1,370,974,688
ວັດສະດຸສະໜອງໂຮງງານ, ສຸດທິ		(3,347,546,125)	1,346,449,111
ເຍື່ອນລໍ່ຖ້າຕັດຕົ້ນທຶນການປຸກຕົ້ນປາມ - ເບ້ຍປາມເພື່ອຂາຍ		(480,158,765)	(286,116,002)
ຊັບສິນໝຸນວຽນອື່ນໆ		(329,402,854)	(2,247,016,782)
ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ		9,901,862,557	(1,200,248,466)
ໜີ້ສິນໝຸນວຽນອື່ນໆ		254,476,969	(20,235,592)
ກະແສເງິນສົດຈາກກິດຈະກຳການດຳເນີນງານ		**5,854,699,049**	**1,944,110,012**
ດອກເບ້ຍທີ່ຈ່າຍ		(276,766,502)	(217,300,153)
ອາກອນກຳໄລຈ່າຍ		(-)	(-)
ເງິນສົດສຸດທິຈາກກິດຈະກຳການດຳເນີນງານ		**5,577,932,547**	**1,726,809,859**

ບໍລິສັດ ລາວ ອາໂກຣເທັກ ມະຫາຊົນ Lao Agro Tech Public Company

ທ່ານ ພິງຖາພ ພິດຈຳນົງ
ຮອງຜູ້ອຳນວຍການ
ວັນທີ: 7 ເມສາ 2026

ທ່ານ ວັນສະເຫຼີມ ສີສຸດຳມັ່ງ
ຫົວໜ້າບັນຊີ - ການເງິນ
ວັນທີ: 7 ເມສາ 2026

ບົດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 10 - 27 ແມ່ນເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນສັງລວມກິດຈະການ.

ໃບລາຍງານກະແສເງິນສົດສັງລວມກິດຈະການ
ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2025

	ບົດອະທິບາຍ	2025 ກີບ	2024 ກີບ
ກະແສເງິນສົດຈາກກິດຈະກຳການລົງທຶນ			
ຊື້ຊັບສິນບັດຄົງທີ່ ມີຕົວຕົນ	8	(1,760,749,582)	(4,098,493,646)
ເງິນສົດຮັບຈາກການສະສາງຊັບສິນບັດຄົງທີ່ມີຕົວຕົນ		60,000,000	(-)
ຈ່າຍຄ່າຕົ້ນທຶນການປູກຕົ້ນປາມ	9	(435,815,245)	(594,286,195)
ເຍື່ອນລໍຖ້າຕັດຕົ້ນທຶນການປູກ - ຕົ້ນຢີນ້ຳ	10	(5,633,008,977)	(6,620,389,346)
ຄ່າເຍື່ອນລໍຖ້າຕັດຕົ້ນທຶນການປູກ ຕົ້ນກະຖິນບາລົງ	11	(1,064,879,529)	(1,540,625,985)
ເງິນສົດສຸດທິ ໃຊ້ໃນກິດຈະກຳການລົງທຶນ		**(8,834,453,333)**	**(12,853,795,172)**
ກະແສເງິນສົດຈາກກິດຈະກຳການເງິນ			
ເງິນສົດຮັບຈາກການເງິນກູ້ຢືມ	14	4,000,000,000	4,000,000,000
ຈ່າຍເງິນຄືນຈາກການເງິນກູ້ຢືມ	14	(4,000,000,000)	(4,000,000,000)
ຈ່າຍເງິນຕົ້ນຄືນຈາກການເຊົ່າຊື້		(-)	(246,819,682)
ເງິນສົດສຸດທິ ໃຊ້ໃນກິດຈະກຳການເງິນ		**(-)**	**(246,819,682)**
ຍອດສົ່ງສຸດທິ ໃນເງິນສົດ ແລະ ລາຍການທຽບເທົ່າເງິນສົດ		**(3,256,520,786)**	**(11,373,804,995)**
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ ຕົ້ນປີ	3	3,556,622,752	14,386,401,761
ຜົນຂອງອັດຕາແລກປ່ຽນເງິນສົດ ແລະ ລາຍການທຽບເທົ່າເງິນສົດ		5,004,422	544,025,986
ເງິນສົດ ແລະ ລາຍການທຽບເທົ່າເງິນສົດທ້າຍປີ	**3**	**305,106,388**	**3,556,622,752**
ລາຍການສຳຄັນທີ່ບໍ່ແມ່ນເງິນສົດ:			
ຍອດໜີ້ຕ້ອງສົ່ງຈາກການເຊົ່າຊື້ຄ້າງຈ່າຍສຳລັບຍານພາຫະນະ ແລະ ເຄື່ອງໜັບປາມທີ່ຊື້ໃນປີຜ່ານມາ		1,828,408,490	1,687,516,530
ການໄດ້ມາຂອງ ຊັບສິນບັດຄົງທີ່ມີຕົວຕົນ ທີ່ຍັງບໍ່ໄດ້ຊຳລະ	8	312,770,000	(-)
ການໄດ້ມາຂອງຕົ້ນຢີນ້ຳ ທີ່ຍັງບໍ່ໄດ້ຊຳລະ	10	9,490,435,583	570,589,200

ບໍລິສັດ ລາວ ອາໂກຣເທັກ ມະຫາຊົນ Lao Agro Tech Public Company

ທ່ານ ພິງຖາບ ພິດຈຳນົງ
ຮອງຜູ້ອຳນວຍການ
ວັນທີ: 7 ເມສາ 2026

ທ່ານ ວັນສະເຫຼີມ ສີສຸດຳມັ້ງ
ຫົວໜ້າບັນຊີ - ການເງິນ
ວັນທີ: 7 ເມສາ 2026

ບົດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 10 - 27 ແມ່ນເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນສັງລວມກິດຈະການ.

1. ຂໍ້ມູນທົ່ວໄປ

ບໍລິສັດ ລາວອາໂກຣເທັກ ມະຫາຊົນ (ບໍລິສັດ) ແລະ ບໍລິສັດໃນເຄືອເຊິ່ງແມ່ນບໍລິສັດ ລາວດີ ກຣີນ ຈຳກັດຜູ້ດຽວ (ລວມກັນເປັນກຸ່ມບໍລິສັດ) ແມ່ນບໍລິສັດ ຈົດທະບຽນ ທີ່ສ້າງຕັ້ງຂຶ້ນ ໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ("ສປປ ລາວ") ມີສຳນັກງານຈົດທະບຽນຕັ້ງຢູ່ ບ້ານໜອງຄັນຄູ, ເມືອງນາຊາຍທອງ, ນະຄອນຫຼວງວຽງຈັນ, ສປປ ລາວ.

ກຸ່ມບໍລິສັດໄດ້ມີການຈຳໜ່າຍຮຸ້ນສາມັນຢູ່ໃນຕະຫຼາດຫຼັກຊັບລາວຄັ້ງທຳອິດໃນ ວັນທີ 25 ກັນຍາ 2017.

ກິດຈະກຳຫຼັກຂອງກຸ່ມບໍລິສັດ ແມ່ນ ອຸດສາຫະກຳນ້ຳມັນປາມ ເຊິ່ງເລີ່ມຈາກການເພາະປູກເບ້ຍຕົ້ນປາມ, ປູກຕົ້ນປາມ, ຜະລິດ ແລະ ຈຳໜ່າຍຜະລິດຕະພັນປາມໂດຍບໍລິສັດເອງ. ບໍລິສັດຍັງສະໜອງເບ້ຍຕົ້ນປາມໃຫ້ປະຊາຊົນ ສຳລັບການເພາະປູກ ແລະ ເກັບຊື້ຄືນໝາກປາມ.

ນອກຈາກນີ້, ກຸ່ມບໍລິສັດ ຍັງໄດ້ນຳເຂົ້າສິນຄ້າສຳເລັດຮູບ ເຊັ່ນ: ນ້ຳມັນປາມດິບ, ນ້ຳມັນປຸງແຕ່ງອາຫານ ແລະ ແປ້ງນົວ ຈາກປະເທດໄທ ເພື່ອຈຳໜ່າຍໃນ ສປປ ລາວ.

ກຸ່ມບໍລິສັດ ໄດ້ມີການລົງທຶນໃນ ບໍລິສັດ ລາວດີ ກຣີນ ຈຳກັດຜູ້ດຽວ ໃນຊັດສ່ວນ 100% ເຊິ່ງມູນຄ່າການລົງທຶນແມ່ນ 240,422,000,000 ກີບ. ນະວັນທີ 31 ທັນວາ 2025, ກຸ່ມບໍລິສັດແມ່ນໄດ້ຖອກເງິນລົງທຶນໃນບໍລິສັດໃນເຄືອແລ້ວ 10.29 ເປີເຊັນ ຂອງມູນຄ່າການລົງທຶນທັງໝົດ ຫຼື ທຽບເທົ່າ 24,745,926,658 ກີບ (ໃນນັ້ນ ຖອກເປັນຊັບສິນມູນຄ່າ 12,089,534,643 ແລະ ຖອກເປັນເງິນສົດມູນຄ່າ 12,656,392,015).

ອີງຕາມໃບຢັ້ງຢືນການ ອອກຮຸ້ນເລກທີ 00001/ລດກ, ລົງວັນທີ 31 ທັນວາ 2023, ໃນວັນທີດຽວກັນໃນໃບຢັ້ງຢືນການ ອອກຮຸ້ນ ສະບັບນີ້ລະບຸທຶນຈົດທະບຽນທັງໝົດຂອງບໍລິສັດແມ່ນ 240,422,000,000.

ກິດຈະກຳຫຼັກຂອງບໍລິສັດໃນເຄືອ ແມ່ນການປູກຕົ້ນໄມ້ກະຖິນນາລົງໃຫ້ມີຄຸນນະພາບ ແລະ ມີຄວາມຍືນຍົງເພື່ອເປັນຜະລິດຕະພັນພ້ອມສ້າງມູນຄ່າສູງສຸດໃນການສົ່ງອອກສູ່ຕະຫຼາດພາຍນອກ.

ໃນລະຫວ່າງປີສິ້ນສຸດວັນທີ 31 ທັນວາ 2025, ກຸ່ມບໍລິສັດໄດ້ດຳເນີນການປູກຕົ້ນຢີນ້ຳ ເພີ່ມເຕີມຢູ່ບໍລິສັດໃນເຄືອ, ໂດຍກິດຈະກຳດັ່ງກ່າວຖືກພິຈາລະນາເປັນກິດຈະກຳສຳຮອງ ຈາກການດຳເນີນງານຫຼັກຂອງບໍລິສັດໃນເຄືອທີ່ກ່ຽວຂ້ອງກັບການປູກຕົ້ນ ກະຖິນນາລົງ. ການປູກຕົ້ນຢີນ້ຳ ດັ່ງກ່າວມີຈຸດປະສົງເພື່ອການເກັບຄາບອນ ແລະ ການຜະລິດອອກຊິເຈນເພື່ອຂາຍ, ລວມທັງເພື່ອສະໜັບສະໜູນການນຳໃຊ້ເມັດຢີນ້ຳ ເພື່ອຜະລິດນ້ຳມັນໄບໂອດີເຊວ. ໃນວັນທີລາຍງານການເງິນ ກິດຈະກຳດັ່ງກ່າວຍັງຢູ່ໃນຂັ້ນເລີ່ມຕົ້ນ ແລະ ບໍ່ໄດ້ຖືກພິຈາລະນາເປັນກິດຈະກຳທີ່ກໍ່ໃຫ້ເກີດລາຍຮັບຫຼັກຂອງບໍລິສັດ.

ບໍລິສັດໃນເຄືອ ມີໂຄງການໃນການດຳເນີນທຸລະກິດຕັ້ງຢູ່ ເມືອງ ຕະໂອ້ຍ ແລະ ສະໜ້ວຍ, ແຂວງສາລະວັນ, ສປປ ລາວ.

ເອກະສານລາຍງານການເງິນສັງລວມກິດຈະການສະບັບນີ້ໄດ້ຮັບການຮັບຮອງຈາກຜູ້ບໍລິຫານໃນວັນທີ 7 ເມສາ 2026.

2 ນະໂຍບາຍການບັນຊີທີ່ສຳຄັນ

ນະໂຍບາຍການບັນຊີ ທີ່ນຳໃຊ້ເຂົ້າໃນການກະກຽມເອກະສານລາຍງານການເງິນສັງລວມກິດຈະການສະບັບນີ້ ໄດ້ກຳນົດໄວ້ ດັ່ງລຸ່ມນີ້:

2.1 ພື້ນຖານໃນການກະກຽມ

ເອກະສານລາຍງານການເງິນສັງລວມກິດຈະການ ໄດ້ມີການກະກຽມຕາມວິທີການບັນຊີຂອງກຸ່ມບໍລິສັດທີ່ໄດ້ລະບຸໄວ້ ໃນບົດອະທິບາຍຊ້ອນທ້າຍຂໍ້ທີ 2 ຂອງເອກະສານລາຍງານການເງິນສັງລວມກິດຈະການສະບັບນີ້ ເຊິ່ງໄດ້ມີການສ້າງຂຶ້ນ ບົນພື້ນຖານຕົ້ນທຶນເດີມ.

2. ນະໂຍບາຍການບັນຊີທີສຳຄັນ (ຕໍ່)

2.1 ພື້ນຖານໃນການກະກຽມ (ຕໍ່)

ເອກະສານລາຍງານການເງິນສັງລວມກິດຈະການ ໄດ້ມີການກະກຽມຕາມວິທີການບັນຊີຂອງກຸ່ມບໍລິສັດທີ່ໄດ້ລະບຸໄວ້ ໃນ ບົດອະທິບາຍຊ້ອນທ້າຍຂໍ້ທີ 2 ຂອງເອກະສານລາຍງານການເງິນສັງລວມກິດຈະການສະບັບນີ້ ເຊິ່ງໄດ້ມີການສ້າງຂຶ້ນ ບົນ ພື້ນຖານຕົ້ນທຶນເດີມ.
ອີງຕາມກົດໝາຍບັນຊີສະບັບເລກທີ 47/ສພຊ ລົງວັນທີ 26 ທັນວາ 2013, ວິສາຫະກິດ ທີ່ຮັບໃຊ້ຜົນປະໂຫຍດ ສາທາລະນະ (PIEs) ຕ້ອງປະຕິບັດມາດຕະຖານການລາຍງານການເງິນສາກົນ IFRS. ເຖິງຢ່າງໃດກໍ່ຕາມ, ກະຊວງການ ເງິນໄດ້ອອກແຈ້ງການສະບັບເລກທີ 1137/ກງ ລົງວັນທີ 27 ເມສາ 2020 ແລະ ຈາກສຳນັກງານຄະນະກຳມະການຄຸ້ມ ຄອງຫຼັກຊັບ (ສຄຄຊ) ລົງວັນທີ 25 ພຶດສະພາ 2020, ຊຶ່ງໃຫ້ທາງເລືອກສຳລັບ ບໍລິສັດທີ່ຈົດທະບຽນໃນຕະຫຼາດຫຼັກຊັບ ເພື່ອກະກຽມເຮັດແຜນປະຕິບັດການ ໃນການນຳໃຊ້ IFRS ຈົນເຖິງວັນທີ 31 ທັນວາ 2025 ແລະ ເລີ່ມປະຕິບັດແຕ່ວັນທີ 1 ມັງກອນ 2026 ເປັນຕົ້ນໄປ ບໍລິສັດທີ່ຈົດທະບຽນໃນຕະຫຼາດຫຼັກຊັບທັງໝົດຈະຕ້ອງ ນຳໃຊ້ ມາດຕະຖານການລາຍງານ ການເງິນສາກົນ IFRS ເຕັມຮູບແບບ.

ຜູ້ບໍລິຫານກຳລັງກະກຽມແຜນປະຕິບັດການ ສຳລັບການດຳເນີນການຕາມ IFRS ຕາມແຈ້ງການ. ຫຼັກການບັນຊີທີ່ນຳໃຊ້ ອາດແຕກຕ່າງຢ່າງມີສາລະສຳຄັນ ຈາກຫຼັກການບັນຊີ (IFRS).

ການກະກຽມເອກະສານລາຍງານການເງິນສັງລວມກິດຈະການ ຮຽກຮ້ອງໃຫ້ຝ່າຍບໍລິຫານ ຕ້ອງມີການຄາດຄະເນ ແລະ ກຳ ນົດຂໍ້ສົມມຸດຖານຫຼາຍປະການ ເພື່ອສະແດງໃຫ້ເຫັນຈຳນວນເງິນຂອງຊັບສິນ ແລະ ໜີ້ສິນ. ການເປີດເຜີຍຂໍ້ມູນ ຊັບສິນ ແລະ ໜີ້ສິນ ທີ່ອາດຈະເກີດຂຶ້ນໃນມື້ກະກຽມເອກະສານລາຍງານການເງິນສັງລວມກິດຈະການ ແລະ ລາຍຮັບ ແລະ ລາຍ ຈ່າຍ ໃນຮອບເວລາລາຍງານ. ສະນັ້ນ, ຕົວເລກ ຄາດຄະເນປະຕິບັດດັ່ງກ່າວຕ້ອງສ້າງຂຶ້ນບົນພື້ນຖານຄວາມຮັບຮູ້ທີ່ດີທີ່ສຸດ ຂອງຜູ້ບໍລິຫານ ກ່ຽວກັບເຫດການ ແລະ ພາກປະຕິບັດຕົວຈິງໃນປັດຈຸບັນ ເຊິ່ງສາລະສຳຄັນຂອງການຄາດຄະເນນັ້ນ ອາດຈະ ແຕກຕ່າງຈາກການຄາດຄະເນໃນເບື້ອງຕົ້ນຢ່າງເປັນສາລະສຳຄັນ.

ສະຖານະທາງດ້ານການເງິນ

ນະວັນທີ 31 ທັນວາ 2025, ໜີ້ສິນໝຸນວຽນ ຂອງກຸ່ມບໍລິສັດແມ່ນເກີນຊັບສິນໝຸນວຽນມູນຄ່າ 14,103,734,530 ກີບ. ກຸ່ມບໍລິສັດຍັງໄດ້ລາຍງານຜົນການດຳເນີນງານຂາດທຶນສຸດທິ ສຳລັບປີ ສິ້ນສຸດວັນທີ 31 ທັນວາ 2024 ແລະ 31 ທັນວາ 2025.

ນະວັນທີ 31 ທັນວາ 2025, ກຸ່ມບໍລິສັດມີກະແສເງິນສົດໃນທາງບວກຈາກກິດຈະກຳການດຳເນີນງານ, ເຊິ່ງສອດຄ່ອງກັບປີ ສິ້ນສຸດໃນວັນທີ 31 ທັນວາ 2024, ນອກຈາກນັ້ນ ສ່ວນປ່ຽນແປງທຶນເຈົ້າຂອງສະແດງເປັນຄ່າບວກນະວັນທີ 31 ທັນວາ 2025.

ຜູ້ບໍລິຫານໄດ້ດຳເນີນມາດຕະການເພື່ອບໍລິຫານສະພາບຄ່ອງຂອງກຸ່ມບໍລິສັດ ແລະ ຮັກສາຄວາມພຽງພໍຂອງລະດັບເງິນສົດ ແລະ ລາຍການທຽບເທົ່າເງິນສົດ, ລວມທັງມີການເຈລະຈາກັບເຈົ້າໜີ້ ເພື່ອສະໜັບສະໜູນຄວາມຕ້ອງການກະແສເງິນສົດ ໃນໄລຍະສັ້ນ ໂດຍພາລະຜູກພັນດັ່ງກ່າວຈະຢູ່ໃນລຳດັບຮອງຈາກເຈົ້າໜີ້ອື່ນໆທັງໝົດ ແລະ ວາງແຜນຈັດການສະພາບຄ່ອງ ຂອງກຸ່ມບໍລິສັດ. ເອກະສານລາຍງານການເງິນສະບັບນີ້ໄດ້ຈັດທຳຂຶ້ນຕາມສົມມຸດຖານການດຳເນີນງານຕໍ່ເນື່ອງ, ເນື່ອງຈາກຜູ້ ບໍລິຫານພິຈາລະນາແລ້ວວ່າ ມາດຕະການດັ່ງກ່າວຈະຊ່ວຍໃຫ້ກຸ່ມບໍລິສັດມີສະພາບຄ່ອງພຽງພໍເພື່ອດຳເນີນງານຕໍ່ໄປໄດ້ໃນ ອະນາຄົດອັນໃກ້ຢ່າງໜ້ອຍ 12 ເດືອນຂ້າງໜ້າເລີ່ມຈາກມື້ອອກເອກະສານລາຍງານການເງິນນີ້.

2. ນະໂຍບາຍການບັນຊີທີສຳຄັນ (ຕໍ່)

2.2 ການບັນຊີຂອງກຸ່ມບໍລິສັດ - ເງິນລົງທຶນໃນບໍລິສັດໃນເຄືອ

ບໍລິສັດໃນເຄືອ ໝາຍເຖິງກິດຈະການທີ່ກຸ່ມບໍລິສັດ ຄວບຄຸມ, ກຸ່ມບໍລິສັດ ຄວບຄຸມກິດຈະການເມື່ອ ກຸ່ມບໍລິສັດມີການເປີດຮັບ ຫຼື ມີສິດໃນຜົນຕອບແທນຜັນປ່ຽນ ເນື່ອງມາຈາກການໄດ້ກ່ຽວຂ້ອງກັບຜູ້ໄດ້ຮັບການລົງທຶນ ແລະ ມີຄວາມສາມາດເຮັດໃຫ້ເກີດຜົນກະທົບຕໍ່ຜົນຕອບແທນຈາກການໃຊ້ອຳນາດ ເໜືອຜູ້ໄດ້ຮັບການຄວບຄຸມ ກຸ່ມບໍລິສັດ ລວມເອກະສານລາຍງານການເງິນຂອງບໍລິສັດໃນເຄືອ ໄວ້ໃນເອກະສານລາຍການເງິນສັງລວມກິດຈະການ ຕັ້ງແຕ່ວັນທີ ກຸ່ມບໍລິສັດມີອຳນາດໃນການຄວບຄຸມບໍລິສັດໃນເຄືອ ກຸ່ມບໍລິສັດຈະບໍ່ນຳເອກະສານລາຍງານການເງິນຂອງບໍລິສັດໃນເຄືອ ມາລວມໄວ້ໃນເອກະສານລາຍງານການເງິນສັງລວມກິດຈະການ ນັບຈາກວັນທີ ກຸ່ມບໍລິສັດ ສູນເສຍອຳນາດການຄວບຄຸມ.

ລາຍການເຄື່ອນໄຫວລະຫວ່າງກັນໃນກຸ່ມບໍລິສັດ ຍອດຍັງເຫຼືອ ແລະ ກຳໄລ ຫຼື ຂາດທຶນ ທີ່ບໍ່ໄດ້ເກີດຂຶ້ນຈິງ ລະຫວ່າງກັນໃນກຸ່ມບໍລິສັດ ຈະຖືກລົບລ້າງອອກໃນເວລາ ທີ່ເຮັດເອກະສານລາຍງານການເງິນສັງລວມກິດຈະການ ລາຍການບັນຊີ ຂອງ ບໍລິສັດ ໃນເຄືອ ຈະຖືກປັບປຸງ ເພື່ອໃຫ້ສອດຄ່ອງກັບນະໂຍບາຍການບັນຊີຂອງກຸ່ມບໍລິສັດ

ຊັບສິນທີ່ມີການໂອນ ລະຫວ່າງກັນຂອງກຸ່ມລິສັດ ແລະ ຖືກບັນທຶກຢູ່ໃນລາຍການທາງການເງິນທີ່ແຕກຕ່າງກັນ ຈະບໍ່ຖືກນຳມາພິຈາລະນາໃນການຈັດທຳງົບການເງິນສັງລວມກິດຈະການ.

2.3 ການຕີມູນຄ່າເງິນຕາຕ່າງປະເທດ

ລາຍການເຄື່ອນໄຫວທີ່ເປັນສະກຸນເງິນຕາຕ່າງປະເທດ ໄດ້ຖືກຕີມູນຄ່າເປັນສະກຸນເງິນກີບ (“ກີບ”) ດ້ວຍການນ□ໃຊ້ອັດຕາແລກປ່ຽນໃນມື້ທີ່ລາຍການເກີດຂຶ້ນ. ຊັບສິນ ແລະ ໜີ້ສິນການເງິນ ໃນມື້ທີ່ສະແດງໃນໃບລາຍງາຍຖານະການເງິນ ທີ່ເປັນສະກຸນເງິນອື່ນແມ່ນໄດ້ຖືກປ່ຽນຄ່າເປັນສະກຸນເງິນກີບ ໂດຍນຳໃຊ້ອັດຕາແລກປ່ຽນໃນມື້ຂອງໃບລາຍງານສະຖານະການເງິນ.

ລາຍການກຳໄລ ແລະ ລາຍການຂາດທຶນທີ່ເກີດຈາກອັດຕາແລກປ່ຽນ ແລະ ການແປງຄ່າຊັບສິນ ແລະ ໜີ້ສິນທາງການເງິນ ແມ່ນໄດ້ຮັບຮູ້ໃນໃບລາຍງານຜົນໄດ້ຮັບ.

2.4 ເງິນສົດ ແລະ ລາຍການທຽບເທົ່າເງິນ

ເງິນສົດ ແລະ ລາຍການທຽບເທົ່າເງິນສົດ ລວມກັນເປັນເງິນສົດໃນມື, ເງິນຝາກທະນາຄານ ແລະ ເງິນລົງທຶນໄລຍະສັ້ນ ທີ່ມີສະພາບຄ່ອງສູງ ເຊິ່ງມີອາຍຸການຄົບກຳນົດໃນ 3 ເດືອນ ຫຼື ໜ້ອຍກວ່າ. ຢູ່ໃນໃບລາຍງານຖານະການເງິນ ເງິນເບີກເກີນບັນຊີ ແມ່ນສະແດງເປັນເງິນກູ້ຢືມໃນໜີ້ສິນໝຸນວຽນ, ຖ້າມີ.

2.5 ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ

ໜີ້ຕ້ອງຮັບທາງການຄ້າ ແລະ ໜີ້ຕ້ອງຮັບອື່ນໆແມ່ນຖືກບັນທຶກຕາມຕົວຈິງຂອງມູນຄ່າໃນໃບເກັບເງິນ ແລະ ການປະເມີນຕໍ່ມາແມ່ນນຳມູນຄ່າຍັງເຫຼືອລົບເງິນທີ່ຫັກເພື່ອໜີ້ສົງໃສຈະເສຍ ຍົກເວັ້ນໜີ້ຕ້ອງຮັບຈາກການສົ່ງເສີມປຸກຕົ້ນປາມ ໂດຍອີງຕາມການກວດການມູນຄ່າຄ້າງຊຳລະທັງໝົດໃນທ້າຍປີ, ຈຳນວນເງິນທີ່ຫັກຂອງໜີ້ສົງໃສຈະເສຍ ແມ່ນສ່ວນຕ່າງລະຫວ່າງມູນຄ່າຕາມບັນຊີ ຂອງໜີ້ຕ້ອງຮັບ ແລະ ມູນຄ່າທີ່ຄາດວ່າຈະເກັບຄືນໄດ້. ໜີ້ເສຍແມ່ນຈະຖືກສະສາງໃນປີທີ່ມີໜີ້ເສຍເກີດຂຶ້ນ ເຊິ່ງຈະຖືກຮັບຮູ້ເຂົ້າໃນໃບລາຍງານຜົນໄດ້ຮັບ ພາຍໃຕ້ລາຍຈ່າຍບໍລິຫານ. ໜີ້ສົງໃສຈະເສຍ ແລະ ການເກັບຄືນໜີ້ສົງໃສຈະເສຍ ແມ່ນບັນທຶກແຍກເປັນລາຍຈ່າຍການຂາຍ ແລະ ບໍລິຫານ ແລະ ລາຍຮັບອື່ນໆ ໃນໃບລາຍງານຜົນໄດ້ຮັບຕາມລຳດັບ ຝ່າຍບໍລິຫານພິຈາລະນາຕັ້ງຄ່າເພື່ອໜີ້ສົງໃສຈະສຳລັບຍອດເຫຼືອຄ້າງຫຼາຍກວ່າ 3 ປີ.

2. ນະໂຍບາຍການບັນຊີທີສຳຄັນ (ຕໍ່)

2.6 ສິນຄ້າໃນສາງ

ສິນຄ້າໃນສາງໄດ້ສະແດງໃນມູນຄ່າຕົ້ນທຶນ ຫຼື ມູນຄ່າສຸດທິ ທີ່ຈະໄດ້ຮັບທີ່ຕ່ຳກວ່າ. ຕົ້ນທຶນໄດ້ຖືກກຳນົດໂດຍຕົ້ນທຶນສະເລ່ຍທີ່ເກີດຂຶ້ນຈິງຂອງການຜະລິດທີ່ເກີດຂຶ້ນໃນປີ ໂດຍໃຊ້ວິທີ ຕົ້ນທຶນສະເລ່ຍ. ຕົ້ນທຶນຂອງສິນຄ້າສຳເລັດຮູບປະກອບມີ ວັດຖຸດິບທາງກົງ. ຄ່າແຮງງານທາງກົງ ແລະ ຄ່າໃຊ້ຈ່າຍອື່ນໆທີ່ກ່ຽວກັບການຜະລິດທາງກົງ. ຕົ້ນທຶນຂອງການຈັດຊື້ ປະກອບມີ ສອງສ່ວນຄື ລາຄາຊື້ ແລະ ລາຍຈ່າຍທາງກົງຂອງການໄດ້ມາຂອງສິນຄ້າໃນສາງ ເຊັ່ນ: ຄ່າພາສີນຳເຂົ້າ ແລະ ຄ່າຂົນສົ່ງ, ຫັກໃຫ້ສ່ວນຫລຸດ, ຄ່າເຜື່ອການຫຼຸດລົງ ຫຼື ສ່ວນຫລຸດ.
ມູນຄ່າສຸດທິ ທີ່ຈະໄດ້ຮັບແມ່ນປະເມີນລາຄາຂາຍໄດ້ຕາມປົກກະຕິຂອງທຸລະກິດ ຫັກລາຍຈ່າຍທີ່ສຳເລັດ ແລະ ລາຍຈ່າຍໃນການຂາຍ. ຕັ້ງສຳຮອງມູນຄ່າເຊື່ອມຈະຕັ້ງໃນກໍລະນີທີ່ຈຳເປັນ ສຳລັບສິນຄ້າທີ່ຫລ້າສະໄໝ. ເຄື່ອນໄຫວຊ້າ ແລະ ສິນຄ້າຄົງເຫຼືອທີ່ມີຂໍ້ຕຳນິ. ລາຍການສະສາງເນື່ອງຈາກສິນຄ້າໃນສາງທີ່ ໃຊ້ງານບໍ່ໄດ້ ແມ່ນຖືກຮັບຮູ້ໃນໃບລາຍງານຜົນໄດ້ຮັບ.

2.7 ອັດສະດຸສະໜອງໂຮງງານ

ອັດສະດຸສະໜອງໂຮງງານແມ່ນຖືກລະບຸໃນລາຄາຕົ້ນທຶນ ແລະ ກຳນົດ ໂດຍວິທີ ຕົ້ນທຶນສະເລ່ຍ. ອັດສະດຸສະໜອງໂຮງງານສ່ວນໃຫຍ່ປະກອບມີ ນ້ຳມັນປາມດິບ, ສານເຄມີ, ນ້ຳມັນກາຊວນປະເພດ B100, ປູຍ, ຂີ້ເຈຍ ແລະ ເມັດປາມ, ເຊິ່ງອັດສະດຸສະໜອງໂຮງງານເຫຼົ່ານີ້ແມ່ນສາມາດຂາຍໃຫ້ກັບລູກຄ້າ ເຊິ່ງເກັບເປັນລາຍຮັບຂອງກຸ່ມບໍລິສັດ ເນື່ອງຈາກອັດສະດຸສະໜອງໂຮງງານ ດັ່ງກ່າວໄດ້ຖືກຈັດຊື້ ແລະ ຜະລິດຂຶ້ນບາງສ່ວນ ເພື່ອຈຸດປະສົງສອງປະການ ຄື: (1) ຂາຍໃຫ້ແກ່ລູກຄ້າພາຍນອກ ແລະ (2) ການນຳໄປໃຊ້ເປັນວັດຖຸດິບຫຼັກໃນການຜະລິດນ້ຳມັນໄບໂອດີເຊວ ເພື່ອນຳໃຊ້ພາຍໃນກິດຈະການ. ຕົ້ນທຶນໃນການຊື້ ປະກອບດ້ວຍລາຄາຊື້ ແລະ ລາຍຈ່າຍທີ່ກ່ຽວຂ້ອງ ໂດຍກົງກັບການໄດ້ມາຂອງວັດສະດຸສະໜອງໂຮງງານ ເຊັ່ນ ຄ່າພາສີຂາເຂົ້າ ແລະ ຄ່າຂົນສົ່ງ ຫັກສ່ວນລຸດ ຄ່າເຜື່ອການຫຼຸດລົງ ຫຼື ສ່ວນຫລຸດຕາມເງື່ອນໄຂ. ການຕັ້ງສຳຮອງມູນຄ່າເຊື່ອມແມ່ນຄິດໄລ່ເມື່ອເຫັນຈຳເປັນສຳລັບສິນຄ້າລ້າສະໄໝ, ເຄື່ອນໄຫວຊ້າ ແລະ ເປເພ. ລາຍການສະສາງເນື່ອງຈາກວັດສະດຸສະໜອງໂຮງງານທີ່ໃຊ້ງານບໍ່ໄດ້ ແມ່ນຖືກຮັບຮູ້ໃນໃບລາຍງານຜົນໄດ້ຮັບ.

2.8 ຄ່າເຍື່ອນລໍຖ້າຕັດຕົ້ນທຶນການປູກ ຕົ້ນກະຖິນນາລິງ

ເຍື່ອນລໍຖ້າຕັດຕົ້ນທຶນໃນການປູກຕົ້ນກະຖິນນາລິງແມ່ນຕົ້ນທຶນສະສົມໃນການປູກຕົ້ນກະຖິນນາລິງ ເຊິ່ງລວມມີຄ່າບຸກເບີກທີ່ດິນ ຄ່າແຮງງານ ແລະ ຄ່າໃຊ້ຈ່າຍອື່ນໆ ທີ່ກ່ຽວຂ້ອງໂດຍກົງກັບການປູກຕົ້ນກະຖິນນາລິງ. ປົກກະຕິແລ້ວຕົ້ນກະຖິນນາລິງມີອາຍຸການເຕີບໂຕ ແລະ ໃຫ້ຜົນຜະລິດໂດຍລະຫວ່າງ 5-6 ປີ ນັບແຕ່ມື້ເລີ່ມປູກເປັນຕົ້ນມາ. ລາຍຮັບທັງໝົດທີ່ກ່ຽວກັບການເກັບກ່ຽວຊັບສິນປ່າໄມ້ ແມ່ນຈະຖືກນຳໄປບັນທຶກໃນໃບລາຍງານຜົນໄດ້ຮັບເມື່ອມີການຂາຍເກີດຂຶ້ນ ແລະ ຕົ້ນທຶນທີ່ກ່ຽວຂ້ອງຈະຖືກຕັດອອກໄປບັນທຶກໃນໃບລາຍງານຜົນໄດ້ຮັບເມື່ອຜົນເກັບກ່ຽວຖືກຂາຍ ແລະ ໝົດການເກັບກ່ຽວ.

2. ນະໂຍບາຍການບັນຊີ (ຕໍ່)

2.9 ຊັບສິມບັດຄົງທີ່ມີຕົວຕົນ

ລາຍການຂອງຊັບສິມບັດຄົງທີ່ມີຕົວຕົນ ໄດ້ຖືກບັນທຶກບັນຊີຕາມມູນຄ່າຕົ້ນທຶນເດີມຫັກດ້ວຍຄ່າຫລຸ້ຍຫ້ຽນສະສົມ. ມູນຄ່າຕົ້ນທຶນເດີມປະກອບມີ ລາຍຈ່າຍທາງກົງ ຂອງການໄດ້ມາຂອງລາຍການຊັບສິມບັດນັ້ນ. ລາຍຈ່າຍໃນເວລາຕໍ່ມາໄດ້ລວມເຂົ້າໃນມູນຄ່າຕາມບັນຊີຂອງຊັບສິມບັດ ຫຼື ຮັບຮູ້ເປັນແຕ່ລະຊັບສິມບັດແຍກຕ່າງຫາກ ຕາມຄວາມເໝາະສົມ, ເມື່ອມີຄວາມເປັນໄປໄດ້ວ່າຜົນປະໂຫຍດທາງເສດຖະກິດໃນອະນາຄົດທີ່ກ່ຽວຂ້ອງກັບລາຍການຊັບສິມບັດດັ່ງກ່າວ ຈະກັບເຂົ້າສູ່ກຸ່ມບໍລິສັດ ແລະ ຄ່າໃຊ້ຈ່າຍຂອງລາຍການນັ້ນສາມາດປະເມີນ ໄດ້ຢ່າງໜ້າເຊື່ອຖື.

ທີ່ດິນບໍ່ໄດ້ຄິດຄ່າຫລຸ້ຍຫ້ຽນ. ເຊິ່ງຄ່າຫລຸ້ຍຫ້ຽນແມ່ນໄດ້ຄິດໄລ່ເພື່ອຈະຕັດລາຍຈ່າຍຫັກມູນຄ່າຍັງເຫຼືອຂອງແຕ່ລະລາຍການຊັບສິມບັດຕາມອາຍຸການໃຊ້ງານທີ່ໄດ້ຄາດຄະເນໂດຍການຄິດໄລ່ຄ່າຫຼ້ຍຫ້ຽນບົນຫຼັກການ ການຄິດໄລ່ ແບບຄົງຕົວ.

ປະເມີນອາຍຸການໃຊ້ງານ ຂອງແຕ່ລະປະເພດຂອງຊັບສິມບັດດັ່ງຕໍ່ໄປນີ້:

	ປີ
ອາຄານ ແລະ ໂຄງສ້າງພື້ນຖານ	5 - 40
ເຟີນີເຈີ ແລະ ອຸປະກອນ	3 - 5
ເຄື່ອງຈັກ ແລະ ອຸປະກອນ	5 - 20
ຍານພາຫະນະ	3 - 5

ໃນກໍລະນີທີ່ມູນຄ່າຕາມບັນຊີຂອງຊັບສິມບັດສູງກວ່າມູນຄ່າທີ່ຄາດຄະເນວ່າຈະໄດ້ຮັບຄືນ ຈະບັນທຶກລົງທັນທີເປັນຈຳນວນທີ່ຈະໄດ້ຮັບຄືນ.

ຄ່າສ້ອມແປງ ແລະ ການບຳລຸງຮັກສາ ໄດ້ຖືກຮັບຮູ້ ເຂົ້າໃນໃບລາຍງານຜົນໄດ້ຮັບ ໃນປີການບັນຊີທີ່ເກີດຂຶ້ນຕົວຈິງ. ຄ່າໃຊ້ຈ່າຍໃນການສ້ອມແປງໃຫຍ່ສ່ວນເພີ່ມແມ່ນຈະເພີ່ມເຂົ້າໃນຍອດເຫຼືອໃນບັນຊີຂອງຊັບສິມບັດ ເມື່ອມີຄວາມເປັນໄປໄດ້ວ່າຈະເກີດຜົນປະໂຫຍດດ້ານເສດຖະກິດໃນອະນາຄົດ ໃນຈຳນວນທີ່ເກີນກວ່າມູນຄ່າເດີມ ຂອງຊັບສິມບັດທີ່ມີຢູ່ໃນປັດຈຸບັນທີ່ຈະກັບເຂົ້າສູ່ກຸ່ມບໍລິສັດ ຕົ້ນທຶນຄ່າສ້ອມແປງໃຫຍ່ຈະຖືກຫັກຄ່າຫຼ້ຍຫ້ຽນຕາມອາຍຸການນຳໃຊ້ທີ່ຍັງເຫຼືອຂອງຊັບສິມບັດທີ່ກ່ຽວຂ້ອງ.

ກຳໄລ ແລະ ຂາດທຶນ ຈາກການຂາຍຊັບສິມບັດຄົງທີ່ ໄດ້ມາຈາກການສົມທຽບລາຄາຂາຍ ກັບ ມູນຄ່າຕາມບັນຊີ ແລະ ຈົດເຂົ້າໃນໃບລາຍງານຜົນໄດ້ຮັບ.

2.10 ເຍື່ອນລໍຖ້າຕັດ ຕົ້ນທຶນການປູກຕົ້ນປາມ

ເຍື່ອນລໍຖ້າຕັດຕົ້ນທຶນໃນການປູກປາມແມ່ນຕົ້ນທຶນສະສົມໃນການປູກຕົ້ນປາມ ເຊິ່ງລວມມີຄ່າບຸກເບີກທີ່ດິນ ຄ່າແຮງງານ ແລະ ຄ່າໃຊ້ຈ່າຍອື່ນໆ ທີ່ກ່ຽວຂ້ອງໂດຍກົງກັບການປູກຕົ້ນປາມ. ມູນຄ່າ ຂອງຕົ້ນປາມແມ່ນວັດໂດຍ ການເອົາຕົ້ນທຶນໃນການປູກທັງໝົດຫັກດ້ວຍມູນຄ່າຕັດຮອນສະສົມ ແລະ ຄ່າເຜື່ອສຳລັບການສູນເສຍ ຂອງຕົ້ນ ປາມ. ຕົ້ນປາມທີ່ພ້ອມໃຫ້ເກັບກ່ຽວຈະຖືກຕັດຮອນໄປເປັນຕົ້ນທຶນ ຂອງວັດຖຸດິບໃນການຜະລິດ ໂດຍອາຍຸການ ຕັດຮອນແມ່ນ 26 ປີ ຕາມອາຍຸການທີ່ຄາດວ່າຈະໄດ້ຮັບຜົນປະໂຫຍດທາງເສດຖະກິດ.

2.11 ເຍື່ອນຊຳລະຕົ້ນທຶນການປູກຕົ້ນປາມ - ເບ້ຍປາມ

ເຍື່ອນຊຳລະຕົ້ນທຶນການປູກເບ້ຍຕົ້ນປາມ ແມ່ນສະແດງຢູ່ໃນໃບສະຫລຸບຊັບສິມບັດໃນຕົ້ນທຶນຫັກຄ່າເຜື່ອສະສົມ ສຳລັບຄ່າເຊື່ອມມູນຄ່າ. ຕົ້ນທຶນແມ່ນປະກອບມີທັ້ງ ລາຄາຊື້ເບ້ຍຕົ້ນປາມ ແລະ ລາຍຈ່າຍໂດຍກົງຂອງການໄດ້ມາເບ້ຍຕົ້ນປາມ ເຊັ່ນ ຄ່າພາສີນຳເຂົ້າ ແລະ ຄ່າຂົນສົ່ງ.

2. ນະໂຍບາຍການບັນຊີ (ຕໍ່)

2.12 ເຍື່ອນຊຳລະຕົ້ນທຶນການປູກ - ຕົ້ນຢີນ້ຳ

ເຍື່ອນຊຳລະຕົ້ນທຶນການປູກຕົ້ນຢີນ້ຳແມ່ນຕົ້ນທຶນສະສົມໃນການປູກຕົ້ນຢີນ້ຳເຊິ່ງລວມມີຄ່າບຸກເບີກທີ່ດິນ ຄ່າແຮງງານ, ຄ່າປຸຍ ແລະ ຄ່າໃຊ້ຈ່າຍອື່ນໆ ທີ່ກ່ຽວຂ້ອງໂດຍກົງກັບການປູກຕົ້ນຢີນ້ຳ. ໂດຍປົກກະຕິແລ້ວຕົ້ນຢີນ້ຳ ແມ່ນເລີ່ມເກັບກ່ຽວແລະ ໃຫ້ຜົນຜະລິດໃນລະຫວ່າງ 5 ຫາ 6 ປີນັບແຕ່ມື້ເລີ່ມປູກເປັນຕົ້ນມາ.

2.13 ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ

ໜີ້ຕ້ອງສົ່ງທາງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆແມ່ນຖືກບັນທຶກຕາມຕົວຈິງຂອງມູນຄ່າໃນໃບເກັບເງິນ ແລະ ການປະເມີນຕໍ່ມາ ແມ່ນນຳມູນຄ່າຍັງເຫຼືອລົບເງິນທີ່ຫັກອື່ນໆທີ່ກ່ຽວຂ້ອງ.

2.14 ສັນຍາເຊົ່າ

ສັນຍາເຊົ່າ-ໃນກໍລະນີກຸ່ມບໍລິສັດເປັນຜູ້ເຊົ່າ

ສັນຍາເຊົ່າທີ່ບໍ່ໄດ້ໂອນຄວາມສ່ຽງ ແລະ ຄວາມເປັນເຈົ້າຂອງໃຫ້ແກ້ຜູ້ເຊົ່າຖືເປັນສັນຍາເຊົ່າດຳເນີນງານ. ລາຍຈ່າຍພາຍໃຕ້ສັນຍາເຊົ່າດຳເນີນງານ (ສິດທິຈາກສິ່ງຕອບແທນທີ່ໄດ້ຈະຮັບຈາກຜູ້ໃຫ້ເຊົ່າ)ຈະໄດ້ຮັບຮູ້ໃນໃບລາຍງານຜົນໄດ້ຮັບແບບສະເໝີຕົວຕະຫຼອດອາຍຸຂອງສັນຍາເຊົ່າ.

ເມື່ອສັນຍາຄ່າເຊົ່າຖືກຍົກເລີກກ່ອນໄລຍະເວລາທີ່ກຳນົດ. ການຊຳລະເງິນໃຫ້ຜູ້ໃຫ້ເຊົ່າຕ້ອງຊຳລະນັ້ນແມ່ນຈະຕ້ອງໄດ້ຮັບຮູ້ເປັນຄ່າປັບໄໝທີ່ເປັນຄ່າໃຊ້ຈ່າຍໃນງວດເມື່ອມີການຍົກເລີກສັນຍາ.

ສັນຍາເຊົ່າຊັບສິນບັດຄົງທີ່ທີ່ມີຕົວຕົນ ເຊິ່ງໄດ້ມີການເຊັນສັນຍາເຊົ່າກັບກຸ່ມບໍລິສັດໃຫ້ເຊົ່າສິນເຊື່ອ ຈະຈັດເປັນປະ ເພດ ສັນຍາເຊົ່າທາງການເງິນ. ຄ່າໃຊ້ຈ່າຍຕ່າງໆຂອງຊັບສິນບັດຄົງທີ່ທີ່ມີຕົວຕົນແມ່ນສອດຄ່ອງໃນການຈັດຊື້, ແລະ ຄ່າຕິດຕັ້ງ ແລະ ຄ່າໃຊ້ຈ່າຍໂດຍກົງອື່ນໆທີ່ກ່ຽວກັບຊັບສິນບັດຄົງທີ່ທີ່ມີຕົວຕົນ. ໜີ້ຕ້ອງສົ່ງຂອງການເຊົ່າຊື້ແມ່ນລວມມີຕົ້ນທຶນຂອງຊັບສິນບັດຄົງທີ່ ແລະ ດອກເບ້ຍຈ່າຍລຳຖ້າຕັດຈ່າຍ. ດອກເບ້ຍຈ່າຍລຳຖ້າຕັດຈ່າຍແມ່ນຈະບັນທຶກເປັນຊັບສິນອື່ນໆ ແລະ ຈະຮັບຮູ້ເປັນຄ່າໃຊ້ຈ່າຍໃນໃບລາຍງານຜົນໄດ້ຮັບແບບສະເໝີຕົວຕະຫຼອດອາຍຸຂອງສັນຍາເຊົ່າ.

2.15 ການຮັບຮູ້ລາຍຮັບ

ລາຍຮັບຈາກການຂາຍສິນຄ້າ ແມ່ນຮັບຮູ້ ເມື່ອຄວາມສ່ຽງທີ່ເປັນສາລະສຳຄັນ ແລະ ຜົນຕອບແທນຂອງຄວາມເປັນເຈົ້າຂອງສິນຄ້າ ໄດ້ໂອນໃຫ້ກັບຜູ້ຊື້ສິນຄ້າ. ເຊິ່ງໂດຍທົ່ວໄປ ອີງໃສ່ເວລາທີ່ກຸ່ມບໍລິສັດໄດ້ມອບສິນຄ້າໃຫ້ກັບລູກຄ້າຕາມ ໄລຍະເວລາການສົ່ງມອບ ແລະ ເງື່ອນໄຂທີ່ຕົກລົງກັນ.

ລາຍຮັບອື່ນໆ ແມ່ນຮັບຮູ້ຕາມພື້ນຖານລຸ່ມນີ້:

- ລາຍຮັບຈາກການຂາຍກາກປາມແມ່ນຮັບຮູ້ເມື່ອກາກປາມໄດ້ຖືກສົ່ງໃຫ້ກັບລູກຄ້າຕາມ ໄລຍະເວລາການສົ່ງມອບ ແລະ ເງື່ອນໄຂທີ່ຕົກລົງກັນ.

2.16 ອາກອນລາຍໄດ້

ກຸ່ມບໍລິສັດ ບັນທຶກອາກອນກຳໄລ ຕາມຫຼັກເກນຄ້າງຮັບຄ້າງຈ່າຍ ຕາມກົດໝາຍສ່ວຍສາອາກອນຂອງລາວ. ກຸ່ມບໍລິສັດ ບໍ່ໄດ້ບັນທຶກອາກອນກຳໄລທີ່ຄ້າງຈ່າຍ ຫຼື ຄ້າງຮັບໃນອະນາຄົດ ເຊິ່ງເກີດຈາກສ່ວນຜິດຕ່ຽງຊົ່ວຄາວ. ຄ່າໃຊ້ຈ່າຍອາກອນກຳໄລ ຖືກຮັບຮູ້ບົນພື້ນຖານການດຳເນີນງານໃນປີ ຫຼັງດັດແກ້ທີ່ບໍ່ສາມາດຫັກລາຍຈ່າຍ ແລະ ການເຄື່ອນໄຫວອື່ນໆ ຕາມກົດ

2. ນະໂຍບາຍການບັນຊີ (ຕໍ່)

2.16 ອາກອນລາຍໄດ້ (ຕໍ່)

ໝາຍວ່າດ້ວຍສວຍສາອາກອນ ແລະ ອັດຕາອາກອນທີ່ກ່ຽວຂ້ອງ. ພາຍໃຕ້ລະບຽບການບັນຊີ ແລະ ກົດໝາຍສວຍສາອາກອນ ລາຍຈ່າຍອາກອນໃນປີ ແມ່ນໄດ້ຄິດໄລ່ຕາມພື້ນຖານລາຍຮັບຂອງກຸ່ມບໍລິສັດ (ບົດອະທິບາຍທີ່ 21).

ໃນ ສປປ ລາວ, ອາກອນກຳໄລຕ້ອງໄດ້ຮັບການກວດກາລະອຽດຄືນຈາກເຈົ້າໜ້າທີ່ ທີ່ກ່ຽວຂ້ອງບົນພື້ນຖານທົ່ວໄປ. ນອກຈາກນີ້, ຂໍ້ພິບເຫັນທີ່ເກີດຂຶ້ນຈາກການກວດກາຄືນດັ່ງກ່າວ ອາດຈະຕ້ອງມີຄຳເຫັນ ແລະ ຕີລາຄາໂດຍພາກສ່ວນທີ່ກ່ຽວຂ້ອງ ເຊິ່ງອາດຈະມີຜົນກະທົບຕໍ່ກຸ່ມບໍລິສັດ ແລະ ອາດສົ່ງຜົນໃຫ້ເກີດການຊຳລະອາກອນເພີ່ມຕື່ມ ຫຼື ຮັບຄືນໃນກໍລະນີຈຳເປັນ ແລະ ສາລະສຳຄັນ, ເຊິ່ງອາດຈະມີຜົນໃນການຈ່າຍເງິນ ຫຼື ຮັບຄືນຂອງການຮັບຮູ້ລາຍຈ່າຍອາກອນກຳໄລພາຍໃນປີທີ່ມີການກວດກາໄດ້ສຳເລັດ.

3. ເງິນສົດ ແລະ ລາຍການທຽບເທົ່າເງິນສົດ

	2025 ກີບ	2024 ກີບ
ເງິນສົດໃນມື	9,069,350	5,248,000
ເງິນຝາກໃນທະນາຄານທີ່ສາມາດຖອນເກັບໄດ້ໃນເວລາທີ່ຕ້ອງການ[(i)]	296,037,038	3,551,374,752
	305,106,388	**3,556,622,752**

(i) ເງິນຝາກໃນທະນະຄານ ລວມມີສາມສະກຸນເງິນ ແມ່ນມີ ສະກຸນ ໂດລາ, ກີບ ແລະ ບາດ ໃນບັນຊີເງິນຝາກກະແສລາຍວັນ ກັບທະນະຄານພາຍໃນປະເທດ ແລະ ທະນະຄານສາຂາຕ່າງປະເທດ.

4. ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ, ສຸດທິ

	2025 ກີບ	2024 ກີບ
ໜີ້ຕ້ອງຮັບການຄ້າ[(i)]	7,570,360,885	9,289,757,366
ໜີ້ຕ້ອງຮັບອື່ນໆ	339,600,000	339,600,000
ຫັກ: ຄ່າສູນເສຍມູນຄ່າ[(ii)]	(1,374,768,200)	(1,884,169,851)
	6,535,192,685	**7,745,187,515**

(i) ໜີ້ຕ້ອງຮັບການຄ້າປະກອບມີໜີ້ຕ້ອງຮັບຈາກການຂາຍເປ້ຍຕົ້ນປາມ, ນ້ຳມັນກາຊວນ ແລະ ນ້ຳມັນປາມດິບພາຍໃນປີ.

(ii) ລາຍການເຄື່ອນໄຫວສຳລັບໜີ້ສົງໄສຈະເສຍແມ່ນສະແດງດັ່ງຕາຕະລາງຂ້າງລຸ່ມນີ້:

	2025 ກີບ	2024 ກີບ
ຍອດຍົກມາ	1,884,169,851	1,676,229,397
ເພີ່ມຂຶ້ນ	(-)	675,211,200
ເກັບຄືນໜີ້ສົງໄສຈະເສຍ [(i)]	(509,401,651)	(467,270,746)
ຍອດຄົງເຫຼືອ	**1,374,768,200**	**1,884,169,851**

(i) ບໍລິສັດສຳເລັດການເກັບຄືນຈຳນວນເງິນທີ່ເຄີຍຕັ້ງເປັນໜີ້ສົງໄສຈະເສຍກ່ອນໜ້ານັ້ນ, ສິ່ງຜົນໃຫ້ມີການຫັກລ້າງຄືນໜີ້ສົງໄສຈະເສຍ.

5. ສິນຄ້າໃນສາງ, ສຸດທິ

	2025 ກີບ	2024 ກີບ
ສິນຄ້າສຳເລັດຮູບ [(i)]	740,819,083	155,623,245
ຜະລິດຕະພັນພວມປຸງແຕ່ງ	6,971,300	54,914,919
ຫັກ: ຄ່າສູນເສຍມູນຄ່າ ສຳລັບສິນຄ້າລ້າສະໄໝ ແລະ ເຄື່ອນໄຫວຊ້າ	(-)	(-)
	747,790,383	**210,538,164**

(i) ສິນຄ້າສຳເລັດຮູບມີສ່ວນປະກອບຫຼັກເປັນຜະລິດຕະພັນເສດເຫຼືອຂອງປາມ, ປຸ໋ຍ, ນ້ຳມັນພືດ, ແລະ ນ້ຳມັນ B5 ທີ່ມີໄວ້ເພື່ອຂາຍ. ສຳລັບປີທີ່ສິ້ນສຸດວັນທີ 31 ເດືອນທັນວາ 2025, ກຸ່ມບໍລິສັດບໍ່ໄດ້ບັນທຶກການສະສາງສິນຄ້າໃນສາງໃດໆ.

6. ອັດສະດຸສະໜອງໂຮງງານ, ສຸດທິ

	2025 ກີບ	2024 ກີບ
ປຸ໋ຍສຳລັບການປູກຕົ້ນປາມ	208,883,414	520,696,279
ນ້ຳມັນປາມດິບ	4,196,253,337	474,693,590
ນ້ຳມັນກາຊວນ	27,962,687	100,955,542
ອຸປະກອນໂຮງງານອື່ນໆ[(i)]	236,340,071	225,547,973
ຫັກ: ຄ່າສູນເສຍມູນຄ່າ ສຳລັບສິນຄ້າລ້າສະໄໝ ແລະ ເຄື່ອນໄຫວຊ້າ	(-)	(-)
	4,669,439,509	**1,321,893,384**

(i) ອັດສະດຸສະໜອງໂຮງງານອື່ນໆຫຼັກໆແມ່ນປະກອບມີ: ນ້ຳມັນກາຊວນປະເພດ B100, ຂີ້ເຈຍ, ເຄມີ ແລະ ເມັດປາມ. ສຳລັບປີທີ່ສິ້ນສຸດວັນທີ 31 ເດືອນທັນວາ 2025 ກຸ່ມບໍລິສັດ ບໍ່ໄດ້ມີການສະສາງ, ໃນຂະນະທີ່ປີ 2024 ໄດ້ມີການສະສາງອອກວັດສະດຸສະໜອງໂຮງງານມູນຄ່າ 77,184 ກີບ ແລະ ໄດ້ຮັບຮູ້ມູນຄ່າດັ່ງກ່າວເຂົ້າໃນໃບລາຍງານຜົນໄດ້ຮັບ.

7. ເຍື່ອນລໍຖ້າຕັດຕົ້ນທຶນການປູກຕົ້ນປາມ-ເບັຍປາມເພື່ອຂາຍ

ເຍື່ອນຊຳລະຕົ້ນທຶນການປູກເບັຍຕົ້ນປາມ ຕົ້ນທຶນແມ່ນປະກອບມີທັງ ລາຄາຊື້ເບັຍຕົ້ນປາມ ແລະ ລາຍຈ່າຍໂດຍກົງຂອງການໄດ້ມາເບັຍຕົ້ນປາມ ເຊັ່ນ ຄ່າແຮງງານໃນການປູກ ແລະ ຄ່າປຸ໋ຍ.

ນະວັນທີ 31 ທັນວາ 2025, ກຸ່ມບໍລິສັດໄດ້ມີການສະສາງເຍື່ອນລໍຖ້າຕັດຕົ້ນທຶນການ ປູກຕົ້ນປາມທີ່ຕາຍອອກມູນຄ່າ 285,435,797 ກີບ ແລະ ໄດ້ຮັບຮູ້ມູນຄ່າດັ່ງກ່າວເຂົ້າໃນໃບລາຍງານຜົນໄດ້ຮັບ.

ລາຍການເຄື່ອນໄຫວສຳລັບເຍື່ອນລໍຖ້າຕັດຕົ້ນທຶນການປູກຕົ້ນປາມ-ເບັຍປາມເພື່ອຂາຍ ແມ່ນສະແດງດັ່ງຕາຕະລາງຂ້າງລຸ່ມນີ້:

	2025 LAK	2024 LAK
ຍອດຍົກມາ	**799,422,815**	**750,013,038**
ເພີ່ມຂຶ້ນ	480,158,765	286,116,001
ສະສາງອອກ	(285,435,797)	(236,706,224)
ຍອດເຫຼືອ	**994,145,783**	**799,422,815**

8. ຊັບສິນຄົງທີ່ມີຕົວຕົນ, ສຸດທິ

	ທີ່ດິນ ກີບ	ອາຄານ ກີບ	ເຄື່ອງຈັກ ແລະ ອຸປະກອນ ກີບ	ຍານພາຫະນະ ກີບ	ເຟີນີເຈີ ແລະ ເຄື່ອງໃຊ້ ຫ້ອງການ ກີບ	ຊັບສິນທີ່ຢູ່ໃນ ລະຫວ່າງການກໍ່ສ້າງ ແລະ ຕິດຕັ້ງ ກີບ	ລວມ ກີບ
ທ້າຍປີວັນທີ 31 ທັນວາ 2025							
ຍອດຍົກມາຕາມບັນຊີ, ສຸດທິ	6,233,000,900	3,219,180,944	4,763,666,315	2,462,582,181	400,136,498	2,742,191,233	19,820,758,071
ເພີ່ມຂຶ້ນ	(-)	(-)	64,103,688	340,315,315	68,938,629	1,600,161,950	2,073,519,582
ສະສາງຕົ້ນທຶນ	(-)	(-)	(-)	(147,899,600)	(-)	(-)	(147,899,600)
ສະສາງຄ່າຫຼ້ຍຫ້ຽນສະສົມ	(-)	(-)	(-)	147,899,600	(-)	(-)	147,899,600
ໂອນໄປຄ່າເຍື່ອນຊຳລະຕົ້ນທຶນການ ປຸກຕົ້ນຢີ້ນ (ບົດອະທິບາຍ 10)	(-)	(-)	(-)	(-)	(-)	(221,539,871)	(221,539,871)
ໂອນເຂົ້າ/(ອອກ) ໄປອາຄານ	(-)	209,498,622	(-)	(-)	(-)	(209,498,622)	(-)
ໂອນເຂົ້າ/(ອອກ) ໄປເຟີນີເຈີ ແລະ ຍານພາຫະນະ	(-)	(-)	(-)	1,300,726,790	(-)	(1,300,726,790)	(-)
ໂອນເຂົ້າ/(ອອກ) ໄປເຟີນີເຈີ ແລະ ເຄື່ອງໃຊ້ຫ້ອງການ	(-)	(-)	(-)	(-)	421,172,163	(421,172,163)	(-)
ຄ່າຫລຸ້ຍຫ້ຽນ	(-)	(260,786,293)	(960,896,067)	(827,324,014)	(128,247,675)		(2,177,254,049)
ມູນຄ່າຍັງເຫຼືອຕາມບັນຊີ, ສຸດທິ	**6,233,000,900**	**3,167,893,273**	**3,866,873,936**	**3,276,300,272**	**761,999,615**	**2,189,415,737**	**19,495,483,733**
ໃນວັນທີ 31 ທັນວາ 2025							
ຕົ້ນທຶນ	6,233,000,900	6,079,866,490	13,166,813,176	12,034,780,822	1,981,335,137	2,189,415,737	41,685,212,262
ຫັກ: ຄ່າຫລຸ້ຍຫ້ຽນສະສົມ	(-)	(2,911,973,217)	(9,299,939,240)	(8,758,480,550)	(1,219,335,522)	(-)	(22,189,728,529)
ມູນຄ່າຍັງເຫຼືອຕາມບັນຊີ, ສຸດທິ	**6,233,000,900**	**3,167,893,273**	**3,866,873,936**	**3,276,300,272**	**761,999,615**	**2,189,415,737**	**19,495,483,733**

ກຸ່ມບໍລິສັດໄດ້ນຳເອົາສີ່ໃບຕາດິນຂອງຕົນເລກທີ 362, 473, 427 ແລະ 474 ໄປຄ้ຳປະກັນເງິນກູ້ຢືມຈາກທະນາຄານ, ມູນຄ່າທີ່ດິນທີ່ນຳໄປຄ้ຳປະກັນແມ່ນ 2,712,654,900 ກີບ (ບົດອະທິບາຍ 14).

8. ຊັບສິນຄົງທີ່ມີຕົວຕົນ, ສຸດທິ (ຕໍ່)

	ທີ່ດິນ ກີບ	ອາຄານ ກີບ	ເຄື່ອງຈັກ ແລະ ອຸປະກອນ ກີບ	ຍານພາຫະນະ ກີບ	ເຟີນີເຈີ ແລະ ເຄື່ອງໃຊ້ຫ້ອງການ ກີບ	ຊັບສິນທີ່ຢູ່ໃນລະຫວ່າງການກໍ່ສ້າງ ແລະ ຕິດຕັ້ງ ກີບ	ລວມ ກີບ
ທ້າຍປີວັນທີ 31 ທັນວາ 2024							
ຍອດຍົກມາຕາມບັນຊີ, ສຸດທິ	6,233,000,900	2,704,179,898	5,701,319,359	1,329,522,370	79,752,001	1,794,599,167	17,842,373,695
ເພີ່ມຂຶ້ນ	(-)	294,893,728	110,922,546	1,885,439,529	398,486,992	2,327,251,098	5,016,993,893
ໂອນໄປຄ່າເຍື່ອນຊຳລະຕົ້ນທຶນການ ປຸກຕົ້ນຢີນ້ຳ (ບົດອະທິບາຍ 10)	(-)	(-)	(-)	(-)	(-)	(918,500,247)	(918,500,247)
ໂອນເຂົ້າ/(ອອກ) ໄປອາຄານ	(-)	461,158,785	(-)	(-)	(-)	(461,158,785)	(-)
ຄ່າຫລຸ້ຍຫ້ຽນ	(-)	(241,051,467)	(1,048,575,590)	(752,379,718)	(78,102,495)	(-)	(2,120,109,270)
ມູນຄ່າຍັງເຫຼືອຕາມບັນຊີ, ສຸດທິ	**6,233,000,900**	**3,219,180,944**	**4,763,666,315**	**2,462,582,181**	**400,136,498**	**2,742,191,233**	**19,820,758,071**
ໃນວັນທີ 31 ທັນວາ 2024							
ຕົ້ນທຶນ	6,233,000,900	5,870,367,868	13,102,709,488	10,393,738,717	1,491,224,345	2,742,191,233	39,833,232,551
ຫັກ: ຄ່າຫລຸ້ຍຫ້ຽນສະສົມ	(-)	(2,651,186,924)	(8,339,043,173)	(7,931,156,536)	(1,091,087,847)	(-)	(20,012,474,480)
ມູນຄ່າຍັງເຫຼືອຕາມບັນຊີ, ສຸດທິ	**6,233,000,900**	**3,219,180,944**	**4,763,666,315**	**2,462,582,181**	**400,136,498**	**2,742,191,233**	**19,820,758,071**

ກຸ່ມບໍລິສັດໄດ້ນຳເອົາສີ່ໃບຕາດິນຂອງຕົນເລກທີ 362, 473, 427 ແລະ 474 ໄປຄ้ຳປະກັນເງິນກູ້ຢືມຈາກທະນາຄານ, ມູນຄ່າທີ່ດິນທີ່ນຳໄປຄ้ຳປະກັນແມ່ນ 2,712,654,900 ກີບ (ບົດອະທິບາຍ 14).

9. ເຍື່ອນລໍຖ້າຕັດຕົ້ນທຶນການປູກຕົ້ນປາມ, ສຸດທິ

	2025 ກີບ	2024 ກີບ
ຍອດຍົກມາ	22,802,068,802	23,150,662,402
ເພີ່ມຂຶ້ນ	435,815,245	594,286,195
ຫັກ: ຄ່າຕັດຮອນ	(970,062,538)	(942,879,795)
ຍອດເຫຼືອທ້າຍປີວັນທີ 31 ທັນວາ	**22,267,821,509**	**22,802,068,802**
ເຍື່ອນລໍຖ້າຕັດຕົ້ນທຶນການປູກຕົ້ນປາມ	29,889,705,454	29,453,890,209
ຫັກ: ຄ່າຕັດຮອນສະສົມ	(7,621,883,945)	(6,651,821,407)
	22,267,821,509	**22,802,068,802**

10. ເຍື່ອນລໍຖ້າຕັດຕົ້ນທຶນການປູກຕົ້ນ ຢີນ້ຳ

ຕົ້ນທຶນການປູກຕົ້ນຢີນ້ຳລວມມີ ຕົ້ນທຶນໃນການຊື້ ແລະ ຄ່າໃຊ້ຈ່າຍອື່ນໆ ທີ່ກ່ຽວຂ້ອງໂດຍກົງກັບການປູກຕົ້ນຢີນ້ຳເຊັ່ນ: ຄ່າແຮງງານ ແລະ ຄ່າປຸ໋ຍ.

ຂ້າງລຸ່ມນີ້ແມ່ນການເຄື່ອນໄຫວເຍື່ອນລໍຖ້າຕັດຕົ້ນທຶນການປູກຕົ້ນ ຢີນ້ຳ:

	2025 ກີບ	2024 ກີບ
ຍອດຍົກມາ	9,158,137,050	1,967,158,504
ເພີ່ມຂຶ້ນ	15,123,444,560	6,272,478,299
ໂອນເຂົ້າຈາກຊັບສິນຄົງທີ່ມີຕົວຕົນ (ບົດອະທິບາຍ 8)	221,539,871	918,500,247
ໂອນເຂົ້າຈາກເຍື່ອນລໍຖ້າຕັດຕົ້ນທຶນການປູກຕົ້ນກະຖິນນາລິງ (ບົດອະທິບາຍ 11)	383,990,503	(-)
ສະສາງ[(i)]	(263,638,200)	(-)
ຍອດຄົງເຫຼືອ	**24,623,473,784**	**9,158,137,050**

(i) ໃນລະຫວ່າງປີສິ້ນສຸດວັນທີ 31 ທັນວາ 2025 ກຸ່ມບໍລິສັດໄດ້ສະສາງ ຕົ້ນຢີນ້ຳທີ່ຕາຍອອກເປັນຄ່າໃຊ້ຈ່າຍ ແລະ ຄ່າໃຊ້ຈ່າຍດັ່ງກ່າວໄດ້ຖືກ ບັນທຶກເປັນຄ່າໃຊ້ຈ່າຍໃນໃບລາຍງານຜົນໄດ້ຮັບ.

11. ເຍື່ອນລໍຖ້າຕັດຕົ້ນທຶນການປູກຕົ້ນກະຖິນນາລິງ

ເຍື່ອນລໍຖ້າຕັດຕົ້ນທຶນການປູກຕົ້ນກະຖິນນາລິງ ສະແດງເຖິງຄ່າໃຊ້ຈ່າຍທີ່ກ່ຽວຂ້ອງທາງກົງສຳລັບການກະກຽມທີ່ດິນປູກ, ຕົ້ນທຶນການເພາະເບ້ຍ, ການກະກຽມການປູກ ແລະ ຄ່າໃຊ້ຈ່າຍທີ່ກ່ຽວຂ້ອງອື່ນໆ.

ຕາຕະລາງຂ້າງລຸ່ມນີ້ແມ່ນການເຄື່ອນໄຫວຂອງ ເຍື່ອນລໍຖ້າຕັດຕົ້ນທຶນການປູກຕົ້ນກະຖິນນາລິງ:

	2025 ກີບ	2024 ກີບ
ຍອດຍົກມາ	2,860,608,812	1,319,982,827
ເພີ່ມຂຶ້ນ ຈາກການປູກຢູ່ບໍລິສັດລາວດີກຣີນ ຈຳກັດຜູ້ດຽວ	1,064,879,529	1,540,625,985
ໂອນອອກໄປເຍື່ອນລໍຖ້າຕັດຕົ້ນທຶນການປູກຕົ້ນ ຢີ້ນ້ຳ ລິງ (ບົດອະທິບາຍ 10)	(383,990,503)	(-)
ຍອດຄົງເຫຼືອ	**3,541,497,838**	**2,860,608,812**

12. ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ

	2025 ກີບ	2024 ກີບ
ໜີ້ຕ້ອງສົ່ງການຄ້າ(i)	29,381,042,345	9,398,887,632
ໜີ້ຕ້ອງສົ່ງອື່ນໆ(ii)	1,547,431,145	1,311,676,477
	30,928,473,490	**10,710,564,109**

(i) ໜີ້ຕ້ອງສົ່ງການຄ້າສ່ວນໃຫຍ່ປະກອບມີ ຕົ້ນຢີ້ນ້ຳ, ຄ່ານ້ຳມັນປາມດິບ ແລະ ຄ້າງຈ່າຍຄ່ານ້ຳມັນພືດ ຈາກຕ່າງປະເທດໃນລະຫວ່າງປີ.

(ii) ໜີ້ຕ້ອງສົ່ງອື່ນໆ ສ່ວນໃຫຍ່ປະກອບມີ ຄ່າເຄື່ອງໜີບໝາກປາມ, ຄ່າທີ່ປຶກສາຊ່ຽວຊານ ແລະ ເງິນເດືອນຄ້າງຈ່າຍ.

13 ໜີ້ສິນໝຸນວຽນອື່ນໆ

	2025 ກີບ	2024 ກີບ
ເງິນເດືອນຄ້າງຈ່າຍ	64,130,127	55,847,258
ຮັບເງິນລ່ວງໜ້າຈາກລູກຄ້າ[(i)]	194,934,000	(-)
	259,064,127	**55,847,258**

(i) ຮັບເງິນລ່ວງໜ້າຈາກລູກຄ້າ ສະແດງເຖິງ ເງິນມັດຈຳທີ່ບໍລິສັດໄດ້ຮັບໃນລະຫວ່າງປີ ສຳລັບຜະລິດຕະພັນ ເສດປາມ ໂດຍທີ່ຍັງບໍ່ໄດ້ມີການສົ່ງມອບສິນຄ້າ ນະວັນທີລາຍງານການເງິນ.

14. ເງິນກູ້ຍືມໄລຍະສັ້ນ

ໃນວັນທີ 31 ທັນວາ 2025, ກຸ່ມບໍລິສັດຍັງມີຍອດຄົງເຫຼືອຂອງເງິນກູ້ຍືມໄລຍະສັ້ນກັບທະນາຄານໄຊ່ງ່ອນ-ຮ່າໂນ້ຍລາວ ຈຳກັດ (SHB).

ໃນວັນທີ 31 ທັນວາ 2025, ຍອດເງິນກູ້ທີ່ຍັງຄົງຄ້າງໄດສະແດງຢູ່ໃນຕາຕະລາງລຸ່ມນີ້:

ຍອດຍົກມາເງິນກູ້ຍືມ (ກີບ)	ເງິນກູ້ເພີ່ມ (ກີບ)	ຊຳລະຄືນ (ກີບ)	ຍອດເຫຼືອ (ກີບ)	ໄລຍະເວລາການກູ້ຍືມ ແລະ ກຳນົດການຈ່າຍ ຄືນ	ອັດຕາ ດອກເບ້ຍຕໍ່ປີ	ຫຼັກຊັບຄ้ำປะกัน
2,000,000,000	4,000,000,000	(4,000,000,000)	2,000,000,000	ເງິນຕົ້ນ 12 ເດືອນ ແລະ ດອກເບ້ຍທີ່ຕ້ອງຈ່າຍແມ່ນຕໍ່ເດືອນ,	12,7%	1. ດິນ ເລກທີ 474, ມູນຄ່າ 971,520,000 ກີບ 2. ດິນ ເລກທີ 473, ມູນຄ່າ 1,140,301,400 ກີບ 3. ດິນ ເລກທີ 362 ມູນຄ່າ 325,983,500 ກີບ 4. ດິນ ເລກທີ 427 ມູນຄ່າ 274,850,000 ກີບ

15. ໜີ້ຕ້ອງສົ່ງຈາກການເຊົ່າຊື້

	2025 ກີບ	2024 ກີບ
ໝູນວຽນ		
ໜີ້ຕ້ອງສົ່ງຈາກການເຊົ່າຊື້ໝູນວຽນ	910,475,125	840,316,500
	910,475,125	**840,316,500**

ກຸ່ມບໍລິສັດໄດ້ເຊັນສັນຍາເຊົ່າຊື້ສິນເຊື່ອທີ່ເປັນສະກຸນເງິນບາດ ແລະ ກີບສຳລັບການເຊົ່າຊື້ພາຫະນະ.

16. ໜີ້ສິນບໍ່ໝູນວຽນອື່ນໆ

ອີງຕາມຂໍ້ຕົກລົງສຳລັບການ ປຸກຕົ້ນຢີນ້ຳ ສຳລັບໂຄງການ ຄາບອນອົກຊິເຈນ ລົງວັນທີ 16 ຕຸລາ 2023, ລະຫວ່າງ FOUR PRIDE PTE. LTD ຫຼື (FP) ແລະ ບໍລິສັດ ລາວອາໂກຣເທັກ ມະຫາຊົນ ຫຼື (ລອທ) ແມ່ນໄດ້ລະບຸລາຍລະອຽດໄລຍະເວລາ ແລະ ເງື່ອນໄຂດັ່ງນີ້:

- ໄລຍະເວລາຂອງໂຄງການ: 4 ປີນັບແຕ່ວັນທີ່ໄດ້ເລີ່ມຕົ້ນການປຸກ ເຊິ່ງແມ່ນເດືອນພະຈິກ 2023.
- ສະຖານທີ່ປຸກ: ຢຸ່ນະຄອນຫຼວງວຽງຈັນ ແລະ ແຂວງສາລະວັນ, ສປປ ລາວ
- ເນື້ອທີ່ປຸກ: 300 ເຮັກຕາ
- ຈຳນວນຕົ້ນຢີນ້ຳຕໍ່ເຮັກຕາ: 160 ຫາ 220 ຕົ້ນຕໍ່ເຮັກຕາເມື່ອທີການເຫັນດີກັນລະຫວ່າງ ສອງຝ່າຍ.
- ຄ່າບໍລິການປຸກຕົ້ນຢີນ້ຳ : 2,946.20 ໂດລາ ຕໍ່ເຮັກຕາ ສຳລັບໄລຍະເວລາ 4 ປີ, ມູນຄ່າທັງໝົດ 883,859.95 ໂດລາ ຫຼື ເທົ່າກັບ 18,223,424,449 ກີບ.

ຕະຫຼອດໄລຍະ 4 ປີ ພາຍໃຕ້ຂໍ້ຕົກລົງສະບັບນີ້, ບໍລິສັດລາອາໂກເທັກ ຕ້ອງສະໜອງ ແລະ ຮັບຜິດຊອບໃນການບໍລິການທີ່ຈຳເປັນ ທັງໝົດທີ່ກ່ຽວຂ້ອງກັບການປຸກຕົ້ນຢີນ້ຳ, ແຕ່ບໍ່ຈຳກັດສະເພາະ ການສ້າງພື້ນທີ່ປຸກ, ລະບົບຊົນລະປະທານ, ການສະໜອງ ແລະ ກວດກາເບ້ຍໄມ້, ການປຸກຕົ້ນໄມ້, ການຄຸ້ມຄອງສວນປຸກ, ການຕັດແຕ່ງກິ່ງໄມ້, ການເກັບກ່ຽວ, ການບຳລຸງຮັກສາການປຸກ, ການບໍລິຫານແຮງງານ ແລະ ກິດຈະກຳອື່ນໆທີ່ກ່ຽວຂ້ອງ. ການກະກຽມອຸປະກອນ, ອຸປະກອນ, ເຄື່ອງມື, ເຄື່ອງມື ຫຼື ອື່ນໆທີ່ຈຳເປັນສຳລັບການສະໜອງການບໍລິການແມ່ນ ຮັບຜິດຊອບຂອງ ລອທ.

ສຳລັບປີສິ້ນສຸດວັນທີ 31 ທັນວາ 2025 ບໍ່ມີການປ່ຽນແປງເງື່ອນໄຂ ຫຼື ຂໍ້ກຳນົດໃດໆ ຕາມທີ່ໄດ້ກ່າວໄວ້ຂ້າງເທິງ. ບໍລິສັດໄດ້ຮັບຮູ້ຍອດຄົງເຫຼືອຂ້າງເທິງເປັນເງິນຮັບລ່ວງໜ້າຈາກ FP ເຊິ່ງສະແດງໃນໜີ້ສິນບໍ່ໝູນວຽນອື່ນໆໃນໃບລາຍງານຖານະການເງິນ ແລະ ຍອດດັ່ງກ່າວຈະຖືກສະສາງອອກເມື່ອມີລາຍຮັບຈາກໂຄງການ ຄາບອນອົກຊິເຈນ ຫຼັງຈາກ 4 ປີ.

17. ທຶນຕົນເອງ ຂອງຜູ້ຖືຮຸ້ນ

	ຈຳນວນຮຸ້ນ ຮຸ້ນ	ທຶນຈົດທະບຽນ ກີບ	ສ່ວນເກີນ ກີບ	ລວມ ກີບ
ວັນທີ 1 ມັງກອນ 2024	100,000,000	50,000,000,000	3,269,466,406	53,269,466,406
ໃນວັນທີ 31 ທັນວາ 2024	**100,000,000**	**50,000,000,000**	**3,269,466,406**	**53,269,466,406**
ວັນທີ 1 ມັງກອນ 2025	100,000,000	50,000,000,000	3,269,466,406	53,269,466,406
ໃນວັນທີ 31 ທັນວາ 2025	**100,000,000**	**50,000,000,000**	**3,269,466,406**	**53,269,466,406**

ໃນວັນທີ 31 ທັນວາ 2025, ຈຳນວນຮຸ້ນສາມັນທັງໝົດແມ່ນມີ 100,000,000 ຮຸ້ນ ເຊິ່ງມີມູນຄ່າໜ້າໃບຮຸ້ນ ຮຸ້ນລະ 500 ກີບ (2024: 100,000,000 ຮຸ້ນ ເຊິ່ງມີມູນຄ່າໜ້າໃບຮຸ້ນ ຮຸ້ນລະ 500 ກີບ). ຮຸ້ນສາມັນທັງໝົດທີ່ໄດ້ຈົດເຂົ້າເປັນຕົ້ນທຶນໄດ້ຖືກຊຳລະແລ້ວເຕັມຈຳນວນ.

18. ຄັງສະສົມຕາມລະບຽບການ

	2025 ກີບ	2024 ກີບ
ວັນທີ 1 ມັງກອນ	932,158,245	932,158,245
ວັນທີ 31 ທັນວາ	**932,158,245**	**932,158,245**

ຄັງສະສົມຕາມລະບຽບການ ແມ່ນສ້າງຂຶ້ນຕາມກົດໝາຍວິສາຫະກິດຂອງ ສປປ ລາວ ເຊິ່ງກຳນົດໃຫ້ກຸ່ມບໍລິສັດຕັ້ງຄັງສະສົມຕາມ ລະ ບຽບການ ຢ່າງຕ່ຳ 10% ຂອງກຳໄລສຸດທິໃນປີ ຈົນຄັງສະສົມຕາມລະບຽບການຄົບ 50% ຂອງມູນຄ່າທຶນຈົດທະບຽນ.

19. ລາຍຮັບຈາກການຂາຍ

	2025 ກີບ	2024 ກີບ
ລາຍຮັບຈາກການຂາຍ - ການຄ້າ[(i)]	36,897,727,177	37,939,829,555
ລາຍຮັບຈາກການຂາຍ - ເຍັຍຕົ້ນປາມ	172,150,000	567,355,040
ລາຍຮັບຈາກການຂາຍ - ປຸຍ	691,426,000	1,303,521,000
	37,761,303,177	**39,810,705,595**

(i) ລາຍຮັບຈາກການຂາຍ - ການຄ້າ ສ່ວນຫຼາຍແມ່ນຈາກການຂາຍ ນ້ຳມັນປາມດິບ, ນ້ຳມັນກາຊວນ B5 ແລະ ນ້ຳມັນພືດ.

20. ລາຍຈ່າຍຈຳແນກຕາມລັກສະນະເນື້ອໃນ

ລາຍຈ່າຍດັ່ງລຸ່ມນີ້ແມ່ນເປັນລາຍຈ່າຍຫຼັກໆທີ່ເກີດຂຶ້ນພາຍໃນປີ ເຊິ່ງລວມຢູ່ໃນໃບລາຍງານຜົນໄດ້ຮັບ

	2025 ກີບ	2024 ກີບ
ຕົ້ນທຶນໃນການຊື້ສິນຄ້າເພື່ອຂາຍ	31,847,103,059	31,755,152,281
ເງິນເດືອນ/ລາຍຈ່າຍກ່ຽວຂ້ອງກັບເງິນເດືອນ	4,039,615,262	4,303,727,226
ລາຍຈ່າຍບໍລິຫານອື່ນໆ	4,559,155,951	5,514,563,899
ຄ່າຫຼ້ຍຫ້ຽນຊັບສິນບັດຖິງທີ່ມີຕົວຕົນ ແລະ ຄ່າຕັດຣອນ (ບົດ ອະທິບາຍຂໍ້ 8 ແລະ 9)	3,147,316,585	3,062,989,065
ຄ່າທຳນຽມທີ່ປຶກສາ	432,080,640	743,093,100

21. ອາກອນກຳໄລ

ອີງຕາມກົດໝາຍສ່ວຍສາອາກອນຂອງ ສປປ ລາວ ກຸ່ມບໍລິສັດ ມີພັນທະໃນການຊຳລະອາກອນລາຍໄດ້ ໃນຮູບແບບຂອງອາກອນກຳໄລໃນອັດຕາ 20% ຂອງກຳໄລທາງອາກອນ.

ໃນຊ່ວງໄລຍະທ້າຍປີ ສິ້ນສຸດວັນທີ 31 ທັນວາ 2025, ກຸ່ມບໍລິສັດ ບໍ່ໄດ້ຮັບຮູ້ອາກອນກຳໄລເຂົ້າໃນໃບລາຍງານຜົນໄດ້ຮັບເນື່ອງຈາກຂາດທຶນທາງອາກອນຈາກການດຳເນີນງານ (ປີ 2024: ກຸ່ມບໍລິສັດ ບໍ່ໄດ້ຮັບຮູ້ອາກອນກຳໄລເຂົ້າໃນໃບລາຍງານຜົນໄດ້ຮັບເນື່ອງຈາກຂາດທຶນທາງອາກອນຈາກການດຳເນີນງານ).

22. ຂາດທຶນ ຕໍ່ຮຸ້ນ

ຂາດທຶນ ພື້ນຖານຕໍ່ຮຸ້ນແມ່ນຖືກຄິດໄລ່ຕາມອັດຕາສ່ວນຂອງ ຂາດທຶນ ຕໍ່ຜູ້ຖືຫຸ້ນໂດຍຄິດໄລ່ແບບອັດຕາທ່ວງນ້ຳໜັກສະເລ່ຍຂອງຈຳນວນຮຸ້ນສາມັນ

	2025 ກີບ	2024 ກີບ
ຂາດທຶນ ສຳລັບຜູ້ຖືຮຸ້ນສາມັນ (ກີບ)	(5,257,167,774)	(1,756,400,957)
ອັດຕາທ່ວງນ້ຳໜັກສະເລ່ຍຂອງຈຳນວນຮຸ້ນສາມັນ ຄົງເຫຼືອ (ຮຸ້ນ)	100,000,000	100,000,000
ຂາດທຶນ ພື້ນຖານຕໍ່ຮຸ້ນ (ກີບຕໍ່ຮຸ້ນ)	(52.57)	(17.56)

23. ພາກສ່ວນທີ່ກ່ຽວຂ້ອງ

ວິສາຫະກິດ ແລະ ບຸກຄົນ ທີ່ກ່ຽວຂ້ອງທາງກົງ ຫຼື ທາງອ້ອມ ຜ່ານ ໜຶ່ງ ຫຼື ຫຼາຍກຸ່ມ ຄວບຄຸມ ຫຼື ຖືກຄວບຄຸມໂດຍກຸ່ມບໍລິສັດ ຫຼື ພາຍໃຕ້ການຄວບຄຸມທົ່ວໄປຂອງກຸ່ມບໍລິສັດ ລວມທັງບໍລິສັດ ທີ່ເຮັດໜ້າທີ່ຖືຮຸ້ນ ບໍລິສັດ ຍ່ອຍ ແລະ ບໍລິສັດ ທີ່ກ່ຽວຂ້ອງກັບບໍລິສັດຍ່ອຍຖືເປັນບໍລິສັດໃນກຸ່ມດຽວກັນ ບຸກຄົນທີ່ເປັນເຈົ້າຂອງທາງກົງ ຫຼື ທາງອ້ອມ ທີ່ມີສ່ວນໄດ້ເສຍໃນບໍລິສັດ ແລະ ມີອິດທິພົນຫຼາຍຕໍ່ກັບບໍລິສັດ. ຜູ້ບໍລິຫານຫຼັກ ລວມມີ ຜູ້ອຳນວຍການ ແລະ ພະນັກງານຂອງບໍລິສັດ ແລະ ສະມາຊິກໃກ້ຊິດໃນຄອບຄົວຂອງບຸກຄົນເຫຼົ່ານີ້ ແລະ ບໍລິສັດໃນກຸ່ມ ກັບບຸກຄົນທີ່ກ່ຽວຂ້ອງ ເຫຼົ່ານີ້ແມ່ນຖືເປັນພາກສ່ວນທີ່ກ່ຽວຂ້ອງ.

ໃນການພິຈາລະນາ ຄວາມເປັນໄປໄດ້ໃນສາຍສຳພັນຂອງພາກສ່ວນທີ່ກ່ຽວຂ້ອງແມ່ນພິຈາລະນາເຖິງ ສາຍສຳພັນທີ່ແທ້ຈິງ. ບໍ່ໄດ້ພິຈາລະນາພຽງແຕ່ໃນຮູບແບບຂອງກົດໝາຍເທົ່ານັ້ນ.

ໃນລະຫວ່າງປີບໍ່ມີຍອດຄົງຄ້າງໃດໆທີ່ເກີດຂຶ້ນຈາກການຊື້ສິນຄ້າ ແລະ ການເຮັດທຸລະກຳອື່ນໆ.

24. ພາລະຜູກພັນ

ໃນວັນທີ 31 ທັນວາ, ກຸ່ມບໍລິສັດ ມີພາລະຜູກພັນສັນຍາເຊົ່າເພື່ອດຳເນີນງານທີ່ສຳຄັນ ສຳລັບການສຳປະທານທີ່ດິນ ຢູ່ແຂວງ ວຽງຈັນ ແລະ ແຂວງ ສາລະວັນ ເປັນເວລາ 30 ປີ ແລະ ສັນຍາເຊົ່າເຮືອນ ສຳລັບ 10 ປີ ແລະ ສັນຍາເຊົ່າເຮືອນ 10 ປີ.

	2025 ກີບ	2024 ກີບ
ບໍ່ເກີນ 1 ປີ	1,120,015,231	59,743,256
ເກີນ 1 ປີ ແລະ ບໍ່ເກີນ 5 ປີ	769,854,808	306,263,612
ເກີນ 5 ປີ	952,381,557	2,557,795,700
	2,842,251,596	**2,923,802,568**

25. ເຫດການທີ່ເກີດຂຶ້ນຫລັງມື້ລາຍງານ

ຜົນກະທົບຈາກຄວາມຕຶງຄຽດ ທາງພູມສາດໃນເຂດ ຕາເວັນອອກກາງ – ເຫດການຫລັງມື້ລາຍງານ

ພາຍຫຼັງມື້ສິ້ນສຸດການລາຍງານການບັນຊີ ຄວາມຕຶງຄຽດ ທາງພູມສາດ ແລະ ການຂັດແຍ່ງດ້ານອາວຸດໃນເຂດຕາເວັນອອກກາງ ຍັງຄົງດຳເນີນຢູ່ຢ່າງຕໍ່ເນື່ອງ, ເຊິ່ງອາດສົ່ງຜົນໃຫ້ຕະຫຼາດພະລັງງານ ແລະ ສິນຄ້າບໍລິໂພກ ຂອງໂລກມີຄວາມຜັນຜວນສູງຂຶ້ນ ພ້ອມທັງອາດເກີດການຂັດຂ້ອງໃນຫ່ວງໂຊ່ການສະໜອງ.

ທຸລະກິດຫຼັກຂອງກຸ່ມບໍລິສັດ ແມ່ນການນຳເຂົ້າ ແລະ ຈຳໜ່າຍນ້ຳມັນກາຊວນ (Diesel). ໃນຊ່ວງໄລຍະຫຼັງມານີ້ ກຸ່ມບໍລິສັດໄດ້ນຳໃຊ້ໂຄຕ້ຳການນຳເຂົ້ານ້ຳມັນ ຂອງຕົນຄົບຖ້ວນແລ້ວ ແລະ ຈຳເປັນຕ້ອງໃຊ້ໂຄຕ້ຳນຳເຂົ້າຂອງຜູ້ປະກອບການອື່ນທີ່ມີໃບອະນຸຍາດ ເຊິ່ງສົ່ງຜົນໃຫ້ຕົ້ນທຶນການຈັດຊື້ຂອງກຸ່ມບໍລິສັດສູງຂຶ້ນຢ່າງມີສາລະສຳຄັນ.

ດັ່ງນັ້ນ, ເພື່ອບໍລິຫານຕົ້ນທຶນ ແລະ ຮັກສາຄວາມຕໍ່ເນື່ອງໃນການດຳເນີນທຸລະກິດ, ກຸ່ມບໍລິສັດຈຶ່ງໄດ້ເລີ່ມດຳເນີນການຄ້ານ້ຳມັນປາມດິບ ເພື່ອເປັນແຫຼ່ງລາຍຮັບທົດແທນການນຳເຂົ້ານ້ຳມັນກາຊວນ ເປັນການຊົ່ວຄາວ ຈົນກວ່າກຸ່ມບໍລິສັດຈະໄດ້ຮັບໂຄຕ້ຳການນຳເຂົ້ານ້ຳມັນກາຊວນໃໝ່ ຕາມຂັ້ນຕອນ ແລະ ກົດໝາຍທີ່ກ່ຽວຂ້ອງ.

ຜູ້ບໍລິຫານໄດ້ປະເມີນຜົນກະທົບທີ່ອາດເກີດຂຶ້ນຈາກສະພາບການດັ່ງກ່າວແລ້ວ. ໃນວັນທີອະນຸມັດງົບການເງິນນີ້ ບໍ່ພົບວ່າເຫດການດັ່ງກ່າວສົ່ງຜົນກະທົບຢ່າງມີສາລະສຳຄັນຕໍ່ເອກະສານລາຍງານການເງິນ, ຜົນການດຳເນີນງານ ຫຼື ກະແສເງິນສົດຂອງກຸ່ມບໍລິສັດ. ເຫດການນີ້ຖືກຈັດປະເພດເປັນເຫດການຫລັງມື້ລາຍງານທີ່ບໍ່ຕ້ອງປັບປຸງຕົວເລກ, ດັ່ງນັ້ນ ບໍ່ໄດ້ຖືກນຳມາສະທ້ອນໃນງົບການເງິນ.

ຜູ້ບໍລິຫານຈະຕິດຕາມການພັດທະນາຂອງສະພາບການທາງພູມສາດ ແລະ ນະໂຍບາຍຂອງລັດຖະບານທີ່ກ່ຽວຂ້ອງຢ່າງໃກ້ຊິດ ແລະ ຈະເປີດເຜີຍຂໍ້ມູນເພີ່ມເຕີມຕາມຄວາມເໝາະສົມ ຖ້າມີການປ່ຽນແປງທີ່ອາດສົ່ງຜົນກະທົບຢ່າງມີສາລະສຳຄັນຕໍ່ກຸ່ມບໍລິສັດໃນອະນາຄົດ.

ບໍລິສັດ ລາວອາໂກຣເທັກ ມະຫາຊົນ

ເອກະສານລາຍງານການເງິນ

ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2025

ສາລະບານ	**ໜ້າ**
ບົດລາຍງານ ຂອງຜູ້ກວດສອບອິດສະຫຼະ	1 - 4
ໃບລາຍງານຖານະການເງິນ	5
ໃບລາຍງານຜົນໄດ້ຮັບ	6
ໃບລາຍງານສ່ວນປ່ຽນແປງທຶນ	7
ໃບລາຍງານກະແສເງິນສົດ	8 - 9
ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ	10 - 28

ບົດລາຍງານ ຂອງຜູ້ກວດສອບອິດສະຫຼະ

ເຖິງ: ຜູ້ຖືຮຸ້ນ ແລະ ສະພາຜູ້ບໍລິຫານຂອງ ບໍລິສັດ ລາວອາໂກຣເທັກ ມະຫາຊົນ

ຄວາມເຫັນ

ພວກເຮົາມີຄວາມເຫັນວ່າເອກະສານລາຍງານການເງິນສິ້ນສຸດວັນທີ 31 ທັນວາ 2025 ຂອງ ບໍລິສັດ ລາວອາໂກຣເທັກ ມະຫາຊົນ (ບໍລິສັດ) ໄດ້ສະແດງສະຖານະທາງການເງິນຂອງບໍລິສັດ ຢ່າງຖືກຕ້ອງ ແລະ ສອດຄ່ອງກັບນະໂຍບາຍການບັນຊີ ຊຶ່ງອະທິບາຍໃນ ບົດອະທິບາຍຊ້ອນທ້າຍ ຂໍ້ທີ 2 ຂອງເອກະສານລາຍງານສະບັບນີ້.

ການກວດສອບຂອງພວກເຮົາມີດັ່ງນີ້:

ເອກະສານລາຍງານການເງິນຂອງບໍລິສັດປະກອບດ້ວຍ:

- ໃບລາຍງານຖານະການເງິນ ວັນທີ 31 ທັນວາ 2025
- ໃບລາຍງານຜົນໄດ້ຮັບ ສຳລັບປີສິ້ນສຸດມື້ດຽວກັນ
- ໃບລາຍງານສ່ວນປ່ຽນແປງທຶນ ສຳລັບປີສິ້ນສຸດມື້ດຽວກັນ
- ໃບລາຍງານກະແສເງິນສົດ ສຳລັບປີສິ້ນສຸດມື້ດຽວກັນ ແລະ
- ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນທີ່ສັງລວມຫຼັກການບັນຊີທີ່ສຳຄັນ ແລະ ຂໍ້ມູນອະທິບາຍອື່ນໆ.

ພື້ນຖານໃນການອອກຄວາມເຫັນ

ພວກເຮົາໄດ້ດຳເນີນການກວດສອບ ຕາມມາດຕະຖານການກວດສອບສາກົນ (ISAs). ຄວາມຮັບຜິດຊອບຂອງພວກເຮົາພາຍໃຕ້ ມາດຕະຖານໄດ້ລະບຸໄວ້ໃນໜ້າທີ່ຮັບຜິດຊອບຂອງຜູ້ກວດສອບອິດສະຫຼະ ສຳລັບການກວດສອບ ເອກະສານລາຍງານການເງິນ ໃນບົດລາຍງານພວກເຮົາ.

ພວກເຮົາເຊື່ອວ່າຫຼັກຖານການກວດສອບທີ່ພວກເຮົາໄດ້ຮັບພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານສຳລັບການອອກຄວາມເຫັນຂອງພວກເຮົາ.

ຄວາມເປັນອິດສະຫລະ

ພວກເຮົາມີຄວາມເປັນອິດສະຫຼະ ຈາກບໍລິສັດ ຕາມຂໍ້ກຳນົດຈັນຍາບັນ ຂອງຜູ້ປະກອບວິຊາຊີບນັກບັນຊີ (ລວມເຖິງມາດຕະຖານຄວາມເປັນອິດສະຫຼະສາກົນ) ທີ່ກຳນົດໂດຍຄະນະກຳມະການຈັນຍາບັນ ສາກົນ ສຳລັບນັກບັນຊີ (IESBA Code) ທີ່ບັງຄັບໃຊ້ກັບການກວດສອບງົບການເງິນຂອງບໍລິສັດທີ່ຮັບໃຊ້ຜົນປະໂຫຍດຂອງສາທາລະນະ. ພວກເຮົາໄດ້ປະຕິບັດຕາມຄວາມຮັບຜິດຊອບຫຼັກຈັນຍາບັນອື່ນໆ, ທີ່ສອດຄ່ອງກັບ ຈັນຍາບັນວິຊາຊີບນັກບັນຊີ (IESBA Code).

ເນັ້ນໜັກໃສ່ໃນເລື່ອງ - ພື້ນຖານ ການກະກຽມ

ພວກເຮົາໃຫ້ຂໍ້ສັງເກດຕໍ່ກັບບົດອະທິບາຍຊ້ອນທ້າຍທີ 2 ຂອງເອກະສານລາຍງານການເງິນ, ເຊິ່ງໄດ້ອະທິບາຍເຖິງພື້ນຖານການກະກຽມ. ເອກະສານລາຍງານການເງິນໄດ້ສະແດງບົນພື້ນຖານການບັນຊີທີ່ຖືກນຳໃຊ້ໃນການກະກຽມບົດລາຍງານການເງິນສະບັບນີ້ ອາດມີຄວາມແຕກຕ່າງຈາກຫຼັກການບັນຊີຂອງ ມາດຕະຖານການລາຍງານການເງິນສາກົນ ("IFRS"). ດັ່ງນັ້ນ, ຜູ້ທີ່ນຳໃຊ້ ຄວນມີຄວາມເຂົ້າໃຈວ່າ ເອກະສານລາຍງານການເງິນນີ້ ບໍ່ໄດ້ມີຈຸດປະສົງເພື່ອສະແດງຖານະການເງິນ ແລະ ຜົນການດຳເນີນງານ ແລະ ກະແສເງິນສົດຕາມຫຼັກການບັນຊີຂອງ ມາດຕະຖານການລາຍງານການເງິນສາກົນ IFRS. ທັ້ງນີ້ຄວາມເຫັນ ຂອງພວກເຮົາບໍ່ໄດ້ມີການປ່ຽນແປງ ອັນເນື່ອງມາຈາກເລື່ອງທີ່ກ່າວມາຂ້າງເທິງນັ້ນ.

ບໍລິສັດ ພຣາຍສວໍເຕີເຮົ້າສກຸບເປີສ (ລາວ) ຈຳກັດຜູ້ດຽວ
ອາຄານ AGL, ຊັ້ນ 4, ອາຄານເລກທີ 33ຖະໜົນລ້ານຊ້າງ,
ຕູ້ ປ.ນ 7003, ນະຄອນຫຼວງວຽງຈັນ, ສປປ ລາວ,
ໂທ: +856 21 222718-9

ເລື່ອງສຳຄັນໃນການກວດສອບ

ເລື່ອງສຳຄັນໃນການກວດສອບ ຄື ເລື່ອງຕ່າງໆ, ທີ່ມີຄວາມສຳຄັນທີ່ສຸດຕາມການປະເມີນໂດຍຄວາມຮູ້ຄວາມສາມາດຂອງພວກເຮົາໃນການກວດສອບເອກະສານລາຍງານການເງິນສຳລັບປີປັດຈຸບັນ. ພວກເຮົາກຳນົດບັນຫາໜຶ່ງທີ່ສຳຄັນໃນການກວດສອບເຊັ່ນ: ການຮັບຮູ້ລາຍຮັບ. ບັນຫາດັ່ງກ່າວນີ້ໄດ້ມາລວມໃນການກວດສອບເອກະສານລາຍງານການເງິນເພື່ອສະແດງຄວາມເຫັນຂອງພວກເຮົາ ພ້ອມນີ້ພວກເຮົາບໍ່ໄດ້ສະແດງຄວາມເຫັນແຍກຕ່າງຫາກສຳລັບເລື່ອງເຫຼົ່ານີ້.

ເລື່ອງສຳຄັນໃນການກວດສອບ	ວິທີການກວດສອບ
ການຮັບຮູ້ລາຍຮັບ **ອີງຕາມບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນຂໍ້ 2.14 'ນະໂຍບາຍການບັນຊີທີ່ສຳຄັນການຮັບຮູ້ລາຍຮັບ' ແລະ ອີງຕາມບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນຂໍ້ 19 'ລາຍຮັບຈາກການຂາຍ'.** ລາຍຮັບຈາກການຂາຍສິນຄ້າ ແມ່ນຮັບຮູ້ ເມື່ອສິນຄ້າໄດ້ຖືກສົ່ງມອບໃຫ້ກັບຜູ້ຊື້. ເຖິງຢ່າງໃດກໍ່ຕາມ, ຍັງມີຄວາມກັງວົນວ່າລາຍຮັບອາດໄດ້ຮັບການຮັບຮູ້ກ່ອນກຳນົດຫາກອອກໃບຮຽກເກັບເງິນ ແລະ ໃບແຈ້ງສົ່ງສິນຄ້າຕອນທ້າຍປີ, ເຊິ່ງສິນຄ້າອາດຈະຍັງບໍ່ຖືກສົ່ງໄປໃຫ້ລູກຄ້າ. ອາດກໍ່ໃຫ້ເກີດຄວາມສ່ຽງເພີ່ມຂຶ້ນເມື່ອສິນຄ້າທີ່ສົ່ງໃຫ້ລູກຄ້າຢູ່ໄລຍະທາງທີ່ຫ່າງໄກ ຫຼື ເມື່ອລູກຄ້າຫາກປຸດການເຮັດວຽກຊົ່ວຄາວເຊັ່ນ: ການພັກຊົ່ວຄາວຕອນທ້າຍປີ ຫຼື ວັນພັກທາງລັດຖະການ. ດັ່ງນັ້ນ, ມີຄວາມເປັນໄປໄດ້ກ່ຽວກັບຄວາມສ່ຽງທີ່ເອກະສານລາຍງານການເງິນຈະຜິດພາດກ່ຽວກັບລາຍການທີ່ເກີດຂຶ້ນທ້າຍປີ.	ພວກເຮົາປະຕິບັດຕາມຂັ້ນຕອນດັ່ງຕໍ່ໄປນີ້: • ປະເມີນ ແລະ ທົດສອບ ປະສິດທິພາບໃນການອອກແບບ ແລະ ການດຳເນີນງານຂອງການຮັບຮູ້ລາຍຮັບ ໂດຍສຸມໃສ່ການຄວບຄຸມເລື່ອງເວລາ ແລະ ຄວາມຄົບຖ້ວນຂອງການຂາຍ • ທົດສອບການສົມທຽບຈາກການຄວບຄຸມໃນການເບີກສິນຄ້າອອກສາງກັບ ບັນຊີໃຫຍ່ແຍກປະເພດຂອງເລກບັນຊີລາຍຮັບລວມທັງການກວດສອບລາຍການປັບປຸງທຽບໃສ່ກັບເອກະສານທີ່ກ່ຽວຂ້ອງ • ເລືອກລາຍການລາຍຮັບກ່ອນ ແລະ ຫຼັງປີການບັນຊີມາທົດສອບວ່າ ບັນທຶກເໝາະສົມກັບເງື່ອນໄຂທີ່ຢູ່ໃນໃບແຈ້ງໜີ້ ຫຼື ບໍ່ • ທົດສອບລາຍການເຄື່ອນໄຫວຂອງລາຍຮັບສຳລັບສິນຄ້າທີ່ຖືກຂາຍໃນລະຫວ່າງປີການບັນຊີໂດຍມີການສົມທຽບລາຍການເຄື່ອນໄຫວຂອງລາຍຮັບກັບໃບສົ່ງສິນຄ້າທີ່ມີລາຍເຊັນລູກຄ້າ. • ໄດ້ມີການສອບຖາມຜູ້ບໍລິຫານກ່ຽວກັບຄວາມຄົບຖ້ວນ ແລະ ບັນທຶກບັນຊີໃຫ້ຖືກຕ້ອງສຳລັບການຮັບຮູ້ລາຍຮັບ. ຈາກວິທີການກວດສອບ, ພວກເຮົາພົບວ່າການຮັບຮູ້ລາຍຮັບແມ່ນເປັນໄປຕາມນະໂຍບາຍການບັນຊີ ແລະ ຫຼັກຖານທີ່ກວດສອບ.

ຂໍ້ມູນອື່ນ

ຜູ້ອຳນວຍການມີຄວາມຮັບຜິດຊອບຕໍ່ຂໍ້ມູນອື່ນເຊິ່ງປະກອບມີ ຂໍ້ມູນລວມຢູ່ໃນເອກະສານລາຍງານການເງິນປະຈຳປີ (ແຕ່ບໍ່ໄດ້ລວມຂໍ້ມູນເຂົ້າໃນເອກະສານລາຍງານການເງິນ ແລະ ບົດລາຍງານຂອງຜູ້ກວດສອບທີ່ຢູ່ໃນເອກະສານລາຍງານນັ້ນ). ພວກເຮົາຄາດວ່າຈະໄດ້ຮັບເອກະສານລາຍງານການເງິນປະຈຳປີ ພາຍຫຼັງວັນທີຂອງບົດລາຍງານຂອງຜູ້ກວດສອບ.

ຄວາມເຫັນຂອງພວກເຮົາຕໍ່ເອກະສານລາຍງານການເງິນບໍ່ຄວບຄຸມເຖິງຂໍ້ມູນອື່ນ ແລະ ພວກເຮົາບໍ່ໄດ້ໃຫ້ຄວາມເຊື່ອໝັ້ນຕໍ່ຂໍ້ມູນເຫຼົ່ານັ້ນ.

ຄວາມຮັບຜິດຊອບຂອງພວກເຮົາຕໍ່ການກວດສອບເອກະສານລາຍງານການເງິນຄື ການອ່ານ ແລະ ພິຈາລະນາວ່າຂໍ້ມູນອື່ນທີ່ມີຄວາມຂັດແຍ່ງທີ່ເປັນສາລະສຳຄັນ ກັບເອກະສານລາຍງານການເງິນ ຫລື ກັບຄວາມຮູ້ທີ່ໄດ້ມາຈາກການກວດສອບຂອງພວກເຮົາ ຫຼື ເຫັນວ່າຂໍ້ມູນອື່ນມີການສະແດງຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງທີ່ເປັນສາລະສຳຄັນ ຫຼື ບໍ່.

ຫາກພວກເຮົາພົບວ່າມີການສະແດງຂໍ້ມູນທີ່ຜິດຕໍ່ຄວາມເປັນຈິງໃນບົດລາຍງານປະຈຳປີ. ພວກເຮົາຕ້ອງໄດ້ແຈ້ງໃຫ້ຄະນະກຳມະການກວດສອບຮັບຮູ້.

ບໍລິສັດ ພຣາຍສວໍເຕີເຮົ້າສກຸບເປີສ (ລາວ) ຈຳກັດຜູ້ດຽວ
ອາຄານ AGL, ຊັ້ນ 4, ອາຄານເລກທີ 33ຖະໜົນລ້ານຊ້າງ,
ຕູ້ ປ.ນ 7003, ນະຄອນຫຼວງວຽງຈັນ, ສປປ ລາວ,
ໂທ: +856 21 222718-9

ຄວາມຮັບຜິດຊອບຂອງຜູ້ບໍລິຫານ ຕໍ່ເອກະສານລາຍງານການເງິນ

ຜູ້ອຳນວຍການມີຄວາມຮັບຜິດຊອບສຳລັບການກະກຽມເອກະສານລາຍງານການເງິນ ແລະ ນຳສະເໜີ ໂດຍສອດຄ່ອງກັບ ຫຼັກການບັນຊີ ດັ່ງທີ່ໄດ້ອະທິບາຍໄວ້ໃນ ບົດອະທິບາຍຊ້ອນທ້າຍຂໍ້ທີ 2 ຂອງເອກະສານລາຍງານການເງິນນີ້ ແລະ ການຄວບຄຸມພາຍໃນ ເຊິ່ງຜູ້ບໍລິຫານໄດ້ກຳນົດໄວ້ຢ່າງພຽງພໍ ເພື່ອສ້າງເອກະສານລາຍງານການເງິນ ທີ່ປາສະຈາກການສະແດງຂໍ້ມູນຜິດພາດທີ່ເປັນສາລະສຳຄັນ ບໍ່ວ່າເນື່ອງມາຈາກການສໍ້ໂກງ ຫຼື ຂໍ້ຜິດພາດ.

ໃນການກະກຽມເອກະສານລາຍງານການເງິນ, ຜູ້ບໍລິຫານມີຄວາມຮັບຜິດຊອບໃນການປະເມີນຄວາມສາມາດຂອງບໍລິສັດ ໃນການດຳເນີນງານຢ່າງຕໍ່ເນື່ອງ, ເປີດເຜີຍເລື່ອງທີ່ກ່ຽວຂ້ອງກ່ຽວກັບການດຳເນີນງານຕໍ່ເນື່ອງ ຕາມຄວາມເໝາະສົມ ແລະ ການໃຊ້ພື້ນຖານບັນຊີສຳລັບການດຳເນີນງານຢ່າງຕໍ່ເນື່ອງ. ຍົກເວັ້ນ ບໍລິຫານການມີຄວາມຕັ້ງໃຈທີ່ຈະຍຸບບໍລິສັດ ຫຼື ບໍ່ສາມາດດຳເນີນງານຢ່າງຕໍ່ເນື່ອງໄດ້.

ຄະນະກຳມະການກວດສອບ ໄດ້ຊ່ວຍຜູ້ບໍລິຫານ ເບິ່ງແຍງຂັ້ນຕອນໃນການກະກຽມເອກະສານລາຍງານການເງິນ.

ຄວາມຮັບຜິດຊອບຂອງຜູ້ກວດສອບ ຕໍ່ເອກະສານລາຍງານການເງິນ

ວັດຖຸປະສົງຂອງພວກເຮົາ ແມ່ນເພື່ອໃຫ້ຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນວ່າເອກະສານລາຍງານການເງິນໂດຍ ປາສະຈາກການສະແດງຂໍ້ມູນຜິດພາດທີ່ເປັນສາລະສຳຄັນ, ບໍ່ວ່າເນື່ອງຈາກການສໍ້ໂກງ ຫຼື ຂໍ້ຜິດພາດ ແລະ ສະເໜີຄວາມເຫັນຂອງພວກເຮົາຕໍ່ເອກະສານລາຍງານການເງິນ ເຊິ່ງລວມຄວາມເຫັນຂອງຜູ້ກວດສອບ. ຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນ ຄືຄວາມເຊື່ອໝັ້ນໃນລະດັບສູງແຕ່ບໍ່ໄດ້ເປັນການຮັບປະກັນວ່າການດຳເນີນການກວດສອບຕາມມາດຕະຖານການກວດສອບບັນຊີສາກົນຈະສາມາດກວດພົບ ຫຼື ປ້ອງກັນການສະແດງຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງທີ່ເປັນສາລະສຳຄັນສະເໝີໄປ, ຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງອາດເກີດຈາກການສໍ້ໂກງ ຫຼື ຂໍ້ຜິດພາດ ແລະ ຖືວ່າເປັນສາລະສຳຄັນ ເມື່ອຄາດການຢ່າງສົມເຫດສົມຜົນໄດ້ວ່າລາຍການຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງແຕ່ລະລາຍການ ຫຼື ທຸກລາຍການລວມກັນມີຜົນຕໍ່ການຕັດສິນໃຈທາງເສດຖະກິດຕໍ່ຜູ້ໃຊ້ເອກະສານລາຍງານການເງິນເຫຼົ່ານີ້.

ໃນການກວດສອບຂອງພວກເຮົາອີງຕາມມາດຕະຖານການກວດສອບບັນຊີສາກົນ, ພວກເຮົາໄດ້ໃຊ້ການປະເມີນຕາມຫຼັກວິຊາຊີບທີ່ຄວນຈະມີຕະຫຼອດການກວດສອບ, ການດຳເນີນງານຂອງພວກເຮົາລວມມີ:

- ການລະບຸ ແລະ ການປະເມີນຄວາມສ່ຽງຂອງການລາຍງານຜິດພາດທີ່ເປັນສາລະສຳຄັນຂອງເອກະສານລາຍງານການເງິນ ເນື່ອງຈາກການສໍ້ໂກງ ຫຼື ຂໍ້ຜິດພາດ. ການວາງແຜນ ແລະ ການດຳເນີນງານຕາມວິທີການກວດສອບເພື່ອຕອບສະໜອງຕໍ່ຄວາມສ່ຽງເຫຼົ່ານັ້ນ ແລະ ຫຼັກຖານທີ່ໄດ້ຈາກການກວດສອບ ທີ່ພວກເຮົາໄດ້ຮັບ ແມ່ນພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານສຳລັບການສະແດງຄຳເຫັນຂອງພວກເຮົາ. ຄວາມສ່ຽງທີ່ຈະບໍ່ພົບຂໍ້ມູນທີ່ຜິດພາດ ແລະ ເປັນສາລະສຳຄັນ ເຊິ່ງເກີດຈາກການສໍ້ໂກງມີສູງກວ່າຄວາມສ່ຽງທີ່ເກີດຈາກຂໍ້ຜິດພາດ, ເນື່ອງຈາກການສໍ້ໂກງອາດເກີດຈາກການສົມຮູ້ຮ່ວມຄິດປອມແປງເອກະສານຫຼັກຖານ, ການຕັ້ງໃຈລະເວັ້ນທີ່ຈະສະແດງຂໍ້ມູນທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງ ຫຼື ການເຂົ້າແຊກແຊງການຄວບຄຸມພາຍໃນ.
- ທຳຄວາມເຂົ້າໃຈ ແລະ ປະເມີນປະສິດທິພາບຂອງລະບົບການຄວບຄຸມພາຍໃນທີ່ກ່ຽວຂ້ອງກັບການກວດສອບ ເພື່ອກຳນົດຂັ້ນຕອນໃນການກວດສອບທີ່ເໝາະສົມກັບສະພາບຕົວຈິງ, ແຕ່ບໍ່ມີຈຸດປະສົງເພື່ອສະແດງຄວາມເຫັນກ່ຽວກັບ ປະສິດທິຜົນຂອງການຄວບຄຸມພາຍໃນຂອງບໍລິສັດ.
- ປະເມີນຄວາມເໝາະສົມຂອງການນຳໃຊ້ນະໂຍບາຍການບັນຊີ ແລະ ຄວາມສົມເຫດສົມຜົນຂອງການຄາດຄະເນທາງບັນຊີ ລວມທັງການເປີດເຜີຍຂໍ້ມູນທີ່ກ່ຽວຂ້ອງທີ່ສ້າງຂຶ້ນໂດຍຜູ້ອຳນວຍການ.

ບໍລິສັດ ພຣາຍສວໍເຕີເຮົ້າສກຸບເປີສ (ລາວ) ຈຳກັດຜູ້ດຽວ
ອາຄານ AGL, ຊັ້ນ 4, ອາຄານເລກທີ 33ຖະໜົນລ້ານຊ້າງ,
ຕູ້ ປ.ນ 7003, ນະຄອນຫຼວງວຽງຈັນ, ສປປ ລາວ,
ໂທ: +856 21 222718-9

- ສະຫລຸບກ່ຽວກັບຄວາມເໝາະສົມຂອງການໃຊ້ພື້ນຖານບັນຊີສຳລັບການດຳເນີນງານຢ່າງຕໍ່ເນື່ອງຂອງຜູ້ອຳນວຍການ ແລະ ຫຼັກຖານການກວດສອບທີ່ໄດ້ຮັບວ່າບໍ່ມີຄວາມແນ່ນອນທີ່ມີສາລະສຳຄັນ ທີ່ກ່ຽວກັບເຫດການ ຫຼື ສະພາບຕ່ືອຈິງທີ່ອາດມີຢັດໃຈໃຫ້ເກີດຂໍ້ສົງໄສຢ່າງທີ່ມີສາລະສຳຄັນຕໍ່ຄວາມສາມາດໃນການດຳເນີນງານຢ່າງຕໍ່ເນື່ອງຂອງບໍລິສັດ ຫຼື ບໍ່, ຖ້າພວກເຮົາສະຫຼຸບໄດ້ວ່າຄວາມບໍ່ແນ່ນອນທີ່ມີສາລະສຳຄັນ ພວກເຮົາຕ້ອງບັນທຶກໃນບົດລາຍງານຂອງຜູ້ກວດສອບຂອງພວກເຮົາທີ່ໄດ້ເປີດເຜີຍກ່ຽວກັບເອກະສານລາຍງານການເງິນເຊ່ິງການເປີດເຜີຍດັ່ງກ່າວບໍ່ພຽງພໍທີ່ຈະເຮັດໃຫ້ ຄວາມເຫັນຂອງພວກເຮົາຈະປ່ຽນແປງໄປ. ຂໍ້ສະຫຼຸບຂອງພວກເຮົາຂຶ້ນຢູ່ກັບຫຼັກຖານການກວດສອບທີ່ໄດ້ຮັບຈົນເຖິງວັນທີ່ໃນບົດລາຍງານຂອງພວກເຮົາ. ເຖິງຢ່າງໃດກໍຕາມ, ເຫດການ ຫຼື ສະພາບຕ່ືອຈິງໃນອະນາຄົດອາດເປັນສາເຫດໃຫ້ບໍລິສັດບໍ່ສາມາດດຳເນີນງານຢ່າງຕໍ່ເນື່ອງ.

ພວກເຮົາໄດ້ສື່ສານກັບຄະນະກຳມະການການກວດສອບກ່ຽວກັບຂອບເຂດ ແລະ ຊ່ວງເວລາຂອງການກວດສອບຕາມທີ່ໄດ້ວາງແຜນໄວ້. ເຊ່ິງລວມເຖິງບັນຫາທີ່ສຳຄັນທີ່ພົບເຫັນໃນການກວດສອບ ແລະ ຂໍ້ບົກພ່ອງຂອງການຄວບຄຸມພາຍໃນທີ່ເປັນສາລະສຳຄັນ ທີ່ພົບລະຫວ່າງການກວດສອບຂອງພວກເຮົາ.

ພວກເຮົາໄດ້ໃຫ້ຄຳຮັບຮອງແກ່ຄະນະກຳມະການກວດສອບວ່າ ພວກເຮົາໄດ້ປະຕິບັດຕາມຂໍ້ກຳນົດຫລັກຈັນຍາບັນກ່ຽວຂ້ອງກັບຄວາມເປັນອິດສະຫຼະ ແລະ ໄດ້ສື່ສານກັບຄະນະກຳມະການກວດສອບກ່ຽວກັບຄວາມສຳພັນທັງໝົດ ລວມເຖິງເລ່ືອງອ່ືນທີ່ພວກເຮົາເຊ່ືອວ່າມີເຫດຜົນທີ່ອາດພິຈາລະນາເຖິງຜົນກະທົບຕໍ່ຄວາມເປັນອິດສະຫຼະ ຂອງພວກເຮົາ ແລະ ຫລັກການທີ່ພວກເຮົາໃຊ້ເພ່ືອປ້ອງກັນການຂາດຄວາມເປັນອິດສະຫຼະ.

ຈາກເລ່ືອງທີ່ສື່ສານກັບຄະນະກຳມະການກວດສອບ ພວກເຮົາໄດ້ພິຈາລະນາເລ່ືອງຕ່າງໆທີ່ເປັນສາລະສຳຄັນ ທີ່ສຸດໃນການກວດສອບເອກະສານລາຍງານການເງິນຄ້ັງນ້ີ ແລະ ກຳນົດເປັນເລ່ືອງສຳຄັນໃນການກວດສອບ. ພວກເຮົາໄດ້ອະທິບາຍເລ່ືອງເຫ່ົານ້ີໃນບົດລາຍງານຂອງຜູ້ກວດສອບ. ຍົກເວ້ັນກົດໝາຍ ຫຼື ຂໍ້ບັງຄັບບໍ່ໃຫ້ເປີດເຜີຍຕໍ່ສາທາລະນະກ່ຽວກັບເລ່ືອງດັ່ງກ່າວ ຫຼື ໃນສະພາບການທ່ີຍາກຈະເກ່ີດຂ້ຶນ ພວກເຮົາພິຈາລະນາວ່າບໍ່ຄວນສ່ືສານເລ່ືອງດັ່ງກ່າວໃນບົດລາຍງານຂອງພວກເຮົາ ເພາະການປະຕິບັດດັ່ງກ່າວສາມາດຄາດການໄດ້ຢ່າງສົມເຫດສົມວ່າຈະມີຜົນກະທົບໃນທາງລົບຫຼາຍກວ່າຜົນປະໂຫຍດ ຕໍ່ສ່ວນໄດ້ເສຍສາທາລະນະຈາກການສ່ືສານດັ່ງກ່າວ.

ບໍລິສັດ ພຣາຍສວໍເຕີເຮ້ົາສກຸບເປີສ (ລາວ) ຈຳກັດຜູ້ດຽວ

ໂດຍ: ພິງພັນ ດຳຣິງພັນອູດົມ
ຮຸ້ນສ່ວນ

ນະຄອນຫຼວງວຽງຈັນ, ສປປ ລາວ
ວັນທ: 7 ເມສາ 2026

ບໍລິສັດ ພຣາຍສວໍເຕີເຮ້ົາສກຸບເປີສ (ລາວ) ຈຳກັດຜູ້ດຽວ
ອາຄານ AGL, ຊ້ັນ 4, ອາຄານເລກທ 33ຖະໜົນລ້ານຊ້າງ,
ຕ ປ.ນ 7003, ນະຄອນຫຼວງວຽງຈັນ, ສປປ ລາວ,
ໂທ: +856 21 222718-9

ໃບລາຍງານຖານະການເງິນ
ວັນທີ 31 ທັນວາ 2025

	ບິດ ອະທິບາຍ	2025 ກີບ	2024 ກີບ
ຊັບສິນ			
ຊັບສິນໝຸນວຽນ			
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ	3	278,907,723	3,539,121,912
ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ, ສຸດທິ	4	6,535,192,685	7,745,187,515
ເຄື່ອງໃນສາງ, ສຸດທິ	5	747,790,383	210,538,164
ວັດສະດຸສະໜອງໂຮງງານ, ສຸດທິ	6	4,647,424,158	1,321,893,384
ຄ່າເຍື່ອນຊໍ້າລະຕົ້ນທຶນການປູກພືດຍາມເພື່ອຂາຍ	7	798,383,150	603,660,182
ຊັບສິນໝຸນວຽນອື່ນໆ		6,722,829,048	6,388,100,770
ລວມຊັບສິນໝຸນວຽນ		**19,730,527,147**	**19,808,501,927**
ຊັບສິນບໍ່ໝຸນວຽນ			
ການລົງທຶນໃນບໍລິສັດໃນເຄືອ	8	240,422,000,000	240,422,000,000
ຊັບສິນບັດຄົງທີ່ ມີຕົວຕົນ, ສຸດທິ	9	17,647,115,991	19,030,412,147
ຄ່າເຍື່ອນລໍ່າຕັດຕົ້ນທຶນການປູກຕົ້ນປາມ, ສຸດທິ	10	17,479,917,147	18,014,164,440
ຄ່າເຍື່ອນລໍ່າຕັດຕົ້ນທຶນການປູກ ຕົ້ນຢີ້ນ້ຳ	11	13,989,507,460	9,158,137,050
ລວມຊັບສິນບໍ່ໝຸນວຽນ		**289,538,540,598**	**286,624,713,637**
ລວມຊັບສິນ		**309,269,067,745**	**306,433,215,564**
ໜີ້ສິນ ແລະ ທຶນເຈົ້າຂອງ			
ໜີ້ສິນ			
ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ	12	246,148,584,545	240,082,188,772
ໜີ້ສິນໝຸນວຽນອື່ນໆ	13	250,976,744	49,757,316
ເງິນກູ້ຢືມໄລຍະສັ້ນ	14	2,000,000,000	2,000,000,000
ໜີ້ຕ້ອງສົ່ງຈາກການເຊົ່າຊື້ໝຸນວຽນ	15	910,475,125	840,316,500
ລວມໜີ້ສິນໝຸນວຽນ		**249,310,036,414**	**242,972,262,588**
ໜີ້ສິນບໍ່ໝຸນວຽນ			
ໜີ້ສິນບໍ່ໝຸນວຽນອື່ນໆ	16	18,223,424,449	18,223,424,449
ລວມໜີ້ສິນບໍ່ໝຸນວຽນ		**18,223,424,449**	**18,223,424,449**
ລວມໜີ້ສິນ		**267,533,460,863**	**261,195,687,037**
ທຶນເຈົ້າຂອງ			
ທຶນຈົດທະບຽນ	17	50,000,000,000	50,000,000,000
ສ່ວນເພີ່ມທຶນ	17	3,269,466,406	3,269,466,406
ກຳໄລ/(ຂາດທຶນ) ສະສົມ			
ກຳໄລສະສົມຕາມລະບຽບການ	18	932,158,245	932,158,245
ຂາດທຶນສະສົມລໍ່າແບ່ງປັນ		(12,466,017,769)	(8,964,096,124)
ລວມທຶນເຈົ້າຂອງ		**41,735,606,882**	**45,237,528,527**
ລວມໜີ້ສິນ ແລະ ທຶນເຈົ້າຂອງ		**309,269,067,745**	**306,433,215,564**

ບໍລິສັດ ລາວ ອາໂກຣເທັກ ມະຫາຊົນ Leo Agro Tech Public Company

ທ່ານ ພົງຖານ ພິດຈຳນົງ
ຮອງຜູ້ອຳນວຍການ
ວັນທີ: 7 ເມສາ 2026

ທ່ານ ວັນສະເຫຼີມ ສີສຸຄຳມັ່ງ
ຫົວໜ້າບັນຊີ - ການເງິນ
ວັນທີ: 7 ເມສາ 2026

ບິດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 10 - 28 ແມ່ນເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນ.

ໃບລາຍງານຜົນໄດ້ຮັບ
ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2025

	ປີດ ອະທິບາຍ	2025 ກີບ	2024 ກີບ
ລາຍຮັບຈາກການຂາຍ	19	37,761,303,177	39,810,705,595
ຕົ້ນທຶນໃນການຂາຍ	20	(31,847,103,059)	(31,755,152,281)
ກຳໄລຂັ້ນຕົ້ນ		**5,914,200,118**	**8,055,553,314**
ລາຍຈ່າຍການຂາຍ ແລະ ບໍລິຫານ		(10,540,890,007)	(12,039,344,358)
ລາຍຮັບອື່ນໆ		3,092,732,446	3,947,894,712
(ຂາດທຶນ)/ກຳໄລຈາກອັດຕາແລກປ່ຽນ		(1,691,197,700)	312,937,543
(ຂາດທຶນ)/ກຳໄລ ຈາກການດຳເນີນງານ		**(3,225,155,143)**	**277,041,211**
ລາຍຈ່າຍທາງການເງິນ		(276,766,502)	(217,300,153)
(ຂາດທຶນ)/ກຳໄລ ຈາກການດຳເນີນງານກ່ອນ ອາກອນກຳໄລ		**(3,501,921,645)**	**59,741,058**
ອາກອນກຳໄລ	21	(-)	(-)
(ຂາດທຶນ)/ກຳໄລ ສຸດທິສຳຫຼາຍໃນປີ		**(3,501,921,645)**	**59,741,058**
(ຂາດທຶນ)/ກຳໄລ ຕໍ່ຮຸ້ນ			
(ຂາດທຶນ)/ກຳໄລ ພື້ນຖານຕໍ່ຮຸ້ນ	22	(35.02)	0.59

ບໍລິສັດ ລາວ ອາໂກຣເທັກ ມະຫາຊົນ
Lao Agro Tech Public Company

ທ່ານ ພິງຖານ ພິດຈຳນົງ
ຮອງຜູ້ອຳນວຍການ
ວັນທີ: 7 ເມສາ 2026

ທ່ານ ວັນສະເຫຼີມ ສີສຸດຳມົງ
ຫົວໜ້າພັນຊີ - ການເງິນ
ວັນທີ: 7 ເມສາ 2026

ປິດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 10 - 28 ແມ່ນເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນ.

	ບິດ ອະທິບາຍ	ທຶນຈົດທະບຽນ ຖອກແລ້ວ ກີບ	ສ່ວນເພີ່ມທຶນ ກີບ	ກຳໄລສະສົມ/(ຂາດທຶນ) ຄ້ຽສະສົມຕາມ ລະບຽບການ ກີບ	ກຳໄລສະສົມຈ່ຳ ແນ່ງປັນ ກີບ	ລວມ ກີບ
ຍອດເຫຼືອຍົກມາໃນວັນທີ 1 ມັງກອນ 2024	17	50,000,000,000	3,269,466,406	932,158,245	(9,023,837,182)	45,177,787,469
ຂາດທຶນສຳລັບໃນປີ		(-)	(-)	(-)	59,741,058	59,741,058
ຍອດເຫຼືອທ້າຍປີ ວັນທີ 31 ທັນວາ 2024		**50,000,000,000**	**3,269,466,406**	**932,158,245**	**(8,964,096,124)**	**45,237,528,527**
ຍອດເຫຼືອຍົກມາໃນວັນທີ 1 ມັງກອນ 2025	17	50,000,000,000	3,269,466,406	932,158,245	(8,964,096,124)	45,237,528,527
ຂາດທຶນສຳລັບໃນປີ		(-)	(-)	(-)	(3,501,921,645)	(3,501,921,645)
ຍອດເຫຼືອທ້າຍປີ ວັນທີ 31 ທັນວາ 2025		**50,000,000,000**	**3,269,466,406**	**932,158,245**	**(12,466,017,769)**	**41,735,606,882**

ທ່ານ ຟົງຖານ ພິດຈຳນົງ
ຮອງຜູ້ອຳນວຍການ
ວັນທີ: 7 ເມສາ 2026

ທ່ານ ວັນສະເຫຼີມ ສີສຸລຳມັ້ງ
ຫົວໜ້າບັນຊີ - ການເງິນ
ວັນທີ: 7 ເມສາ 2026

ບິດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 10 - 28 ແມ່ນເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນ.

ໃບລາຍງານກະແສເງິນສົດ
ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2024

	ບົດ ອະທິບາຍ	2025 ກີບ	2024 ກີບ
(ຂາດທຶນ)/ກຳໄລກ່ອນເສຍອາກອນ		**(3,501,921,645)**	**59,741,058**
ລາຍການປັບປຸງ:			
ຄ່າຫຼຸ້ຍຫ້ຽນ	9	1,896,062,547	2,056,638,329
ຄ່າຕັດຈອນ	10	970,062,538	942,879,795
ກຳໄລຈາກການສະສາງຊັບສິນບັດຄົງທີ່ມີຕົວຕົນ		(60,000,000)	(-)
ການສະສາງຂອງເຄື່ອງໃນສາງ ແລະ ວັດສະດຸສະໜອງໂຮງງານ	6	(-)	77,184
ປຸກຕົ້ນປາມ	7,11	549,073,997	236,706,224
ຂາດທຶນຈາກອັດຕາແລກປ່ຽນ		527,158,540	74,966,591
ລາຍຈ່າຍອັດຕາດອກເບ້ຍ		276,766,502	217,300,153
ໜີ້ສົງໄສຈະເສຍ	4	(-)	675,211,200
ເກັບຄືນໜີ້ສົງໄສຈະເສຍ	4	(509,401,651)	(467,270,746)
ການປ່ຽນແປງໃນ ທຶນຫມຸນວຽນ:			
ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ		1,719,396,482	936,098,527
ເຄື່ອງໃນສາງ, ສຸດທິ		(537,252,219)	1,370,974,688
ວັດສະດຸສະໜອງໂຮງງານ, ສຸດທິ		(3,325,530,774)	1,346,449,111
ເບື້ອນລ່ວງໜ້າຕັດຕົ້ນທຶນການປຸກຕົ້ນປາມ-ເບ້ຍປາມເພື່ອຂາຍ		(480,158,765)	(286,116,002)
ຊັບສິນໝຸນວຽນອື່ນໆ		(334,728,278)	(2,237,385,481)
ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ		9,864,490,126	(1,239,217,764)
ໜີ້ສິນໝຸນວຽນອື່ນໆ		252,479,528	(25,084,667)
ກະແສເງິນສົດຈາກກິດຈະກຳການດຳເນີນງານ		**7,306,496,928**	**3,661,968,200**
ດອກເບ້ຍທີ່ຈ່າຍ		(276,766,502)	(217,300,153)
ເງິນສົດສຸດທິຈາກກິດຈະກຳການດຳເນີນງານ, ສຸດທິ		**7,029,730,426**	**3,444,668,047**

ບໍລິສັດ ລາວ ອາໂກຣເທັກ ມະຫາຊົນ
Lao Agro Tech Public Company

ທ່ານ ພິງຖານ ພິດຈຳນົງ
ຮອງຜູ້ອຳນວຍການ
ວັນທີ: 7 ເມສາ 2026

ທ່ານ ວັນສະເຫຼີມ ສີສຸຄຳມັ່ງ
ຫົວໜ້າບັນຊີ - ການເງິນ
ວັນທີ: 7 ເມສາ 2026

ບົດອະທິບາຍຂ້ອນທ້າຍ ແຕ່ໜ້າທີ 10 - 28 ແມ່ນເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນ.

ໃບລາຍງານກະແສເງິນສົດ
ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2025

	ໝາຍ ເຫດ ອະທິບາຍ	2025 ກີບ	2024 ກີບ
ກະແສເງິນສົດຈາກກິດຈະກຳການລົງທຶນ			
ຊື້ຊັບສິນບັດຄົງທີ່	9	(734,306,262)	(3,404,116,267)
ເງິນສົດຮັບຈາກການສະສາງຊັບສິນບັດຄົງທີ່ມີຕົວຕົນ		60,000,000	(-)
ຈ່າຍຄ່າຕົ້ນທຶນການປູກຕົ້ນປາມ	10	(435,815,245)	(594,286,195)
ຈ່າຍຄ່າຕົ້ນທຶນການປູກຕົ້ນຢີ້ນ້ຳ	11	(2,329,461,317)	(6,620,389,346)
ຈ່າຍເງິນການລົງທຶນໃນບໍລິສັດໃນເຄືອ	8	(6,854,943,016)	(3,965,837,390)
ເງິນສົດໃຊ້ສຸດທິ ໃນກິດຈະກຳການລົງທຶນ		**(10,294,525,840)**	**(14,584,629,198)**
ກະແສເງິນສົດຈາກກິດຈະກຳການເງິນ			
ເງິນສົດຮັບຈາກການເງິນກູ້ຢືມ	14	4,000,000,000	4,000,000,000
ຈ່າຍເງິນຄືນຈາກການເງິນກູ້ຢືມ	14	(4,000,000,000)	(4,000,000,000)
ຈ່າຍເງິນຕົ້ນຄືນຈາກການເຊົ່າຊື້		(-)	(246,819,682)
ເງິນສົດສຸດທິໃຊ້ໃນກິດຈະກຳການເງິນ		**(-)**	**(246,819,682)**
ເພີ່ມຂຶ້ນສຸດທິ ໃນເງິນສົດ ແລະ ລາຍການທຽບເທົ່າເງິນສົດ		**(3,264,795,414)**	**(11,386,780,833)**
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ ຕົ້ນປີ	3	3,539,121,912	14,381,978,713
ຜົນຂອງອັດຕາແລກປ່ຽນເງິນສົດ ແລະ ລາຍການທຽບເທົ່າເງິນສົດ		4,581,225	543,924,032
ເງິນສົດ ແລະ ລາຍການທຽບເທົ່າເງິນສົດທ້າຍງວດ	3	**278,907,723**	**3,539,121,912**
ລາຍການສຳລັບທີ່ບໍ່ແມ່ນເງິນສົດ:			
ຍອດໜີ້ຕ້ອງສົ່ງຈາກການເຊົ່າຊື້ດ້ານຈ່າຍສຳລັບຍານພາຫະນະ ແລະ ເຄື່ອງໜັກຍາມທີ່ຊື້ໃນປີຜ່ານມາ		1,828,408,490	1,687,516,530
ການໄດ້ມາຂອງຕົ້ນຢີ້ນ້ຳ ທີ່ຍັງບໍ່ໄດ້ຊຳລະ	11	9,490,435,583	570,589,200
ລາຍການສຳລັບທີ່ບໍ່ແມ່ນເງິນສົດໂອນໄປ ບໍລິສັດໃນເຄືອ:			
ເຍື່ອນລ້ຳຕັດຕົ້ນທຶນການປູກຕົ້ນຢີ້ນ້ຳ	8	6,946,428,16	(-)

ບໍລິສັດ ລາວ ອາໂກຣເທັກ ມະຫາຊົນ Lao Agro Tech Public Company

ທ່ານ ພິງຖາບ ພິດຈຳນົງ
ຮອງຜູ້ອຳນວຍການ
ວັນທີ: 7 ເມສາ 2026

ທ່ານ ວັນສະເຫຼີມ ສີສຸດຳມົງ
ຫົວໜ້າບັນຊີ - ການເງິນ
ວັນທີ: 7 ເມສາ 2026

ບົດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 10 - 28 ແມ່ນເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນ.

1. ຂໍ້ມູນທົ່ວໄປ

ບໍລິສັດ ລາວອາໂກຣເທັກ ມະຫາຊົນ (ບໍລິສັດ) ແມ່ນບໍລິສັດ ຈົດທະບຽນ ທີ່ສ້າງຕັ້ງຂຶ້ນ ໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ("ສປປ ລາວ") ມີສຳນັກງານຈົດທະບຽນຕັ້ງຢູ່ ບ້ານໜອງຄັນຄູ, ເມືອງນາຊາຍທອງ, ນະຄອນຫຼວງວຽງຈັນ, ສປປ ລາວ.

ບໍລິສັດໄດ້ມີການຈຳໜ່າຍຮຸ້ນສາມັນຢູ່ໃນຕະຫຼາດຫຼັກຊັບລາວຄັ້ງທຳອິດໃນ ວັນທີ 25 ກັນຍາ 2017.

ກິດຈະກຳຫຼັກຂອງບໍລິສັດ ແມ່ນ ອຸດສາຫະກຳນ້ຳມັນປາມ ເຊິ່ງເລີ່ມຈາກການເພາະປູກເບ້ຍຕົ້ນປາມ, ປູກຕົ້ນປາມ, ຜະລິດ ແລະ ຈຳໜ່າຍ ຜະລິດຕະພັນປາມໂດຍບໍລິສັດເອງ. ບໍລິສັດຍັງສະໜອງເບ້ຍຕົ້ນປາມໃຫ້ປະຊາຊົນ ສຳລັບການເພາະປູກ ແລະ ເກັບຊື້ຄືນໝາກປາມ. ນອກຈາກນີ້ ບໍລິສັດ ຍັງໄດ້ນຳເຂົ້າສິນຄ້າສຳເລັດຮູບ ເຊັ່ນນ້ຳມັນປຸງແຕ່ງອາຫານ ແລະ ແປ້ງນົວ ຈາກປະເທດໄທ ເພື່ອຈຳໜ່າຍໃນ ສປປ ລາວ.

ນອກຈາກນີ້ ບໍລິສັດຍັງໄດ້ນຳເຂົ້າສິນຄ້າສຳເລັດຮູບ ເຊັ່ນ: ນ້ຳມັນປາມດິບ, ນ້ຳມັນພືດ ແລະ ແປ້ງນົວ ຈາກປະເທດໄທ ເພື່ອຈຳໜ່າຍໃນ ສາທາລະນະລັດປະຊາທິປະໄຕປະຊາຊົນລາວ.

ໃນເດືອນກັນຍາ 2023, ບໍລິສັດໄດ້ລົງທຶນໃນ ບໍລິສັດ ລາວ ດີກຣີນ ຈຳກັດຜູ້ດຽວ, ໂດຍການຊື້ຮຸ້ນຈຳນວນ 100,000 ຮຸ້ນ ຊຶ່ງຄິດເປັນ 100% ຂອງຈຳນວນຮຸ້ນທັງໝົດ ຂອງ ບໍລິສັດ ລາວ ດີກຣີນ ຈຳກັດຜູ້ດຽວ, ມູນຄ່າລວມ 240,422,000,000 ກີບ (100,000 ຮຸ້ນ ມູນຄ່າທີ່ຕໍ່ຮຸ້ນ 2,404,220 ກີບ). ສຳລັບປີສິ້ນສຸດວັນທີ 31 ທັນວາ 2025, ບໍລິສັດໄດ້ຖອກທຶນຈົດທະບຽນເພີ່ມເຕີມຈຳນວນ 13,801,371,177 ກີບ (ປີ 2024: 10,944,555,481 ກີບ). ນະວັນທີ 31 ທັນວາ 2025, ບໍລິສັດໄດ້ຖອກທຶນສະສົມທັງໝົດ ຈຳນວນ 24,745,926,658 ກີບ (ໂດຍມູນຄ່າທີ່ຖອກເປັນຊັບສິນ ຈຳນວນ 12,089,534,643 ກີບ ແລະ ເປັນເງິນສົດ ຈຳນວນ 12,656,392,015 ກີບ) ແລະ ສ່ວນທີ່ຍັງເຫຼືອຈຳນວນ 215,676,073,342 ກີບ ໄດ້ຖືກຮັບຮູ້ເປັນໜີ້ສິນອື່ນໆຕໍ່ບໍລິສັດໃນເຄືອ (ບົດອະທິບາຍ ທີ 12).

ກິດຈະກຳຫຼັກຂອງບໍລິສັດໃນເຄືອ ແມ່ນການປູກຕົ້ນໄມ້ກະຖິນນາລົງໃຫ້ມີຄຸນນະພາບ ແລະ ມີຄວາມຍືນຍົງເພື່ອເປັນຜະລິດຕະພັນພ້ອມ ສ້າງມູນຄ່າສູງສຸດໃນການສົ່ງອອກສູ່ຕະຫຼາດພາຍນອກ.

ເອກະສານລາຍງານການເງິນສະບັບນີ້ໄດ້ຮັບການຮັບຮອງຈາກຜູ້ບໍລິຫານໃນວັນທີ 7 ເມສາ 2026.

2. ນະໂຍບາຍການບັນຊີທີ່ສຳຄັນ

ນະໂຍບາຍການບັນຊີ ທີ່ນຳໃຊ້ເຂົ້າໃນການກະກຽມເອກະສານລາຍງານການເງິນສະບັບນີ້ ໄດ້ກຳນົດໄວ້ ດັ່ງລຸ່ມນີ້:

2.1 ພື້ນຖານໃນການກະກຽມ

ເອກະສານລາຍງານການເງິນ ໄດ້ມີການກະກຽມຕາມວິທີການບັນຊີຂອງບໍລິສັດທີ່ໄດ້ລະບຸໄວ້ ໃນບົດອະທິບາຍຊ້ອນທ້າຍຂໍ້ ທີ 2 ຂອງເອກະສານລາຍງານການເງິນສະບັບນີ້ ເຊິ່ງໄດ້ມີການສ້າງຂຶ້ນ ບົນພື້ນຖານຕົ້ນທຶນເດີມ.

ອີງຕາມກົດໝາຍບັນຊີສະບັບເລກທີ 47/ສພຊ ລົງວັນທີ 26 ທັນວາ 2013, ວິສາຫະກິດ ທີ່ຮັບໃຊ້ຜົນປະໂຫຍດ ສາທາລະນະ (PIEs) ຕ້ອງປະຕິບັດມາດຕະຖານການລາຍງານການເງິນສາກົນ IFRS, ເຖິງຢ່າງໃດກໍ່ຕາມ, ກະຊວງການ ເງິນໄດ້ອອກແຈ້ງການສະບັບເລກທີ 1137/ກງ ລົງວັນທີ 27 ເມສາ 2020 ແລະ ຈາກສຳນັກງານຄະນະກຳມະການຄຸ້ມ ຄອງຫຼັກຊັບ (ສຄຄຊ) ລົງວັນທີ 25 ພຶດສະພາ 2020, ຊຶ່ງໃຫ້ທາງເລືອກສຳລັບ ບໍລິສັດທີ່ຈົດທະບຽນໃນຕະຫຼາດຫຼັກຊັບ ເພື່ອກະກຽມເຮັດແຜນປະຕິບັດການ ໃນການນຳໃຊ້ IFRS ພາຍໃນໄລຍະເວລາສີ່ປີ. ເຖິງຢ່າງໃດກໍ່ຕາມ, ບໍລິສັດທີ່ຈົດ ທະບຽນໃນຕະຫຼາດຫຼັກຊັບ ຄວນປະຕິບັດການ ໃນການນຳໃຊ້ IFRS ຕັ້ງແຕ່ວັນທີ 1 ມັງກອນ 2026 ເປັນຕົ້ນໄປ.

ຜູ້ບໍລິຫານກຳລັງກະກຽມແຜນປະຕິບັດການ ສຳລັບການດຳເນີນການຕາມ IFRS ຕາມແຈ້ງການ. ຫຼັກການບັນຊີທີ່ນຳໃຊ້ ອາດແຕກຕ່າງຢ່າງມີສາລະສຳຄັນ ຈາກຫຼັກການບັນຊີ (IFRS).

2. ນະໂຍບາຍການບັນຊີທີສຳຄັນ (ຕໍ່)

2.1 ພື້ນຖານໃນການກະກຽມ (ຕໍ່)

ການກະກຽມເອກະສານລາຍງານການເງິນ ຮຽກຮ້ອງໃຫ້ຝ່າຍບໍລິຫານ ຕ້ອງມີການຄາດຄະເນ ແລະ ກຳນົດຂໍ້ສົມມຸດຖານ ຫຼາຍປະການ ເພື່ອສະແດງໃຫ້ເຫັນຈຳນວນເງິນຂອງຊັບສິນ ແລະ ໜີ້ສິນ. ການເປີດເຜີຍຂໍ້ມູນ ຊັບສິນ ແລະ ໜີ້ສິນ ທີ່ອາດ ຈະເກີດຂຶ້ນໃນມື້ກະກຽມເອກະສານລາຍງານການເງິນ ແລະ ລາຍຮັບ ແລະ ລາຍຈ່າຍ ໃນຮອບເວລາລາຍງານ. ສະນັ້ນ, ຕົວ ເລກຄາດຄະເນປະຕິບັດດັ່ງກ່າວ ຕ້ອງສ້າງຂຶ້ນບົນພື້ນຖານຄວາມຮັບຮູ້ທີ່ດີທີ່ສຸດຂອງຜູ້ບໍລິຫານ ກ່ຽວກັບເຫດການ ແລະ ພາກປະຕິບັດຕົວຈິງໃນປັດຈຸບັນ ເຊິ່ງສາລະສຳຄັນຂອງການຄາດຄະເນນັ້ນ ອາດຈະແຕກຕ່າງຈາກການຄາດຄະເນໃນເບື້ອງ ຕົ້ນຢ່າງເປັນສາລະສຳຄັນ.

ບໍລິສັດເປີດເຜີຍ ເອກະສານລາຍງານການເງິນແຍກກິດຈະການ ສຳລັບປີສິ້ນສຸດວັນທີ 31 ທັນວາ 2025 ແລະ 2024, ການລາຍງານ ແລະ ການເປີດເຜີຍນີ້ແມ່ນເປັນໄປຕາມກົດລະບຽບສະບັບເລກທີ 007/ຄຄຊ, ລົງວັນທີ 3 ເມສາ 2024 ອອກໂດຍ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ສະຖານະທາງດ້ານການເງິນ

ນະວັນທີ 31 ທັນວາ 2025, ໜີ້ສິນໝຸນວຽນ ຂອງບໍລິສັດແມ່ນເກີນຊັບສິນໝຸນວຽນມູນຄ່າ 13,903,435,925 ກີບ (ຫຼັງຈາກຫັກໜີ້ຕ້ອງສົ່ງອື່ນໆໃຫ້ແກ່ບໍລິສັດໃນເຄືອ). ເຖິງວ່າບໍລິສັດລາຍງານຜົນຂາດທຶນສຸດທິ ສຳລັບປີສິ້ນສຸດວັນທີ 31 ທັນວາ 2025 ແຕ່ຢ່າງໃດກໍຕາມ ບໍລິສັດມີຜົນການດຳເນີນງານເປັນບວກ ໂດຍມີກຳໄລສຸດທິສຳລັບປີສິ້ນສຸດວັນທີ 31 ທັນວາ 2024.

ນະວັນທີ 31 ທັນວາ 2025, ບໍລິສັດມີກະແສເງິນສົດໃນທາງບວກຈາກກິດຈະກຳການດຳເນີນງານ, ເຊິ່ງສອດຄ່ອງກັບປີ ສິ້ນສຸດໃນວັນທີ 31 ທັນວາ 2024, ນອກຈາກນັ້ນ ສ່ວນປ່ຽນແປງທຶນເຈົ້າຂອງສະແດງເປັນຄ່າບວກນະວັນທີ 31 ທັນວາ 2025 ແລະ 31 ທັນວາ 2024.

ຜູ້ບໍລິຫານໄດ້ດຳເນີນມາດຕະການເພື່ອບໍລິຫານສະພາບຄ່ອງຂອງບໍລິສັດ ແລະ ຮັກສາຄວາມພຽງພໍຂອງລະດັບເງິນສົດ ແລະ ລາຍການທຽບເທົ່າເງິນສົດ, ລວມທັງມີການເຈລະຈາກັບເຈົ້າໜີ້ ເພື່ອສະໜັບສະໜຸນຄວາມຕ້ອງການກະແສເງິນສົດໃນ ໄລຍະສັ້ນ ໂດຍພາລະຜູກພັນດັ່ງກ່າວຈະຢູ່ໃນລຳດັບຮອງຈາກເຈົ້າໜີ້ອື່ນໆທັງໝົດ ແລະ ອາງແຜນຈັດການສະພາບຄ່ອງ ຂອງບໍລິສັດ. ເອກະສານລາຍງານການເງິນສະບັບນີ້ໄດ້ຈັດທຳຂຶ້ນຕາມສົມມຸດຖານການດຳເນີນງານຕໍ່ເນື່ອງ, ເນື່ອງຈາກຜູ້ ບໍລິຫານພິຈາລະນາແລ້ວວ່າ ມາດຕະການດັ່ງກ່າວຈະຊ່ວຍໃຫ້ບໍລິສັດມີສະພາບຄ່ອງພຽງພໍເພື່ອດຳເນີນງານຕໍ່ໄປໄດ້ໃນ ອະນາຄົດອັນໃກ້ຢ່າງໜ້ອຍ 12 ເດືອນຂ້າງໜ້າເລີ່ມຈາກມື້ອອກເອກະສານລາຍງານການເງິນນີ້.

2.2 ການລົງທຶນໃນບໍລິສັດໃນເຄືອ

ບໍລິສັດໃນເຄືອ ເປັນກິດຈະການທັງໝົດ (ລວມເຖິງໂຄງສ້າງຕ່າງໆ) ເຊິ່ງບໍລິສັດມີສິດອຳນາດໃນການຄວບຄຸມ ກິດຈະການ. ບໍລິສັດໃນເຄືອ ໝາຍເຖິງກິດຈະການທີ່ບໍລິສັດຄວບຄຸມ, ບໍລິສັດມີສິດອຳນາດໃນການຄວບຄຸມກິດຈະການ ເມື່ອບໍລິສັດຮັບ ຫຼື ມີສິດໃນຜົນຕອບແທນຜັນປ່ຽນ ກ່ຽວຂ້ອງກັບຜູ້ໄດ້ຮັບການລົງທຶນ ແລະ ມີຄວາມສາມາດໃຊ້ອຳນາດ ໜືອຜູ້ໄດ້ຮັບການລົງທຶນ ເພື່ອໃຫ້ໄດ້ຜົນຕອບແທນຜັນປ່ຽນ. ບໍລິສັດ ລວມເອກະສານລາຍງານການເງິນຂອງບໍລິສັດໃນເຄືອ ໄວ້ໃນເອກະສານລາຍງານການເງິນສັງລວມກິດຈະການຕັ້ງແຕ່ວັນທີບໍລິສັດມີອຳນາດໃນການຄວບຄຸມບໍລິສັດໃນເຄືອຈົນ ເຖິງວັນທີ ບໍລິສັດ ສູນເສຍສິດອຳນາດໃນການຄວບຄຸມໃນບໍລິສັດໃນເຄືອນັ້ນ.

ໃນເອກະສານລາຍງານການເງິນ, ເງິນລົງທຶນໃນບໍລິສັດໃນເຄືອ ບັນທຶກບັນຊີໂດຍຖືປະຕິບັດຕາມລາຄາຕົ້ນທຶນ.

2. ນະໂຍບາຍການບັນຊີທີສຳຄັນ (ຕໍ່)

2.3 ການຕີມູນຄ່າເງິນຕາຕ່າງປະເທດ

ລາຍການເຄື່ອນໄຫວທີ່ເປັນສະກຸນເງິນຕາຕ່າງປະເທດ ໄດ້ຖືກຕີມູນຄ່າເປັນສະກຸນເງິນກີບ (“ກີບ”) ດ້ວຍການນຳໃຊ້ອັດຕາແລກປ່ຽນໃນມື້ທີ່ລາຍການເກີດຂຶ້ນ.

ຊັບສິນ ແລະ ໜີ້ສິນການເງິນ ໃນມື້ທີ່ສະແດງໃນໃບລາຍງາຍຖານະການເງິນ ທີ່ເປັນສະກຸນເງິນອື່ນແມ່ນໄດ້ຖືກປ່ຽນຄ່າເປັນສະກຸນເງິນກີບ ໂດຍນຳໃຊ້ອັດຕາແລກປ່ຽນໃນມື້ຂອງໃບລາຍງານສະຖານະການເງິນ.

ລາຍການກຳໄລ ແລະ ລາຍການຂາດທຶນທີ່ເກີດຈາກອັດຕາແລກປ່ຽນ ແລະ ການແປງຄ່າຊັບສິນ ແລະ ໜີ້ສິນທາງການເງິນ ແມ່ນໄດ້ຮັບຮູ້ໃນໃບລາຍງານຜົນໄດ້ຮັບ.

2.4 ເງິນສົດ ແລະ ລາຍການທຽບເທົ່າເງິນ

ເງິນສົດ ແລະ ລາຍການທຽບເທົ່າເງິນສົດ ລວມກັນເປັນເງິນສົດໃນມື, ເງິນຝາກທະນາຄານ ແລະ ເງິນລົງທຶນໄລຍະສັ້ນ ທີ່ມີສະພາບຄ່ອງສູງ ເຊິ່ງມີອາຍຸການຄົບກຳນົດໃນ 3 ເດືອນ ຫຼື ໜ້ອຍກວ່າ. ຢູ່ໃນໃບລາຍງານຖານະການເງິນ ເງິນເບີກເກີນບັນຊີ ແມ່ນສະແດງເປັນເງິນກູ້ຢືມໃນໜີ້ສິນໝຸນວຽນ, ຖ້າມີ.

2.5 ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ

ໜີ້ຕ້ອງຮັບທາງການຄ້າ ແລະ ໜີ້ຕ້ອງຮັບອື່ນໆແມ່ນຖືກບັນທຶກຕາມຕົວຈິງຂອງມູນຄ່າໃນໃບເກັບເງິນ ແລະ ການປະເມີນຕໍ່ມາແມ່ນນຳມູນຄ່າຍັງເຫຼືອລົບເງິນທີ່ຫັກເພື່ອໜີ້ສົງໃສຈະເສຍ ຍົກເວັ້ນໜີ້ຕ້ອງຮັບຈາກການສົ່ງເສີມປຸກຕົ້ນປາມ ໂດຍອີງຕາມການກວດການມູນຄ່າຄ້າງຊຳລະທັ້ງໝົດໃນທ້າຍປີ, ຈຳນວນເງິນທີ່ຫັກຂອງໜີ້ສົງໃສຈະເສຍ ແມ່ນສ່ວນຕ່າງລະຫວ່າງມູນຄ່າຕາມບັນຊີ ຂອງໜີ້ຕ້ອງຮັບ ແລະ ມູນຄ່າທີ່ຄາດວ່າຈະເກັບຄືນໄດ້. ໜີ້ເສຍແມ່ນຈະຖືກສະສາງໃນປີທີ່ມີໜີ້ເສຍເກີດຂຶ້ນ ເຊິ່ງຈະຖືກຮັບຮູ້ເຂົ້າໃນໃບລາຍງານຜົນໄດ້ຮັບ ພາຍໃຕ້ລາຍຈ່າຍບໍລິຫານ. ໜີ້ສົງໃສຈະເສຍ ແລະ ການເກັບຄືນໜີ້ສົງໃສຈະເສຍ ແມ່ນບັນທຶກແຍກເປັນລາຍຈ່າຍການຂາຍ ແລະ ບໍລິຫານ ແລະ ລາຍຮັບອື່ນໆ ໃນໃບລາຍງານຜົນໄດ້ຮັບຕາມລຳດັບ.

ຝ່າຍບໍລິຫານພິຈາລະນາຕັ້ງຄ່າເຜື່ອໜີ້ສົງໃສຈະສຳລັບຍອດເຫຼືອຄ້າງຫຼາຍກວ່າ 3 ປີ.

2.6 ສິນຄ້າໃນສາງ

ສິນຄ້າໃນສາງໄດ້ສະແດງໃນມູນຄ່າຕົ້ນທຶນ ຫຼື ມູນຄ່າສຸດທິ ທີ່ຈະໄດ້ຮັບທີ່ຕ່ຳກວ່າ. ຕົ້ນທຶນໄດ້ຖືກກຳນົດໂດຍຕົ້ນທຶນສະເລ່ຍທີ່ເກີດຂຶ້ນຈິງຂອງການຜະລິດທີ່ເກີດຂຶ້ນໃນປີ ໂດຍໃຊ້ວິທີ ຕົ້ນທຶນສະເລ່ຍ. ຕົ້ນທຶນຂອງສິນຄ້າສຳເລັດຮູບປະກອບມີ ວັດຖຸດິບທາງກົງ. ຄ່າແຮງງານທາງກົງ ແລະ ຄ່າໃຊ້ຈ່າຍອື່ນໆທີ່ກ່ຽວກັບການຜະລິດທາງກົງ. ຕົ້ນທຶນຂອງການຈັດຊື້ ປະກອບມີ ສອງສ່ວນຄື ລາຄາຊື້ ແລະ ລາຍຈ່າຍທາງກົງຂອງການໄດ້ມາຂອງສິນຄ້າໃນສາງ ເຊັ່ນ: ຄ່າພາສີນຳເຂົ້າ ແລະ ຄ່າຂົນສົ່ງ, ຫັກໃຫ້ສ່ວນຫລຸດ, ຄ່າເຜື່ອການຫຼຸດລົງ ຫຼື ສ່ວນຫລຸດ. ມູນຄ່າສຸດທິ ທີ່ຈະໄດ້ຮັບແມ່ນປະເມີນລາຄາຂາຍໄດ້ຕາມປົກກະຕິຂອງທຸລະກິດ ຫັກລາຍຈ່າຍທີ່ສຳເລັດ ແລະ ລາຍຈ່າຍໃນການຂາຍ. ຕັ້ງສຳຮອງມູນຄ່າເຊື່ອມຈະຕັ້ງໃນກໍລະນີທີ່ຈຳເປັນ ສຳລັບສິນຄ້າທີ່ຫລ້າສະໄໝ. ເຄື່ອນໄຫວຊ້າ ແລະ ສິນຄ້າຄົງເຫຼືອທີ່ມີຂໍ້ຕຳນິ.

ມູນຄ່າສຸດທິ ທີ່ຈະໄດ້ຮັບແມ່ນປະເມີນລາຄາຂາຍໄດ້ຕາມປົກກະຕິຂອງທຸລະກິດ ຫັກລາຍຈ່າຍທີ່ສຳເລັດ ແລະ ລາຍຈ່າຍໃນການຂາຍ. ຕັ້ງສຳຮອງມູນຄ່າເຊື່ອມຈະຕັ້ງໃນກໍລະນີທີ່ຈຳເປັນ ສຳລັບສິນຄ້າທີ່ຫລ້າສະໄໝ. ເຄື່ອນໄຫວຊ້າ ແລະ ສິນຄ້າຄົງເຫຼືອທີ່ມີຂໍ້ຕຳນິ. ລາຍການສະສາງເນື່ອງຈາກສິນຄ້າໃນສາງທີ່ ໃຊ້ງານບໍ່ໄດ້ ແມ່ນຖືກຮັບຮູ້ໃນໃບລາຍງານຜົນໄດ້ຮັບ.

2. ນະໂຍບາຍການບັນຊີທີສຳຄັນ (ຕໍ່)

2.7 ວັດສະດຸສະໜອງໂຮງງານ

ວັດສະດຸສະໜອງໂຮງງານແມ່ນຖືກລະບຸໃນລາຄາຕົ້ນທຶນ ແລະ ກຳນົດ ໂດຍວິທີ ຕົ້ນທຶນສະເລ່ຍ. ວັດສະດຸສະໜອງໂຮງງານ ສ່ວນໃຫຍ່ປະກອບມີ ນ້ຳມັນປາມດິບ, ສານເຄມີ, ຂີ້ເຈຍ, ນ້ຳມັນກາຊວນປະເພດ B100, ປຸຍ ແລະ ເມັດປາມ. ເຊິ່ງວັດສະດຸສະໜອງໂຮງງານເຫຼົ່ານີ້ແມ່ນສາມາດຂາຍໃຫ້ກັບລູກຄ້າ ເຊິ່ງເກັບເປັນລາຍຮັບຂອງບໍລິສັດ ເນື່ອງຈາກວັດສະດຸສະໜອງໂຮງງານ ດັ່ງກ່າວໄດ້ຖືກຈັດຊື້ ແລະ ຜະລິດຂຶ້ນບາງສ່ວນ ເພື່ອຈຸດປະສົງສອງປະການ ຄື: (1) ຂາຍໃຫ້ແກ່ລູກຄ້າພາຍນອກ ແລະ (2) ການນຳໄປໃຊ້ເປັນວັດຖຸດິບຫຼັກໃນການຜະລິດນ້ຳມັນໄບໂອດີເຊວ ເພື່ອນຳໃຊ້ພາຍໃນກິດຈະການ. ຕົ້ນທຶນໃນການຊື້ ປະກອບດ້ວຍລາຄາຊື້ ແລະ ລາຍຈ່າຍທີ່ກ່ຽວຂ້ອງ ໂດຍກົງກັບການໄດ້ມາຂອງວັດສະດຸສະໜອງໂຮງງານ ເຊັ່ນ ຄ່າພາສີຂາເຂົ້າ ແລະ ຄ່າຂົນສົ່ງ ຫັກສ່ວນລຸດ ຄ່າເຜື່ອການຫຼຸດລົງ ຫຼື ສ່ວນຫລຸດຕາມເງື່ອນໄຂ. ການຕັ້ງສຳຮອງມູນຄ່າເຊື່ອມແມ່ນຄິດໄລ່ເມື່ອເຫັນຈຳເປັນສຳລັບສິນຄ້າລ້າສະໄໝ, ເຄື່ອນໄຫວຊ້ຳ ແລະ ເປ່ເພ. ລາຍການສະສາງເນື່ອງຈາກວັດສະດຸສະໜອງໂຮງງານ ທີ່ໃຊ້ງານບໍ່ໄດ້ ແມ່ນຖືກຮັບຮູ້ໃນໃບລາຍງານຜົນໄດ້ຮັບ.

2.8 ຊັບສິນບັດຄົງທີ່ມີຕົວຕົນ

ລາຍການຂອງຊັບສິນບັດຄົງທີ່ມີຕົວຕົນ ໄດ້ຖືກບັນທຶກບັນຊີຕາມມູນຄ່າຕົ້ນທຶນເດີມຫັກດ້ວຍຄ່າຫລຸ້ຍຫ້ຽນສະສົມ. ມູນຄ່າຕົ້ນທຶນເດີມປະກອບມີ ລາຍຈ່າຍທາງກົງ ຂອງການໄດ້ມາຂອງລາຍການຊັບສິນບັດນັ້ນ. ລາຍຈ່າຍໃນເວລາຕໍ່ມາໄດ້ລວມເຂົ້າໃນມູນຄ່າຕາມບັນຊີຂອງຊັບສິນບັດ ຫຼື ຮັບຮູ້ເປັນແຕ່ລະຊັບສິນບັດແຍກຕ່າງຫາກ ຕາມຄວາມເໝາະສົມ, ເມື່ອມີຄວາມເປັນໄປໄດ້ວ່າຜົນປະໂຫຍດທາງເສດຖະກິດໃນອະນາຄົດທີ່ກ່ຽວຂ້ອງກັບລາຍການຊັບສິນບັດດັ່ງກ່າວ ຈະກັບເຂົ້າສູ່ບໍລິສັດ ແລະ ຄ່າໃຊ້ຈ່າຍຂອງລາຍການນັ້ນສາມາດປະເມີນ ໄດ້ຢ່າງໜ້າເຊື່ອຖື.

ທີ່ດິນບໍ່ໄດ້ຄິດຄ່າຫລຸ້ຍຫ້ຽນ. ເຊິ່ງຄ່າຫລຸ້ຍຫ້ຽນແມ່ນໄດ້ຄິດໄລ່ເພື່ອຈະຕັດລາຍຈ່າຍຫັກມູນຄ່າຍັງເຫຼືອຂອງແຕ່ລະລາຍການຊັບສິນບັດຕາມອາຍຸການໃຊ້ງານທີ່ໄດ້ຄາດຄະເນໂດຍການຄິດໄລ່ຄ່າຫຼ້ຍຫ້ຽນບົນຫຼັກການ ການຄິດໄລ່ ແບບຄົງຕົວ.

ປະເມີນອາຍຸການໃຊ້ງານ ຂອງແຕ່ລະປະເພດຂອງຊັບສິນບັດດັ່ງຕໍ່ໄປນີ້:

	ປີ
ອາຄານ ແລະ ໂຄງສ້າງພື້ນຖານ	5 - 40
ເຟີນີເຈີ ແລະ ອຸປະກອນ	3 - 5
ເຄື່ອງຈັກ ແລະ ອຸປະກອນ	5 - 20
ຍານພາຫະນະ	3 - 5

ໃນກໍລະນີທີ່ມູນຄ່າຕາມບັນຊີຂອງຊັບສິນບັດສູງກວ່າມູນຄ່າທີ່ຄາດຄະເນວ່າຈະໄດ້ຮັບຄືນ ຈະບັນທຶກລົງທັນທີເປັນຈຳນວນທີ່ຈະໄດ້ຮັບຄືນ.

ຄ່າສ້ອມແປງ ແລະ ການບຳລຸງຮັກສາ ໄດ້ຖືກຮັບຮູ້ ເຂົ້າໃນໃບລາຍງານຜົນໄດ້ຮັບ ໃນປີການບັນຊີທີ່ເກີດຂຶ້ນຕົວຈິງ. ຄ່າໃຊ້ຈ່າຍໃນການສ້ອມແປງໃຫຍ່ສ່ວນເພີ່ມແມ່ນຈະເພີ່ມເຂົ້າໃນຍອດເຫຼືອໃນບັນຊີຂອງຊັບສິນບັດ ເມື່ອມີຄວາມເປັນໄປໄດ້ວ່າຈະເກີດຜົນປະໂຫຍດດ້ານເສດຖະກິດໃນອະນາຄົດ ໃນຈຳນວນທີ່ເກີນກວ່າມູນຄ່າເດີມ ຂອງຊັບສິນບັດທີ່ມີຢູ່ໃນປັດຈຸບັນທີ່ຈະກັບເຂົ້າສູ່ບໍລິສັດ ຕົ້ນທຶນຄ່າສ້ອມແປງໃຫຍ່ຈະຖືກຫັກຄ່າຫຼ້ຍຫ້ຽນຕາມອາຍຸການນຳໃຊ້ທີ່ຍັງເຫຼືອຂອງຊັບສິນບັດທີ່ກ່ຽວຂ້ອງ.

ກຳໄລ ແລະ ຂາດທຶນ ຈາກການຂາຍຊັບສິນບັດຄົງທີ່ ໄດ້ມາຈາກການສົມທຽບລາຄາຂາຍ ກັບ ມູນຄ່າຕາມບັນຊີ ແລະ ຈົດເຂົ້າໃນໃບລາຍງານຜົນໄດ້ຮັບ.

2. ນະໂຍບາຍການບັນຊີທີສຳຄັນ (ຕໍ່)

2.9 ເຍື່ອນລໍຖ້າຕັດ ຕົ້ນທຶນການປູກຕົ້ນປາມ

ເຍື່ອນລໍຖ້າຕັດຕົ້ນທຶນໃນການປູກປາມແມ່ນຕົ້ນທຶນສະສົມໃນການປູກຕົ້ນປາມ ເຊິ່ງລວມມີຄ່າບຸກເບີກທີ່ດິນ ຄ່າແຮງງານ ແລະ ຄ່າໃຊ້ຈ່າຍອື່ນໆ ທີ່ກ່ຽວຂ້ອງໂດຍກົງກັບການປູກຕົ້ນປາມ. ມູນຄ່າ ຂອງຕົ້ນປາມແມ່ນວັດໂດຍ ການເອົາຕົ້ນທຶນໃນການປູກທັງໝົດຫັກດ້ວຍມູນຄ່າຕັດຮອນສະສົມ ແລະ ຄ່າເຜື່ອສຳລັບການສູນເສຍ ຂອງຕົ້ນ ປາມ. ຕົ້ນປາມທີ່ພ້ອມໃຫ້ເກັບກ່ຽວ ຈະຖືກຕັດຮອນໄປເປັນຕົ້ນທຶນ ຂອງວັດຖຸດິບໃນການຜະລິດ ໂດຍອາຍຸການ ຕັດຮອນແມ່ນ 26 ປີ ຕາມອາຍຸການທີ່ຄາດວ່າ ຈະໄດ້ຮັບຜົນປະໂຫຍດທາງເສດຖະກິດ.

2.10 ເຍື່ອນຊຳລະຕົ້ນທຶນການປູກຕົ້ນປາມ-ເບັຍປາມ

ເຍື່ອນຊຳລະຕົ້ນທຶນການປູກເບັຍຕົ້ນປາມ ແມ່ນສະແດງຢູ່ໃນໃບສະຫລຸບຊັບສົມບັດໃນຕົ້ນທຶນຫັກຄ່າເຜື່ອສະສົມ ສຳລັບ ຄ່າເຊື່ອມມູນຄ່າ. ຕົ້ນທຶນແມ່ນປະກອບມີທັງ ລາຄາຊື້ເບັຍຕົ້ນປາມ ແລະ ລາຍຈ່າຍໂດຍກົງຂອງການໄດ້ມາເບັຍຕົ້ນປາມ ເຊັ່ນ ຄ່າພາສີນຳເຂົ້າ ແລະ ຄ່າຂົນສົ່ງ.

2.11 ເຍື່ອນຊຳລະຕົ້ນທຶນການປູກ - ຕົ້ນຢີນ້ຳ

ເຍື່ອນຊຳລະຕົ້ນທຶນການປູກຕົ້ນຢີນ້ຳແມ່ນຕົ້ນທຶນສະສົມໃນການປູກຕົ້ນຢີນ້ຳເຊິ່ງລວມມີຄ່າບຸກເບີກທີ່ດິນ ຄ່າແຮງງານ, ຄ່າ ປຸຍ ແລະ ຄ່າໃຊ້ຈ່າຍອື່ນໆ ທີ່ກ່ຽວຂ້ອງໂດຍກົງກັບການປູກຕົ້ນຢີນ້ຳ. ໂດຍປົກກະຕິແລ້ວຕົ້ນຢີນ້ຳ ແມ່ນເລີ່ມເກັບກ່ຽວແລະ ໃຫ້ຜົນຜະລິດໃນລະຫວ່າງ 5 ຫາ 6 ປີນັບແຕ່ມື້ເລີ່ມປູກເປັນຕົ້ນມາ.

2.12 ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ

ໜີ້ຕ້ອງສົ່ງທາງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆແມ່ນຖືກບັນທຶກຕາມຕົວຈິງຂອງມູນຄ່າໃນໃບເກັບເງິນ ແລະ ການປະເມີນຕໍ່ມາ ແມ່ນນຳມູນຄ່າຍັງເຫຼືອລົບເງິນທີ່ຫັກອື່ນໆທີ່ກ່ຽວຂ້ອງ.

2.13 ສັນຍາເຊົ່າ-ໃນກໍລະນີບໍລິສັດເປັນຜູ້ເຊົ່າ

ສັນຍາເຊົ່າທີ່ບໍ່ໄດ້ໂອນຄວາມສ່ຽງ ແລະ ຄວາມເປັນເຈົ້າຂອງໃຫ້ແກ້ຜູ້ເຊົ່າຖືເປັນສັນຍາເຊົ່າດຳເນີນງານ. ລາຍຈ່າຍພາຍໃຕ້ ສັນຍາເຊົ່າດຳເນີນງານ (ສິດທິຈາກສິ່ງຕອບແທນທີ່ໄດ້ຈະຮັບຈາກຜູ້ໃຫ້ເຊົ່າ)ຈະໄດ້ຮັບຮູ້ໃນໃບລາຍງານຜົນໄດ້ຮັບແບບສະ ເໝີຕົ້ວຕະຫຼອດອາຍຸຂອງສັນຍາເຊົ່າ.

ເມື່ອສັນຍາຄ່າເຊົ່າຖືກຍົກເລີກກ່ອນໄລຍະເວລາທີ່ກຳນົດ. ການຊຳລະເງິນໃຫ້ຜູ້ໃຫ້ເຊົ່າຕ້ອງຊຳລະນັ້ນແມ່ນຈະຕ້ອງໄດ້ຮັບຮູ້ ເປັນຄ່າປັບໄໝທີ່ເປັນຄ່າໃຊ້ຈ່າຍໃນງວດເມື່ອມີການຍົກເລີກສັນຍາ.

ສັນຍາເຊົ່າຊັບສົມບັດຄົງທີ່ທີ່ມີຕົວຕົນ ເຊິ່ງໄດ້ມີການເຊັນສັນຍາເຊົ່າກັບບໍລິສັດໃຫ້ເຊົ່າສິນເຊື່ອ ຈະຈັດເປັນປະ ເພດສັນຍາ ເຊົ່າທາງການເງິນ. ຄ່າໃຊ້ຈ່າຍຕ່າງໆຂອງຊັບສົມບັດຄົງທີ່ທີ່ມີຕົວຕົນແມ່ນສອດຄ່ອງໃນການຈັດຊື້, ແລະ ຄ່າຕິດຕັ້ງ ແລະ ຄ່າ ໃຊ້ຈ່າຍໂດຍກົງອື່ນໆທີ່ກ່ຽວກັບຊັບສົມບັດຄົງທີ່ທີ່ມີຕົວຕົນ. ໜີ້ຕ້ອງສົ່ງຂອງການເຊົ່າຊື້ແມ່ນລວມມີຕົ້ນທຶນຂອງຊັບສົມບັດ ຄົງທີ່ ແລະ ດອກເບັຍຈ່າຍລໍຖ້າຕັດຈ່າຍ. ດອກເບັຍຈ່າຍລໍຖ້າຕັດຈ່າຍແມ່ນຈະບັນທຶກເປັນຊັບສິນອື່ນໆ ແລະ ຈະຮັບຮູ້ເປັນ ຄ່າໃຊ້ຈ່າຍໃນໃບລາຍງານຜົນໄດ້ຮັບແບບສະເໝີຕົ້ວຕະຫຼອດອາຍຸຂອງສັນຍາເຊົ່າ.

2. ນະໂຍບາຍການບັນຊີທີສຳຄັນ (ຕໍ່)

2.14 ການຮັບຮູ້ລາຍຮັບ

ລາຍຮັບຈາກການຂາຍສິນຄ້າ ແມ່ນຮັບຮູ້ ເມື່ອຄວາມສ່ຽງທີ່ເປັນສາລະສຳຄັນ ແລະ ຜົນຕອບແທນຂອງຄວາມເປັນເຈົ້າຂອງສິນຄ້າ ໄດ້ໂອນໃຫ້ກັບຜູ້ຊື້ສິນຄ້າ. ເຊິ່ງໂດຍທົ່ວໄປ ອີງໃສ່ເວລາທີ່ບໍລິສັດໄດ້ມອບສິນຄ້າໃຫ້ກັບລູກຄ້າຕາມ ໄລຍະເວລາການສົ່ງມອບ ແລະ ເງື່ອນໄຂທີ່ຕົກລົງກັນ.

ລາຍຮັບອື່ນໆ ແມ່ນຮັບຮູ້ຕາມພື້ນຖານລຸ່ມນີ້:

- ລາຍຮັບຈາກການຂາຍການປາມແມ່ນຮັບຮູ້ເມື່ອການປາມໄດ້ຖືກສົ່ງໃຫ້ກັບລູກຄ້າຕາມ ໄລຍະເວລາການສົ່ງມອບ ແລະ ເງື່ອນໄຂທີ່ຕົກລົງກັນ.

2.15 ອາກອນກຳໄລ

ບໍລິສັດ ບັນທຶກອາກອນກຳໄລ ຕາມຫຼັກເກນຄ້າງຮັບຄ້າງຈ່າຍ ຕາມກົດໝາຍສວຍສາອາກອນຂອງລາວ. ບໍລິສັດ ບໍ່ໄດ້ບັນທຶກອາກອນກຳໄລທີ່ຄ້າງຈ່າຍ ຫຼື ຄ້າງຮັບໃນອະນາຄົດ ເຊິ່ງເກີດຈາກສ່ວນຜິດຊົ່ວຄາວ. ຄ່າໃຊ້ຈ່າຍອາກອນກຳໄລ ຖືກຮັບຮູ້ບົນພື້ນຖານການດຳເນີນງານໃນປີ ຫຼັງຄັດແກ້ທີ່ບໍ່ສາມາດຫັກລາຍຈ່າຍ ແລະ ການເຄື່ອນໄຫວອື່ນໆ ຕາມກົດໝາຍວ່າດ້ວຍສວຍສາອາກອນ ແລະ ອັດຕາອາກອນທີ່ກ່ຽວຂ້ອງ. ພາຍໃຕ້ລະບຽບການບັນຊີ ແລະ ກົດໝາຍສວຍສາອາກອນ ລາຍຈ່າຍອາກອນໃນປີ ແມ່ນໄດ້ຄິດໄລ່ຕາມພື້ນຖານລາຍຮັບຂອງບໍລິສັດ (ບົດອະທິບາຍທີ່ 21).

ໃນ ສປປ ລາວ, ອາກອນກຳໄລຕ້ອງໄດ້ຮັບການກວດກາລະອຽດຄືນຈາກເຈົ້າໜ້າທີ່ ທີ່ກ່ຽວຂ້ອງບົນພື້ນຖານທົ່ວໄປ. ນອກຈາກນີ້, ຂໍ້ພິບເຫັນທີ່ເກີດຂຶ້ນຈາກການກວດກາຄືນດັ່ງກ່າວ ອາດຈະຕ້ອງມີຄຳເຫັນ ແລະ ຕີລາຄາໂດຍພາກສ່ວນທີ່ກ່ຽວຂ້ອງ ເຊິ່ງອາດຈະມີຜົນກະທົບຕໍ່ບໍລິສັດ ແລະ ອາດສົ່ງຜົນໃຫ້ເກີດການຊຳລະອາກອນເພີ່ມຕື່ມ ຫຼື ຮັບຄືນໃນກໍລະນີຈຳເປັນ ແລະ ສາລະສຳຄັນ, ເຊິ່ງອາດຈະມີຜົນໃນການຈ່າຍເງິນ ຫຼື ຮັບຄືນຂອງການຮັບຮູ້ລາຍຈ່າຍອາກອນກຳໄລພາຍໃນປີທີ່ມີການກວດກາໄດ້ສຳເລັດ.

3. ເງິນສົດ ແລະ ລາຍການທຽບເທົ່າເງິນສົດ

	2025 ກີບ	2024 ກີບ
ເງິນສົດໃນມື	2,020,850	4,698,000
ເງິນຝາກໃນທະນາຄານທີ່ສາມາດຖອນເກັບໄດ້ໃນເວລາທີ່ຕ້ອງການ[(i)]	276,886,873	3,534,423,912
	278,907,723	**3,539,121,912**

(i) ເງິນຝາກໃນທະນະຄານ ລວມມີສາມສະກຸນເງິນ ແມ່ນມີ ສະກຸນ ໂດລາ, ກີບ ແລະ ບາດ ໃນບັນຊີເງິນຝາກກະແສລາຍວັນ ກັບທະນະຄານພາຍໃນປະເທດ ແລະ ທະນະຄານສາຂາຕ່າງປະເທດ.

4. ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ, ສຸດທິ

	2025 ກີບ	2024 ກີບ
ໜີ້ຕ້ອງຮັບການຄ້າ[(i)]	7,570,360,885	9,289,757,366
ໜີ້ຕ້ອງຮັບອື່ນໆ	339,600,000	339,600,000
ຫັກ: ຄ່າສູນເສຍມູນຄ່າ[(ii)]	(1,374,768,200)	(1,884,169,851)
	6,535,192,685	**7,745,187,515**

(i) ໜີ້ຕ້ອງຮັບການຄ້າປະກອບມີໜີ້ຕ້ອງຮັບຈາກເບ້ຍຕົ້ນປາມ, ນ້ຳມັນກາຊວນ ແລະ ການຂາຍນ້ຳມັນປາມດິບພາຍໃນປີ.

(ii) ລາຍການເຄື່ອນໄຫວສຳລັບໜີ້ສົງໄສຈະເສຍແມ່ນສະແດງດັ່ງຕາຕະລາງຂ້າງລຸ່ມນີ້:

	2025 ກີບ	2024 ກີບ
ຍອດຍົກມາ	1,884,169,851	1,676,229,397
ເພີ່ມຂຶ້ນ	(-)	675,211,200
ເກັບຄືນໜີ້ສົງໄສຈະເສຍ[(i)]	(509,401,651)	(467,270,746)
ຍອດຄົງເຫຼືອ	**1,374,768,200**	**1,884,169,851**

(i) ບໍລິສັດສຳເລັດການເກັບຄືນຈຳນວນເງິນທີ່ເຄີຍຕັ້ງເປັນໜີ້ສົງໄສຈະເສຍກ່ອນໜ້ານັ້ນ, ສິ່ງຜົນໃຫ້ມີການຫັກລ້າງຄືນໜີ້ສົງໄສຈະເສຍ.

5. ສິນຄ້າໃນສາງ, ສຸດທິ

	2025 ກີບ	2024 ກີບ
ສິນຄ້າສຳເລັດຮູບ[(i)]	740,819,083	155,623,245
ຜະລິດຕະພັນພວມປຸງແຕ່ງ	6,971,300	54,914,919
ຫັກ: ຄ່າສູນເສຍມູນຄ່າ ສຳລັບສິນຄ້າລ້າສະໄໝ ແລະ ເຄື່ອນໄຫວຊ້າ	(-)	(-)
	747,790,383	**210,538,164**

(i) ສິນຄ້າສຳເລັດຮູບມີສ່ວນປະກອບຫຼັກເປັນຜະລິດຕະພັນເສດເຫຼືອຂອງປາມ, ປຸ໋ຍ, ນ້ຳມັນພືດ, ແລະ ນ້ຳມັນ B5 ທີ່ມີໄວ້ເພື່ອຂາຍ. ສຳລັບປີທີ່ສິ້ນສຸດວັນທີ 31 ເດືອນທັນວາ 2025, ບໍລິສັດບໍ່ໄດ້ບັນທຶກການສະສາງສິນຄ້າໃນສາງໃດໆ.

6. ວັດສະດຸສະໜອງໂຮງງານ, ສຸດທິ

	2025 ກີບ	2024 ກີບ
ປຸ໋ຍສຳລັບການປູກຕົ້ນປາມ	208,883,414	520,696,279
ນ້ຳມັນປາມ	4,196,253,337	474,693,590
ນ້ຳມັນກາຊວນ	5,947,336	100,955,542
ອຸປະກອນໂຮງງານອື່ນໆ[(i)]	236,340,071	225,547,973
ຫັກ: ຄ່າສູນເສຍມູນຄ່າ ສຳລັບສິນຄ້າລ້າສະໄໝ ແລະ ເຄື່ອນໄຫວຊ້າ	(-)	(-)
	4,647,424,158	**1,321,893,384**

(i) ວັດສະດຸສະໜອງໂຮງງານອື່ນໆຫຼັກໆແມ່ນປະກອບມີ: ນ້ຳມັນກາຊວນປະເພດ B100, ຂີ້ເຈຍ ແລະ ສານເຄມີ ແລະ ເມັດປາມ. ໃນລະຫວ່າງປີສິ້ນສຸດວັນທີ 31 ທັນວາ 2025 ບໍລິສັດ ບໍ່ໄດ້ມີການສະສາງອອກວັດສະດຸສະໜອງໂຮງງານ, ໃນຂະນະທີ່ປີ 2024 ໄດ້ມີການສະສາງອອກວັດສະດຸສະໜອງໂຮງງານມູນຄ່າ 77,184 ກີບ ແລະ ໄດ້ຮັບຮູ້ມູນຄ່າດັ່ງກ່າວເຂົ້າໃນໃບລາຍງານຜົນໄດ້ຮັບ.

7. ເຍື່ອນລໍຖ້າຕັດຕົ້ນທຶນການປູກຕົ້ນປາມ-ເບ້ຍປາມເພື່ອຂາຍ

ເຍື່ອນຊຳລະຕົ້ນທຶນການປູກເບ້ຍຕົ້ນປາມ ຕົ້ນທຶນແມ່ນປະກອບມີທັງ ລາຄາຊື້ເບ້ຍຕົ້ນປາມ ແລະ ລາຍຈ່າຍໂດຍກົງຂອງການໄດ້ມາເບ້ຍຕົ້ນປາມ ເຊັ່ນ: ຄ່າແຮງງານໃນການປູກ ແລະ ຄ່າປຸ໋ຍ.

ນະວັນທີ 31 ທັນວາ 2025, ບໍລິສັດໄດ້ມີການສະສາງເຍື່ອນລໍຖ້າຕັດຕົ້ນທຶນການ ປູກຕົ້ນປາມທີ່ຕາຍອອກມູນຄ່າ 285,435,797 ກີບ ແລະ ໄດ້ຮັບຮູ້ມູນຄ່າດັ່ງກ່າວເຂົ້າໃນໃບລາຍງານຜົນໄດ້ຮັບ.

ລາຍການເຄື່ອນໄຫວສຳລັບເຍື່ອນລໍຖ້າຕັດຕົ້ນທຶນການປູກຕົ້ນປາມ-ເບ້ຍປາມເພື່ອຂາຍ ແມ່ນສະແດງດັ່ງຕາຕະລາງຂ້າງລຸ່ມນີ້:

	2025 LAK	2024 LAK
ຍອດຍົກມາ	**603,660,182**	**554,250,404**
ເພີ່ມຂຶ້ນ	480,158,765	286,116,002
ສະສາງອອກ	(285,435,797)	(236,706,224)
ຍອດເຫຼືອ	**798,383,150**	**603,660,182**

8. ການລົງທຶນໃນບໍລິສັດໃນເຄືອ

ລາຍລະອຽດການລົງທຶນໃນບໍລິສັດໃນເຄືອ ນະວັນທີ 31 ທັນວາ 2025 ແລະ 2024 ມີດັ່ງລຸ່ມນີ້:

ຊື່ບໍລິສັດໃນເຄືອ	ປະເທດທີ່ດຳເນີນທຸລະກິດ	% ຄວາມເປັນເຈົ້າຂອງ 2025 ເປີເຊັນ	ປະເພດທຸລະກິດ	ວິທີຕົ້ນທຶນ 2025 ກີບ
ບໍລິສັດ ລາວດີ ກຣີນ ຈຳກັດຜູ້ດຽວ	ສປປ ລາວ	100%	ປູກໄມ້ອຸດສາຫະກຳ ເຊັ່ນ: ຕົ້ນກະຖິນນາ ລົງ ແລະ ກະຖິນ ເທພາ)	240,422,000,000

ຂ້າງລຸ່ມນີ້ແມ່ນການເຄື່ອນໄຫວການລົງທຶນໃນບໍລິສັດໃນເຄືອ:

	2025 LAK	2024 LAK
ການລົງທຶນທັງໝົດໃນບໍລິສັດໃນເຄືອ	240,422,000,000	240,422,000,000
ຈ່າຍໃນລະຫວ່າງປີ	(13,801,371,177)	(3,965,837,390)
ຈ່າຍສະສົມສຳລັບການລົງທຶນໃນບໍລິສັດໃນເຄືອ	**(24,745,926,658)**	**(10,944,555,481)**
ຈ່າຍໃຫ້ບໍລິສັດໃນເຄືອອື່ນໆ (ບົດອະທິບາຍ 12)	**215,676,073,342**	**229,477,444,519**

ໃນລະຫວ່າງປີສິ້ນສຸດ ວັນທີ 31 ທັນວາ 2025, ບໍລິສັດໄດ້ ເພີ່ມທຶນໃນບໍລິສັດໃນເຄືອ, ຈຳນວນ 13,801,371,177, ໃນນັ້ນມີ ການເພີ່ມທຶນເປັນວັດຖຸຈຳນວນ 6,946,428,161 ກີບ ແລະ ເປັນ ເງິນສົດ ຈຳນວນ 6,854,943,016 ກີບ, ເຊິ່ງເຮັດໃຫ້ຍອດຊຳລະເງິນລົງທຶນໃນບໍລິສັດໃນເຄືອເພີ່ມຂຶ້ນເປັນ 24,745,925,658 ກີບ ໃນທ້າຍປີ 2025. ດັ່ງນັ້ນ, ໜີ້ຄ້າງຊຳລະອື່ນໆໃຫ້ກັບບໍລິສັດ ໃນເຄືອຈຶ່ງຫຼຸດລົງເປັນ 215,676,073,342 ກີບ ໃນປີ 2025.

ໃນລະຫວ່າງປີ 2024, ບໍລິສັດໄດ້ຊຳລະເປັນເງິນສົດເພີ່ມເຕີມເພື່ອການລົງທຶນໃນບໍລິສັດໃນເຄືອ, ຈຳນວນ 3,965,837,390 ກີບ, ເຊິ່ງໄດ້ຖອກເປັນເງິນສົດເຕັມຈຳນວນແລ້ວ.

ອີງຕາມໃບຢັ້ງຢືນການ ອອກຮຸ້ນເລກທີ 00001/ລດກ, ລົງວັນທີ 31 ທັນວາ 2023, ໃນວັນທີດຽວກັນໃນໃບຢັ້ງຢືນການ ອອກຮຸ້ນ ສະບັບນີ້ລະບຸທຶນຈົດທະບຽນທັງໝົດຂອງບໍລິສັດແມ່ນ 240,422,000,000.

ຄວາມລ່າຊ້າໃນການສະໜອງທຶນແມ່ນເນື່ອງມາຈາກຂໍ້ຈຳກັດດ້ານກົດໝາຍທີ່ກຳນົດໂດຍໜ່ວຍງານຫ້ອງການແຂວງໃນພື້ນທີ່ ໂຄງການຕັ້ງຢູ່, ເຊິ່ງສົ່ງຜົນໃຫ້ບໍລິສັດບໍ່ສາມາດ ເລີ່ມດຳເນີນການພັດທະນາໂຄງການໄດ້. ດັ່ງນັ້ນ, ເງິນລົງທຶນສ່ວນທີ່ເຫຼືອຈຶ່ງຍັງບໍ່ ໄດ້ນຳເຂົ້າມາຖອກ.

9. ຊັບສິນຄົງທີ່ມີຕົວຕົນ, ສຸດທິ

	ທີ່ດິນ ກີບ	ອາຄານ ກີບ	ເຄື່ອງຈັກ ແລະ ອຸປະກອນ ກີບ	ຍານຫາຫະນະ ກີບ	ເຟີນີເຈີ ແລະ ເຄື່ອງໃຊ້ຫ້ອງການ ກີບ	ຊັບສິນທີ່ຢູ່ໃນລະຫວ່າງການກໍ່ສ້າງ ແລະ ຕິດຕັ້ງ ກີບ	ລວມ ກີບ
ທ້າຍປີວັນທີ 31 ທັນວາ 2025							
ຍອດຍົກມາຕາມບັນຊີ, ສຸດທິ	6,233,000,900	2,786,144,572	4,760,694,900	2,219,364,422	307,385,358	2,723,821,995	19,030,412,147
ເພີ່ມຂຶ້ນ	(-)	(-)	49,505,813	340,315,315	44,549,974	299,935,160	734,306,262
ສະສາງຕົ້ນທຶນ	(-)	(-)	(-)	(147,899,600)	(-)	(-)	(147,899,600)
ສະສາງຄ່າຫຼຸ້ຍຫ້ຽນສະສົມ	(-)	(-)	(-)	147,899,600	(-)	(-)	147,899,600
ໂອນໄປຄ່າເຍື່ອນລໍຖ້າຕັດຕົ້ນທຶນການປູກຕົ້ນຢີ້ນ້ຳ (ບົດອະທິບາຍ 11)	(-)	(-)	(-)	(-)	(-)	(221,539,871)	(221,539,871)
ໂອນເຂົ້າ/(ອອກ) ໄປອາຄານ	(-)	209,498,622	(-)	(-)	(-)	(209,498,622)	(-)
ໂອນເຂົ້າ/(ອອກ) ໄປເຟີນີເຈີ ແລະ ເຄື່ອງໃຊ້ຫ້ອງການ	(-)	(-)	(-)	(-)	421,172,163	(421,172,163)	(-)
ຄ່າຫລຸ້ຍຫ້ຽນ	(-)	(237,838,205)	(959,576,043)	(593,220,503)	(105,427,796)	(-)	(1,896,062,547)
ມູນຄ່າຍັງເຫຼືອຕາມບັນຊີ, ສຸດທິ	**6,233,000,900**	**2,757,804,989**	**3,850,624,670**	**1,966,459,234**	**667,679,699**	**2,171,546,499**	**17,647,115,991**
ໃນວັນທີ 31 ທັນວາ 2025							
ຕົ້ນທຶນ	6,233,000,900	5,637,311,558	13,140,367,352	10,313,672,903	1,848,383,265	2,171,546,499	39,344,282,477
ຫັກ: ຄ່າຫລຸ້ຍຫ້ຽນສະສົມ	(-)	(2,879,506,569)	(9,289,742,682)	(8,347,213,669)	(1,180,703,566)	(-)	(21,697,166,486)
ມູນຄ່າຍັງເຫຼືອຕາມບັນຊີ, ສຸດທິ	**6,233,000,900**	**2,757,804,989**	**3,850,624,670**	**1,966,459,234**	**667,679,699**	**2,171,546,499**	**17,647,115,991**

ບໍລິສັດໄດ້ນຳເອົາສີ່ໃບຕາດິນຂອງຕົນເລກທີ 362, 473, 427 ແລະ 474 ໄປຄ้ຳປະກັນເງິນກູ້ຢືມຈາກທະນາຄານ, ມູນຄ່າທີ່ດິນທີ່ນຳໄປຄ้ຳປະກັນແມ່ນ 2,712,654,900 ກີບ (ບົດອະທິບາຍ 14).

9. ຊັບສິນຄົງທີ່ມີຕົວຕົນ, ສຸດທິ (ຕໍ່)

	ທີ່ດິນ ກີບ	ອາຄານ ກີບ	ເຄື່ອງຈັກ ແລະ ອຸປະກອນ ກີບ	ຍານພາຫະນະ ກີບ	ເຟີນີເຈີ ແລະ ເຄື່ອງໃຊ້ຫ້ອງການ ກີບ	ຊັບສິນທີ່ຢູ່ໃນລະຫວ່າງການກໍ່ສ້າງ ແລະ ຕິດຕັ້ງ ກີບ	ລວມ ກີບ
ທ້າຍປີວັນທີ 31 ທັນວາ 2024							
ຍອດຍົກມາຕາມບັນຊີ, ສຸດທິ	6,233,000,900	2,556,518,694	5,692,901,411	1,329,522,370	78,486,905	1,792,503,929	17,682,934,209
ເພີ່ມຂຶ້ນ	(-)	(-)	107,492,545	1,612,958,000	291,188,871	2,310,977,098	4,322,616,514
ໂອນໄປຄ່າເຍື່ອນລໍຖ້າຕັດຕົ້ນທຶນການປຸກຕົ້ນປາມ (ບົດອະທິບາຍ 11)	(-)	(-)	(-)	(-)	(-)	(918,500,247)	(918,500,247)
ໂອນເຂົ້າ/(ອອກ) ໄປອາຄານ	(-)	461,158,785	(-)	(-)	(-)	(461,158,785)	(-)
ຄ່າຫລຸ້ຍຫ້ຽນ	(-)	(231,532,907)	(1,039,699,056)	(723,115,948)	(62,290,418)	(-)	(2,056,638,329
ມູນຄ່າຍັງເຫຼືອຕາມບັນຊີ, ສຸດທິ	**6,233,000,900**	**2,786,144,572**	**4,760,694,900**	**2,219,364,422**	**307,385,358**	**2,723,821,995**	**19,030,412,147**
ໃນວັນທີ 31 ທັນວາ 2024							
ຕົ້ນທຶນ	6,233,000,900	5,427,812,936	13,090,861,539	10,121,257,188	1,382,661,128	2,723,821,995	38,979,415,686
ຫັກ: ຄ່າຫລຸ້ຍຫ້ຽນສະສົມ	(-)	(2,641,668,364)	(8,330,166,639)	(7,901,892,766)	(1,075,275,770)	(-)	(19,949,003,539)
ມູນຄ່າຍັງເຫຼືອຕາມບັນຊີ, ສຸດທິ	**6,233,000,900**	**2,786,144,572**	**4,760,694,900**	**2,219,364,422**	**307,385,358**	**2,723,821,995**	**19,030,412,147**

ບໍລິສັດໄດ້ນຳເອົາສີ່ໃບຕາດິນຂອງຕົນເລກທີ 362, 473, 427 ແລະ 474 ໄປຄ้ຳປະກັນເງິນກູ້ຢືມຈາກທະນາຄານ, ມູນຄ່າທີ່ດິນທີ່ນຳໄປຄ้ຳປະກັນແມ່ນ 2,712,654,900 ກີບ (ບົດອະທິບາຍ 14).

10. ເຍື່ອນລໍຖ້າຕັດຕົ້ນທຶນການປູກຕົ້ນປາມ, ສຸດທິ

	2025 ກີບ	2024 ກີບ
ຍອດຍົກມາ	18,014,164,440	18,362,758,040
ເພີ່ມຂຶ້ນ	435,815,245	594,286,195
ຫັກ: ຄ່າຕັດຮອນ	(970,062,538)	(942,879,795)
ຍອດເຫຼືອທ້າຍ ນະວັນທີ 31 ທັນວາ	**17,479,917,147**	**18,014,164,440**
ເຍື່ອນລໍຖ້າຕັດຕົ້ນທຶນການປູກຕົ້ນປາມ	25,101,801,092	24,665,985,847
ຫັກ: ຄ່າຕັດຮອນສະສົມ	(7,621,883,945)	(6,651,821,407)
	17,479,917,147	**18,014,164,440**

11. ເຍື່ອນລໍຖ້າຕັດຕົ້ນທຶນການປູກຕົ້ນ ຢີ້ນ້ຳ

ຕົ້ນທຶນການປູກຕົ້ນຢີ້ນ້ຳລວມມີ ຕົ້ນທຶນໃນການຊື້ ແລະ ຄ່າໃຊ້ຈ່າຍອື່ນໆ ທີ່ກ່ຽວຂ້ອງໂດຍກົງກັບການປູກຕົ້ນຢີ້ນ້ຳເຊັ່ນ: ຄ່າແຮງງານ ແລະ ຄ່າປຸ໋ຍ.

ຂ້າງລຸ່ມນີ້ແມ່ນການເຄື່ອນໄຫວເຍື່ອນລໍຖ້າຕັດຕົ້ນທຶນການປູກຕົ້ນ ຢີ້ນ້ຳ:

	2025 LAK	2024 LAK
ຍອດຍົກມາ	**9,158,137,050**	**1,967,158,504**
ເພີ່ມຂຶ້ນ	11,819,896,900	6,272,478,299
ໂອນເຂົ້າຈາກຊັບສິນຖົງທີ່ມີຕົວຕົນ (ບົດອະທິບາຍທີ 9)	221,539,871	918,500,247
ໂອນອອກໄປຫາບໍລິສັດລູກ[(i)]	(6,946,428,161)	(-)
ສະສາງອອກ[(ii)]	(263,638,200)	(-)
ຍອດເຫຼືອທ້າຍ	**13,989,507,460**	**9,158,137,050**

(i) ສຳລັບປີສິ້ນສຸດວັນທີ 31 ທັນວາ 2025, ບໍລິສັດໄດ້ໂອນຄ່າໃຊ້ຈ່າຍເຍື່ອນລໍຖ້າຕັດຕົ້ນທຶນການປູກຕົ້ນໄມ້ທີ່ກ່ຽວຂ້ອງກັບຕົ້ນຢີ້ນ້ຳ ໄປໃຫ້ບໍລິສັດໃນເຄືອ. ວັດຖຸປະສົງຂອງການໂອນແມ່ນເພື່ອເພີ່ມທຶນຈົດທະບຽນໃນຮູບແບບວັດຖຸ. ຈຳນວນເງິນທີ່ໂອນທັງໝົດແມ່ນ 6,946,428,161 ກີບ (ບົດອະທິບາຍ 12).

(ii) ໃນລະຫວ່າງປີສິ້ນສຸດວັນທີ 31 ທັນວາ 2025 ບໍລິສັດໄດ້ສະສາງ ຕົ້ນຢີ້ນ້ຳທີ່ຕາຍອອກເປັນຄ່າໃຊ້ຈ່າຍ ແລະ ຄ່າໃຊ້ຈ່າຍດັ່ງກ່າວໄດ້ຖືກ ບັນທຶກເປັນຄ່າໃຊ້ຈ່າຍໃນໃບລາຍງານຜົນໄດ້ຮັບ.

12. ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ

	2025 ກີບ	2024 ກີບ
ໜີ້ຕ້ອງສົ່ງການຄ້າ[(i)]	29,043,962,345	9,398,887,632
ໜີ້ຕ້ອງສົ່ງອື່ນໆ[(ii)]	1,428,548,858	1,205,856,621
ໜີ້ຕ້ອງສົ່ງອື່ນໆ-ບໍລິສັດໃນເຄືອ[(iii)]	215,676,073,342	229,477,444,519
	246,148,584,545	**240,082,188,772**

(i) ໜີ້ຕ້ອງການຄ້າສົ່ງສ່ວນໃຫຍ່ປະກອບມີ ຕົ້ນຢີ້ຫ້ໍ, ຄ່ານ້ຳມັນປາມດິບ ແລະ ຄ້າງຈ່າຍຄ່ານ້ຳມັນພືດ ຈາກຕ່າງປະເທດໃນລະຫວ່າງປີ.

(ii) ໜີ້ຕ້ອງສົ່ງອື່ນໆ ສ່ວນໃຫຍ່ປະກອບມີ ຄ່າເຄື່ອງໜີບໝາກປາມ, ຄ່າທີ່ປຶກສາຊ່ຽວຊານ ແລະ ເງິນເດືອນຄ້າງຈ່າຍ.

(iii) ສະແດງເຖິງ ການທີ່ຍັງບໍ່ໄດ້ຈ່າຍຄ່າຮຸ້ນຕ່ຳບໍລິສັດໃນເຄືອ. ສຳລັບປີສິ້ນສຸດວັນທີ 31 ເດືອນທັນວາ 2025, ບໍລິສັດໄດ້ຖອກເພີ່ມເງິນລົງໃນບໍລິສັດໃນເຄືອ, ຈຳນວນ 13,801,371,177 ກີບ (ໃນນັ້ນແຍກເປັນມູນຄ່າທີ່ຖອກແບບອັດຖແມ່ນ 6,946,428,161 ກີບ ແລະ ແບບເງິນສົດແມ່ນ 6,854,943,016 ກີບ)

13. ໜີ້ສິນໝຸນວຽນອື່ນໆ

	2025 ກີບ	2024 ກີບ
ເງິນເດືອນຄ້າງຈ່າຍ	56,042,744	49,757,316
ຮັບເງິນລ່ວງໜ້າຈາກລູກຄ້າ[(i)]	194,934,000	(-)
	250,976,744	**49,757,316**

(i) ຮັບເງິນລ່ວງໜ້າຈາກລູກຄ້າ ສະແດງເຖິງ ເງິນມັດຈຳທີ່ບໍລິສັດໄດ້ຮັບໃນລະຫວ່າງປີ ສຳລັບຜະລິດຕະພັນ ເສດປາມ ໂດຍທີ່ຍັງບໍ່ໄດ້ມີການສົ່ງມອບສິນຄ້າ ນະວັນທີລາຍງານການເງິນ.

14. ເງິນກູ້ຍືມໄລຍະສັ້ນ

ໃນວັນທີ 31 ທັນວາ 2025, ບໍລິສັດຍັງມີຍອດຄົງເຫຼືອຂອງເງິນກູ້ຍືມໄລຍະສັ້ນກັບທະນາຄານໄຊ່ງ່ອນ-ຮ່າໂນ້ຍລາວ ຈຳກັດ (SHB).

ໃນວັນທີ 31 ທັນວາ 2025, ຍອດເງິນກູ້ທີ່ຍັງຄົງຄ້າງໄດສະແດງຢູ່ໃນຕາຕະລາງລຸ່ມນີ້:

ຍອດຍົກມາເງິນກູ້ຍືມ (ກີບ)	ເງິນກູ້ເພີ່ມ (ກີບ)	ຊຳລະຄືນ (ກີບ)	ຍອດເຫຼືອ (ກີບ)	ໄລຍະເວລາການກູ້ຍືມ ແລະ ກຳນົດການຈ່າຍ ຄືນ	ອັດຕາ ດອກເບ້ຍຕໍ່ປີ	ຫຼັກຊັບຄ้ำປะກັນ
2,000,000,000	4,000,000,000	(4,000,000,000)	2,000,000,000	ເງິນຕົ້ນ 12 ເດືອນ ແລະ ດອກເບ ຍທີ່ຕ້ອງຈ່າຍແມ່ນຕໍ່ ເດືອນ,	12,7%	1. ດິນ ເລກທີ 474, ມູນຄ່າ 971,520,000 ກີບ 2. ດິນ ເລກທີ 473, ມູນຄ່າ 1,140,301,400 ກີບ 3. ດິນ ເລກທີ 362 ມູນຄ່າ 325,983,500 ກີບ 4. ດິນ ເລກທີ 427 ມູນຄ່າ 274,850,000 ກີບ

15. ໜີ້ຕ້ອງສິ່ງຈາກການເຊົ່າຊື້

	2025 ກີບ	2024 ກີບ
ໝູນວຽນ		
ໜີ້ຕ້ອງສິ່ງຈາກການເຊົ່າຊື້ໝູນວຽນ	910,475,125	840,316,500
	910,475,125	**840,316,500**

ບໍລິສັດໄດ້ເຊັນສັນຍາເຊົ່າຊື້ສິນເຊື່ອທີ່ເປັນສະກຸນເງິນບາດ ແລະ ກີບສຳລັບການເຊົ່າຊື້ພາຫະນະ.

16. ໜີ້ສິນບໍ່ໝູນວຽນອື່ນໆ

ອີງຕາມຂໍ້ຕົກລົງສຳລັບການ ປຸກຕົ້ນຢີນ້ຳ ສຳລັບໂຄງການ ຄາບອນອົກຊິເຈນ ລົງວັນທີ 16 ຕຸລາ 2023, ລະຫວ່າງ FOUR PRIDE PTE. LTD ຫຼື (FP) ແລະ ບໍລິສັດ ລາວອາໂກຣເທັກ ມະຫາຊົນ ຫຼື (ລອທ) ແມ່ນໄດ້ລະບຸລາຍລະອຽດໄລຍະເວລາ ແລະ ເງື່ອນໄຂດັ່ງນີ້:

- ໄລຍະເວລາຂອງໂຄງການ: 4 ປີນັບແຕ່ວັນທີ່ໄດ້ເລີ່ມຕົ້ນການປຸກ ເຊິ່ງແມ່ນເດືອນພະຈິກ 2023.
- ສະຖານທີ່ປຸກ: ຢຸ່ນະຄອນຫຼວງວຽງຈັນ ແລະ ແຂວງສາລະວັນ, ສປປ ລາວ
- ເນື້ອທີ່ປຸກ: 300 ເຮັກຕາ
- ຈຳນວນຕົ້ນຢີນ້ຳຕໍ່ເຮັກຕາ: 160 ຫາ 220 ຕົ້ນຕໍ່ເຮັກຕາເມື່ອທີການເຫັນດີກັນລະຫວ່າງ ສອງຝ່າຍ.
- ຄ່າບໍລິການປຸກຕົ້ນຢີນ້ຳ : 2,946.20 ໂດລາ ຕໍ່ເຮັກຕາ ສຳລັບໄລຍະເວລາ 4 ປີ, ມູນຄ່າທັງໝົດ 883,859.95 ໂດລາ ຫຼື ເທົ່າກັບ 18,223,424,449 ກີບ.

ຕະຫຼອດໄລຍະ 4 ປີ ພາຍໃຕ້ຂໍ້ຕົກລົງສະບັບນີ້, ບໍລິສັດລາອາໂກເທັກ ຕ້ອງສະໜອງ ແລະ ຮັບຜິດຊອບໃນການບໍລິການທີ່ຈຳເປັນທັງໝົດທີ່ກ່ຽວຂ້ອງກັບການປຸກຕົ້ນຢີນ້ຳ, ແຕ່ບໍ່ຈຳກັດສະເພາະ ການສ້າງພື້ນທີ່ປຸກ, ລະບົບຊົນລະປະທານ, ການສະໜອງ ແລະ ກວດກາເບ້ຍໄມ້, ການປຸກຕົ້ນໄມ້, ການຄຸ້ມຄອງສອນປຸກ, ການຕັດແຕ່ງກິ່ງໄມ້, ການເກັບກ່ຽວ, ການບຳລຸງຮັກສາການປຸກ, ການບໍລິຫານແຮງງານ ແລະ ກິດຈະກຳອື່ນໆທີ່ກ່ຽວຂ້ອງ. ການກະກຽມອຸປະກອນ, ອຸປະກອນ, ເຄື່ອງມື, ເຄື່ອງມື ຫຼື ອື່ນໆທີ່ຈຳເປັນສຳລັບການສະໜອງການບໍລິການແມ່ນ ຮັບຜິດຊອບຂອງ ລອທ.

ສຳລັບປີສິ້ນສຸດວັນທີ 31 ທັນວາ 2025 ບໍ່ມີການປ່ຽນແປງເງື່ອນໄຂ ຫຼື ຂໍ້ກຳນົດໃດໆ ຕາມທີ່ໄດ້ກ່າວໄວ້ຂ້າງເທິງ. ບໍລິສັດໄດ້ຮັບຮູ້ຍອດຖົງເຫຼືອຂ້າງເທິງເປັນເງິນຮັບລ່ວງໜ້າຈາກ FP ເຊິ່ງສະແດງໃນໜີ້ສິນບໍ່ໝູນວຽນອື່ນໆໃນໃບລາຍງານຖານະການເງິນ ແລະ ຍອດດັ່ງກ່າວຈະຖືກສະສາງອອກເມື່ອມີລາຍຮັບຈາກໂຄງການ ຄາບອນອົກຊິເຈນ ຫຼັງຈາກ 4 ປີ.

17. ທຶນຕົ້ນເອງ ຂອງຜູ້ຖືຮຸ້ນ

	ຈຳນວນຮຸ້ນ ຮຸ້ນ	ທຶນຈົດທະບຽນ ກີບ	ສ່ວນເກີນ ກີບ	ລວມ ກີບ
ວັນທີ 1 ມັງກອນ 2024	100,000,000	50,000,000,000	3,269,466,406	53,269,466,406
ໃນວັນທີ 31 ທັນວາ 2024	**100,000,000**	**50,000,000,000**	**3,269,466,406**	**53,269,466,406**
ວັນທີ 1 ມັງກອນ 2025	100,000,000	50,000,000,000	3,269,466,406	53,269,466,406
ໃນວັນທີ 31 ທັນວາ 2025	**100,000,000**	**50,000,000,000**	**3,269,466,406**	**53,269,466,406**

ໃນວັນທີ 31 ທັນວາ 2025, ຈຳນວນຮຸ້ນສາມັນທັງໝົດແມ່ນມີ 100,000,000 ຮຸ້ນ ເຊິ່ງມີມູນຄ່າໜ້າໃບຮຸ້ນ ຮຸ້ນລະ 500 ກີບ (2024: 100,000,000 ຮຸ້ນ ເຊິ່ງມີມູນຄ່າໜ້າໃບຮຸ້ນ ຮຸ້ນລະ 500 ກີບ). ຮຸ້ນສາມັນທັງໝົດທີ່ໄດ້ຈົດເຂົ້າເປັນຕົ້ນທຶນໄດ້ຖືກຊຳລະແລ້ວເຕັມຈຳນວນ.

18. ຄັງສະສົມຕາມລະບຽບການ

	2025 ກີບ	2024 ກີບ
ວັນທີ 1 ມັງກອນ	932,158,245	932,158,245
ວັນທີ 31 ທັນວາ	**932,158,245**	**932,158,245**

ຄັງສະສົມຕາມລະບຽບການ ແມ່ນສ້າງຂຶ້ນຕາມກົດໝາຍວິສາຫະກິດຂອງ ສປປ ລາວ ເຊິ່ງກຳນົດໃຫ້ບໍລິສັດຕັ້ງຄັງສະສົມຕາມລະບຽບການ ຢ່າງຕ່ຳ 10% ຂອງກຳໄລສຸດທິໃນປີ ຈົນຄັງສະສົມຕາມລະບຽບການຄິດ 50% ຂອງມູນຄ່າທຶນຈົດທະບຽນ.

19. ລາຍຮັບຈາກການຂາຍ

	2025 ກີບ	2024 ກີບ
ລາຍຮັບຈາກການຂາຍ - ການຄ້າ[(i)]	36,897,727,177	37,939,829,555
ລາຍຮັບຈາກການຂາຍ - ເບ້ຍຕົ້ນປາມ	172,150,000	567,355,040
ລາຍຮັບຈາກການຂາຍ - ປຸຍ	691,426,000	1,303,521,000
	37,761,303,177	**39,810,705,595**

(i) ລາຍຮັບຈາກການຂາຍ - ການຄ້າ ສ່ວນຫຼາຍແມ່ນຈາກການຂາຍ ນ້ຳມັນປາມດິບ, ນ້ຳມັນກາຊອນ B5 ແລະ ນ້ຳມັນພືດ.

20. ລາຍຈ່າຍຈຳແນກຕາມລັກສະນະເນື້ອໃນ

ລາຍຈ່າຍດັ່ງລຸ່ມນີ້ແມ່ນເປັນລາຍຈ່າຍຫຼັກໆທີ່ເກີດຂຶ້ນພາຍໃນປີ ເຊິ່ງລວມຢູ່ໃນໃບລາຍງານຜົນໄດ້ຮັບ

	2025 ກີບ	2024 ກີບ
ຕົ້ນທຶນໃນການຊື້ສິນຄ້າເພື່ອຂາຍ	31,847,103,059	31,755,152,281
ເງິນເດືອນ/ລາຍຈ່າຍກ່ຽວຂ້ອງກັບເງິນເດືອນ	3,493,832,075	3,460,008,269
ລາຍຈ່າຍບໍລິຫານອື່ນໆ	4,108,787,524	5,270,885,553
ຄ່າຫຼ້ຍຫ້ຽນຊັບສິນບັດຖິ ທີ່ມີຕົວຕົນ ແລະ ຄ່າຕັດຣອນ (ເບິ່ງ ອະທິບາຍຂໍ້ 9 ແລະ 10)	2,866,125,085	2,999,518,124
ຄ່າທຳນຽມທີ່ປຶກສາ	333,457,640	606,066,000

21. ອາກອນກຳໄລ

ອີງຕາມກົດໝາຍສ່ວຍສາອາກອນຂອງ ສປປ ລາວ ບໍລິສັດ ມີພັນທະໃນການຊຳລະອາກອນລາຍໄດ້ ໃນຮູບແບບຂອງອາກອນກຳໄລ ໃນອັດຕາ 20% ຂອງກຳໄລທາງອາກອນ.

ສຳລັບປີສິ້ນສຸດວັນທີ 31 ທັນວາ 2025 ບໍລິສັດບໍ່ໄດ້ຮັບຮູ້ຄ່າໃຊ້ຈ່າຍອາກອນລາຍໄດ້ໃນໃບລາຍງານຜົນໄດ້ຮັບ ເນື່ອງຈາກການຂາດທຶນທາງອາກອນຈາກການດຳເນີນງານ (2024: ບໍລິສັດ ບໍ່ໄດ້ຮັບຮູ້ອາກອນກຳໄລເຂົ້າໃນໃບລາຍງານຜົນໄດ້ຮັບເນື່ອງຈາກຂາດທຶນທາງອາກອນຈາກການດຳເນີນງານ).

22. (ຂາດທຶນ)/ກຳໄລ ຕໍ່ຮຸ້ນ

(ຂາດທຶນ)/ກຳໄລ ພື້ນຖານຕໍ່ຮຸ້ນແມ່ນຖືກຄິດໄລ່ຕາມອັດຕາສ່ວນຂອງ ກຳໄລ/(ຂາດທຶນ) ຕໍ່ຜູ້ຖືຫຸ້ນໂດຍຄິດໄລ່ແບບອັດຕາທ່ວງນ້ຳໜັກສະເລ່ຍຂອງ ຈຳນວນຮຸ້ນສາມັນ

	2025 ກີບ	2024 ກີບ
(ຂາດທຶນ)/ກຳໄລ ສຳລັບຜູ້ຖືຮຸ້ນສາມັນ (ກີບ)	(3,501,921,645)	59,741,058
ອັດຕາທ່ວງນ້ຳໜັກສະເລ່ຍຂອງຈຳນວນຮຸ້ນສາມັນ ຄົງເຫຼືອ (ຮຸ້ນ)	100,000,000	100,000,000
(ຂາດທຶນ)/ກຳໄລ ພື້ນຖານຕໍ່ຮຸ້ນ (ກີບຕໍ່ຮຸ້ນ)	(35.02)	0.59

23. ພາກສ່ວນທີ່ກ່ຽວຂ້ອງ

ວິສາຫະກິດ ແລະ ບຸກຄົນ ທີ່ກ່ຽວຂ້ອງທາງກົງ ຫຼື ທາງອ້ອມ ຜ່ານ ໜຶ່ງ ຫຼື ຫຼາຍກຸ່ມ ຄວບຄຸມ ຫຼື ຖືກຄວບຄຸມໂດຍບໍລິສັດ ຫຼື ພາຍໃຕ້ການຄວບຄຸມທົ່ວໄປຂອງບໍລິສັດ ລວມທັງບໍລິສັດ ທີ່ເຮັດໜ້າທີ່ຖືຮຸ້ນ ບໍລິສັດ ຍ່ອຍ ແລະ ບໍລິສັດ ທີ່ກ່ຽວຂ້ອງກັບບໍລິສັດຍ່ອຍ ຖືເປັນບໍລິສັດໃນກຸ່ມດຽວກັນ ບຸກຄົນທີ່ເປັນເຈົ້າຂອງທາງກົງ ຫຼື ທາງອ້ອມ ທີ່ມີສ່ວນໄດ້ເສຍໃນບໍລິສັດ ແລະ ມີອິດທິພົນຫຼາຍຕໍ່ກັບ ບໍລິສັດ. ຜູ້ບໍລິຫານຫຼັກ ລວມມີ ຜູ້ອຳນວຍການ ແລະ ພະນັກງານຂອງບໍລິສັດ ແລະ ສະມາຊິກໃກ້ຊິດໃນຄອບຄົວຂອງບຸກຄົນເຫຼົ່ານີ້ ແລະ ບໍລິສັດໃນກຸ່ມ ກັບບຸກຄົນທີ່ກ່ຽວຂ້ອງ ເຫຼົ່ານີ້ແມ່ນຖືເປັນພາກສ່ວນທີ່ກ່ຽວຂ້ອງ.

ໃນການພິຈາລະນາ ຄວາມເປັນໄປໄດ້ໃນສາຍສຳພັນຂອງພາກສ່ວນທີ່ກ່ຽວຂ້ອງແມ່ນພິຈາລະນາເຖິງ ສາຍສຳພັນທີ່ແທ້ຈິງ. ບໍ່ໄດ້ພິຈາລະນາພຽງແຕ່ໃນຮູບແບບຂອງກົດໝາຍເທົ່ານັ້ນ.

ໃນລະຫວ່າງປີບໍ່ມີຍອດຄົງຄ້າງໃດໆທີ່ເກີດຂຶ້ນຈາກການຊື້ສິນຄ້າ ແລະ ການເຮັດທຸລະກຳອື່ນໆ.

ລາຍການທີ່ສຳຄັນລຸ່ມນີ້ແມ່ນມີການພົວພັນກັບພາກສ່ວນທີ່ກ່ຽວຂ້ອງ:

23. ພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

23.1 ຍອດຄ້າງຊຳລະຂອງທຸລະກຳທີ່ກ່ຽວຂ້ອງໃນວັນທີ 31 ທັນວາ 2025 ສະຫຼຸບໄດ້ດັ່ງລຸ່ມນີ້:

	2025 ກີບ	2024 ກີບ
ໜີ້ຕ້ອງສົ່ງໃຫ້:		
ບໍລິສັດໃນເຄືອ	215,676,073,342	229,477,444,519

24. ພາລະຜູກພັນ

ໃນວັນທີ 31 ທັນວາ, ບໍລິສັດ ມີພາລະຜູກພັນສັນຍາເຊົ່າເພື່ອດຳເນີນງານທີ່ສຳຄັນ ສຳລັບການສຳປະທານທີ່ດິນ ຢູ່ແຂວງ ວຽງຈັນ ແລະ ແຂວງ ສາລະວັນ ເປັນເວລາ 30 ປີ ແລະ ສັນຍາເຊົ່າເຮືອນ 10 ປີ.

	2025 ກີບ	2024 ກີບ
ບໍ່ເກີນ 1 ປີ	1,120,015,231	59,743,256
ເກີນ 1 ປີ ແລະ ບໍ່ເກີນ 5 ປີ	769,854,808	306,263,612
ເກີນ 5 ປີ	952,381,557	2,557,795,700
	2,842,251,596	**2,923,802,568**

25. ເຫດການທີ່ເກີດຂຶ້ນຫລັງມື້ລາຍງານ

ບໍ່ມີເຫດການທີ່ເປັນສາລະສຳຄັນເກີດຂຶ້ນຫລັງຈາກວັນທີ ໃນໃບດຸ່ນດ່ຽງ ທີ່ຮຽກຮ້ອງໃຫ້ມີການດັດແກ້ ຫຼື ເປີດເຜີຍໃນເອກະສານລາຍງານການເງິນ ສຳລັບປີສິ້ນສຸດ 31 ທັນວາ 2025.

ບໍລິສັດ ລາວອາໂກຣເທັກ ມະຫາຊົນ
Lao Agro Tech Public Company
ບ້ານ ໜອງຄັນຄູ, ເມືອງ ນາຊາຍທອງ, ນະຄອນຫຼວງວຽງຈັນ. ໂທລະສັບ: 030 9882809, ແຟັກ:(856-21)
BAN NONGKUNKU, NAXAYTHONG DISTRICT, VIENTIANE CAPITAL. TEL: 030 9882809, FAX: (856-21)

ເອກະສານປະກອບລະຫັດ 03

ແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2026

ລາຍການ	ຕົວຈິງ 2024		ຕົວຈິງ 2025		2025 ງົບປະມານ		2026 ງົບປະມານ	
	ລດກ	ລອຫ	ລດກ	ລອຫ	ລດກ	ລອຫ	ລດກ	ລອຫ
ປະລິມານການຂາຍ								
ນ້ຳມັນປາມດິບ (ໂຕນ)	-	2,246	-	1,655	-	3,000	-	3,000
ກາກປາມ (ໂຕນ)	-	424	-	661	-	1,500	-	1,000
ປຸ່ຍ (ໂຕນ)	-	29	-	44	-	240	-	200
ຕົ້ນກລ້າປາມ (ຕົ້ນ)	-	29,872	-	2,859	-	50,000	-	25,000
ນ້ຳມັນກະຊວນຊີ້ອະພາບ (ລິດ)	-	11,995	-	-	-	-	-	-
ລາຄາຂາຍ	-	-	-	-	-	-	-	-
ນ້ຳມັນປາມດິບ (ກີບ/ກິໂລກຣາມ)	-	16,569	-	22,217	-	20,000	-	23,000
ກາກປາມ (ກີບ/ກິໂລກຣາມ)	-	3,338	-	3,677	-	4,000	-	3,500
ປຸ່ຍ (ກີບ/ກິໂລກຣາມ)	-	14,430	-	16,131	-	15,000	-	15,000
ຕົ້ນກລ້າປາມ (ກີບ/ຕົ້ນ)	-	31,974	-	60,171	-	35,000	-	60,000
ນ້ຳມັນກະຊວນຊີ້ອະພາບ (ກີບ/ລິດ)	-	16,609	-	-	-	-	-	-
ລາຍຮັບ (ລ້ານກີບ)								
ນ້ຳມັນປາມດິບ	-	37,211	-	36,765	-	60,000	-	69,000
ກາກປາມ	-	1,416	-	2,431	-	6,000	-	3,500
ປຸ່ຍ	-	421	-	703	-	3,600	-	3,000
ຕົ້ນກລ້າປາມ	-	955	-	172	-	1,750	-	1,500
ນ້ຳມັນກະຊວນຊີ້ອະພາບ	-	199	-	-	-	-	-	-
ອື່ນໆ	-	354	-	-	-	-	-	-
ລວມ	-	40,556	-	40,071	-	71,350	-	77,000
ກຳໄລລວມ (ລ້ານກີບ)								
ຜະລິດຕະພັນທັ້ງໝົດ	(1,432)	(44,062)	-	-	**(1,500)**	(63,910)	(1,500)	(70,457)
ຄ່າໃຊ້ຈ່າຍອາກອນລາຍໄດ້		-	-	-	**0**	(1,488)	0	(1,309)
ກຳໄລສຸດທິ (ລ້ານກີບ)	(1,432)	(3,506)	-	**40,071**	**(1,500)**	**5,952**	**(1,500)**	5,235
% ກຳໄລສຸດທິ		(0)		**100%**		**6%**		**5%**

ບໍລິສັດຈະສືບຕໍ່ແຜນດຳເນີນທຸກລະກິດ

- ແຜນການຂາຍນ້ຳມັນປາມດິບ CPO: ບໍລິສັດຄາດຄະເນການຂາຍໂດຍອີງໃສ່ການຜະລິດຂອງບໍລິສັດ. ບວກກັບຄວາມຕ້ອງການຂອງຜູ້ບໍລິໂພກ ບໍລິສັດ ມີນະໂຍບາຍຂະຫຍາຍຖານລູກຄ້າໃນປີ 2026.
- ແຜນການຂາຍປາມ: ບໍລິສັດຄາດຄະເນການຂາຍໂດຍອີງໃສ່ຄວາມຕ້ອງການຊື້ຂອງຜູ້ບໍລິໂພກໃນປະຈຸບັນ. ບໍລິສັດ ມີນະໂຍບາຍຂະຫຍາຍຖານລູກຄ້າໃນປີ 2026.
- ແຜນການຂາຍປຸ໋ຍ ໃນປີ 2026 ບໍລິສັດໄດ້ສົ່ງເສີມຊາວກະສິກອນ (ລູກສອນບໍລິສັດ ແລະ ສອນນອກບໍລິສັດ) ເພື່ອໃສ່ປຸ໋ຍປາມຕື່ມ.
- ແຜນການຂາຍເບ້ຍປາມ: ບໍລິສັດໄດ້ວາງແຜນການເພື່ອຂໍການຢັ້ງຢືນແນວພັນປາມລາວວຽງ. ເພື່ອສົ່ງອອກ ແລະ ຄາດຄະເນການຂາຍຕາມປະລິມານຂອງບໍລິສັດ ມັນຈະຖືກຜະລິດໃນປີ 2026.
- ແຜນການຂາຍນ້ຳມັນເຊື້ອໄຟຂອງບໍລິສັດຈະເຮັດປຶກສາຫາລືແລະນຳສະເໜີຕໍ່ກະຊວງອຸດສາຫະກຳ ແລະ ການຄ້າ. ເພື່ອຮ້ອງຂໍໂຄຕ້ານຳເຂົ້ານ້ຳມັນ

ບໍລິສັດ ລາວອາໂກຣເທັກ ມະຫາຊົນ
Lao Agro Tech Public Company
ບ້ານ ໜອງຄັນຄູ, ເມືອງ ນາຊາຍທອງ, ນະຄອນຫຼວງວຽງຈັນ. ໂທລະສັບ: 030 9882809, ແຟັກ:(856-21)
BAN NONGKUNKU, NAXAYTHONG DISTRICT, VIENTIANE CAPITAL. TEL: 030 9882809, FAX: (856-21)

ແຜນທີ່ຈັດກອງປະຊຸມ

ບໍລິສັດ ຕະຫຼາດຫຼັກຊັບລາວ ຈຳກັດ

ບ້ານ:ໂພນທັນເໜືອ, ຖະໜົນ: T4, ເມືອງ: ໄຊເສດຖາ

ນະຄອນຫຼວງວຽງຈັນ, ສປປ ລາວ

